# ຄຳສະເໜີແນະທົ່ວໄປ ທີ່ຮັບຮອງໂດຍຄະນະກຳມະການ
# ລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ

***ມາດຕາ 21*** ວັກ 1 ຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ລະບຸວ່າ ຄະນະກຳມະການສາມາດໃຫ້ຄຳແນະນຳ ແລະ ຄຳສະເໜີທົ່ວໄປໄດ້ບົນພື້ນຖານ ຂອງການກວດການບົດລາຍງານ ແລະ ຂໍ້ມູນທີ່ໄດ້ຮັບຈາກພາກລັດ, ຄຳແນະນຳ ແລະ ຄຳສະເໜີທົ່ວໄປດັ່ງກ່າວຖືເປັນສ່ວນໜຶ່ງຂອງບົດລາຍງານຂອງຄະນະກຳມະການທີ່ຮວມເອົາຄວາມເຫັນຈາກລັດໄວ້ນຳ (ຖ້າມີ) ຈົນຮອດເດືອນ ເມສາ ປີ ຄ.ສ. 2001.

## GR1
## ຂໍ້ສະເໜີແນະທົ່ວໄປ ລຳດັບທີ່ 1
## ການລາຍງານໂດຍ ລັດພາຄີ
ສະໄໝປະຊຸມທີ່ຫ້າ (1986)

ລາຍງານສະບັບທຳອິດຊຶ່ງຕ້ອງເຮັດສິ່ງຕາມທີ່ລະບຸໃນ ມາດຕາ18 ຂອງສົນທິສັນຍານັ້ນຄວນເປັນລາຍງານທີ່ຄອບຄຸມສະຖານະການນັບເຖິງໄລຍະວັນທີ່ສົ່ງລາຍງານ ຫລັງຈາກນັ້ນຄວນມີການສົ່ງບົດລາຍງານສະບັບຕໍ່ໄປຢ່າງນ້ອຍທຸກໆ ສີ່ປີ ຫລັງຈາກທີ່ຄົບກຳໜົດສົ່ງລາຍງານສະບັບທຳອິດ ແລະ ຄວນເວົ້າເຖິງອຸປະສັກໃນການປະຕິບັດສົນທິສັນຍາ ຢ່າງເຕັມຮູບແບບລວມທັງມາດຕະການ ໃນການແກ້ໄຂອຸປະສັກເຫລົ່ານັ້ນ.

## GR2
## ຂໍ້ສະເໜີແນະທົ່ວໄປ ລຳດັບທີ່ 2
## ການລາຍງານໂດຍລັດພາຄີ
ກອງປະຊຸມສະໄໝ ທີ່ຫົກ (1987)

*ຄະນະກຳມະການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ,*

ໂດຍຄຳນຶງເຖິງວ່າຄະນະກຳມະການຕ້ອງ ປະສົບບັນຫາໃນການເຮັດວຽກເນື່ອງຈາກລາຍງານສະບັບທຳອິດທີ່ລັດພາຄີ ຈັດການຕາມມາດຕາ 18 ຂອງສົນທິສັນຍາ ບໍ່ໄດ້ສະທ້ອນຂໍ້ມູນຕາມທີ່ປາກົດໃນລັດພາຄີ ນັ້ນໆ ຢ່າງພຽງພໍຕາມແນວປະຕິບັດ.

*ສະເໜີເພີ່ມເຕີມວ່າ:*

(ກ). ໃນການຕຽມລາຍງານຕາມ ມາດຕາ 18 ສົນທິສັນຍາ ລັດພາຄີຄວນປະຕິບັດຕາມແນວທາງການຈັດຕັ້ງປະຕິບັດທົ່ວໄປ ທີ່ໄດ້ຮັບການຮັບຮອງ ໃນເດືອນ ສິງຫາ ຄສ 1983 ( CEDAW/C7) ວ່າດ້ວຍຮູບແບບເນື້ອໃນ ແລະ ກຳນົດວັນທີ່ຂອງການລາຍງານ.

(ຂ). ລັດພາຄີຄວນປະຕິບັດຕາມ ຂໍ້ສະເໜີເພີ່ມເຕີມທົ່ວໄປ ທີ່ໄດ້ຮັບການຮັບຮອງໃນປີ ຄສ 1986 ຕາມເງື່ອນໄຂຕໍ່ໄປນີ້: " ລາຍງານສະບັບທຳອິດ ຊຶ່ງຕ້ອງໄດ້ການສົ່ງຕາມມາດຕາ 18 ຂອງສົນທິສັນຍານັ້ນ ຄວນຄວບຄຸມສະຖານະການຈົນເຖິງມື້ທີ່ສົ່ງລາຍງານ ຫລັງຈາກນັ້ນ ຄວນມີການສົ່ງລາຍງານ ສະບັບຕໍ່ໄປຢ່າງໜ້ອຍທຸກໆ ສີ່ປີ ຫລັງຈາກທີ່ຄົບກຳໜົດສົ່ງລາຍງານສະບັບທຳອິດ ແລະ ຄວນຈະກ່າວເຖິງອຸປະສັກໃນການປະຕິບັດຕາມອະນຸສັນຍາຢ່າງເຕັມຮູບແບບ ລວມທັງມາດຕະການໃນການແກ້ໄຂອຸປະສັກເຫລົ່ານັ້ນ.

(ຄ). ຂໍ້ມູນເພີ່ມເຕີມຈາກການລາຍງານຂອງລັດພາຄີ ຄວນໄດ້ຮັບການຈັດສົ່ງໄປຫາກອງເລຂານຸການຢ່າງນ້ອຍ ສາມເດືອນກ່ອນກຳໜົດການປະຊຸມພິຈາລະນາລາຍງານສະບັບນັ້ນໆ.

## GR3
## ຂໍ້ສະເໜີແນະທົ່ວໄປ ລຳດັບທີ່ 3
## ການສຶກສາ ແລະ ການໂຄສະນາໃຫ້ຂໍ້ມູນແກ່ສາທາລະນະ
## ກອງປະຊຸມສະໄໝທີ່ ຫົກ (1987)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍພິຈາລະນາແຕ່ປີ ຄສ 1983ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ ໄດ້ພິຈາລະນາລາຍງານຂອງລັດພາຄີໄປແລ້ວ ຈຳນວນ 34 ສະບັບ;

ໂດຍພິຈາລະນາຕໍ່ໄປອີກວ່າ ເຖິງແມ່ນວ່າລາຍງານເຫລົ່ານີ້ ຈະມາຈາກລັດພາຄີທີ່ມີລະດັບການພັດທະນາທີ່ແຕກຕ່າງກັນ ແຕ່ກັບປາກົດສະພາບການທີ່ສະແດງວ່າມີຮູບພາບທີ່ຕາຍຕົວ ກ່ຽວກັບແມ່ຍິງຢູ່ໃນລະດັບຕ່າງໆກັນໄປຕາມປັດໄຈທາງສັງຄົມ, ວັດທະນະທຳ ມີຜົນເຮັດໃຫ້ການຈະແນກບົນພື້ນຖານທາງເພດຍັງຄົງສືບຕໍ່ຢູ່ ແລະ ເປັນອຸປະສັກຕໍ່ການປະຕິບັດຕາມ ມາດຕາ 5 ຂອງ ສົນທິສັນຍາ ຊຶ່ງໄດ້ເໜັ້ນໜັກໃຫ້ລັດພາຄີ ຈັດໂຄງການຕ່າງໆ ດ້ານການສຶກສາ ແລະ ໃຫ້ຂໍ້ມູນແກ່ສາທາລະນະຢ່າງມີປະ

ສິດທິພົນຂຶ້ນຊຶ່ງຈະຊ່ວຍລົບລ້າງອຸດົມຄະຕິ ແລະ ວິທີປະຕິບັດໃນປັດຈຸບັນທີ່ເປັນອຸປະສັກຕໍ່ການບັນລຸຜົນໃນທາງປະຕິບັດຂອງຫລັກການຄວາມສະເໝີພາບໃນສັງຄົມຂອງແມ່ຍິງຢ່າງເຕັມຮູບແບບ.

## GR4
## ຂໍ້ສະເໜີແນະທົ່ວໄປ ລຳດັບ 4
## ຂໍ້ສະຫງວນ
## ກອງປະຊຸມສະໄໝທີ່ ຫົກ (1987)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍທີ່ໄດ້ກວດສອບບົດລາຍງານຂອງລັດພາຄີ ໃນລະຫວ່າງສະໄໝປະຊຸມຕ່າງໆ ໄດ້ສະແດງຄວາມຫ່ວງໄຍ ກ່ຽວກັບຂໍ້ສະຫງວນຈຳນວນຫລາຍທີ່ບໍ່ສອດຄ່ອງກັບວັດຖຸປະສົງ ແລະ ຄວາມມຸ່ງໝາຍຂອງສົນທິສັນຍາ ສະໜັບສະໜູນການຕັດສິນໃຈຂອງລັດພາຄີທີ່ຈະພິຈາລະນາ ເລື່ອງຂໍ້ສະຫງວນໃນການຈັດກອງປະຊຸມຄັ້ງຕໍ່ໄປ ທີ່ນະຄອນຫລວງນິວຢອກໃນປີ ຄສ 1988 ແລະເພື່ອວຽກງານດັ່ງກ່າວຈຶ່ງຂໍແນະນຳໃຫ້ລັດພາຄີ ທີ່ກ່ຽວຂ້ອງທັງຫລາຍພິຈາລະນາ, ທົບທວນຂໍ້ສະຫງວນຕ່າງໆ ໂດຍເນັ້ນໜັກໄປສູ່ການຍົກເລີກຂໍ້ສະຫງວນເຫລົ່ານັ້ນ.

## GR5
## ຂໍ້ສະເໜີແນະທົ່ວໄປ ລຳດັບ 5
## ມາດຕະການພິເສດຊົ່ວຄາວ
## ກອງປະຊຸມສະໄໝທີ່ ເຈັດ (1988)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍສັງເກດວ່າທັງລາຍງານ, ຄຳນຳສະເໜີ ແລະ ການຕອບຄຳຖາມຂອງລັດພາຄີ ຈະສະແດງໃຫ້ເຫັນເຖິງຄວາມກ້າວໜ້າ ຢ່າງສຳຄັນໃນເລື່ອງການເພີກຖອນ ແລະ ແກ້ໄຂກົດໝາຍ ທີ່ເປັນການຈຳແນກ ແຕ່ກໍຍັງມີຄວາມຈຳເປັນທີ່ຕ້ອງດຳເນີນການໃຫ້ ມີການປະຕິບັດຕາມສົນທິສັນຍາຢ່າງເຕັມທີ່ ໂດຍການນຳມາດຕະການສົ່ງເສີມຄວາມສະເໝີພາບ ໃນທາງປະຕິບັດລະຫວ່າງແມ່ຍິງ ແລະ ຜູ້ຊາຍມາໃຊ້ໂດຍອີງຕາມ ມາດຕາ 4.1 ຂອງສົນທິສັນຍາສະເໜີ ແນະໃຫ້ລັດພາຄີໃຊ້ປະໂຫຍດ ຈາກມາດຕະການພິເສດຊົ່ວຄາວເພີ່ມຫລາຍຂຶ້ນເຊັ່ນ: ການປະຕິບັດການ ສະໜັບສະໜູນ, ການໃຫ້ສິດພິເສດ ຫລື ລະບົບ

ການກຳນົດສັດສ່ວນ ເພື່ອເສີມສ້າງການມີສ່ວນຮ່ວມ ຂອງແມ່ຍິງໃນດ້ານການສຶກສາ ເສດຖະກິດ, ການເມືອງ ແລະ ການຈ້າງງານ.

## GR6
## ຂໍ້ສະເໜີແນະທົ່ວໄປ ລຳດັບ 6
## ກົນໄກລະດັບຊາດທີ່ມີປະສິດທິຜົນ ແລະ ການເຜີຍແຜ່ສູ່ສາທາລະນະ
## ກອງປະຊຸມສະໄໝທີ່ ເຈັດ (1988)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍໄດ້ພິຈາລະນາບົດລາຍງານຂອງລັດ ຊຶ່ງເປັນພາຄີຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການ ຈຳແນກຕໍ່ແມ່ຍິງ ໂດຍອີງຕາມມະຕິຂອງສະ ມັດຊາສະຫະປະຊາຊາດ ທີ 42/60 ເມື່ອວັນທີ 30 ພະຈິກ ຄສ 1987;

ສະເໜີແນະໃຫ້ລັດພາຄີ:

1. ຈັດຕັ້ງແລະ/ຫລືເສີມສ້າງຄວາມເຂັ້ມແຂງໃຫ້ກັບກົນໄກສະຖາບັນ ແລະ ຂະບວນການລະດັບຊາດທີ່ມີປະສິດທິພາບໃນລະດັບສູງຂອງລັດຖະບານ ໂດຍການຈັດສັນຊັບພະຍາກອນ ຄວາມມຸ່ງໝັ້ນ ແລະ ອຳນາດດຳເນີນການຢ່າງພຽງພໍໃນອັນດັບທີຈະ

   (ກ). ໃຫ້ຄຳແນະນຳເລື່ອງຜົນກະທົບອັນເກີດຈາກນະໂຍບາຍລັດທຸກປະການທີ່ມີຕໍ່ແມ່ຍິງ.

   (ຂ). ຕິດຕາມກວດສອບສະຖານະການຂອງແມ່ຍິງຢ່າງຮອບດ້ານ

   (ຄ). ຊ່ວຍກຳນົດນະໂຍບາຍໃໝ່ໆ ແລະ ດຳເນີນກົນລະຍຸດ ແລະ ມາດຕະການການລົບລ້າງການຈຳແນກຢ່າງມີປະສິດທິຜົນ.

2. ດຳເນີນຂັ້ນຕອນທີ່ເໝາະສົມເພື່ອຮັບປະກັນວ່າ ຈະມີການເຜີຍແຜ່ສົນທິສັນຍາ, ລາຍງານຂອງລັດພາຄີຕາມມາດຕາ 18 ແລະ ລາຍງານຂອງຄະນະກຳມະການເປັນພາສາຂອງລັດນັ້ນໆ.

3. ຂໍຄວາມຊ່ວຍເຫລືອຈາກເລຂາທິການສະຫະປະຊາຊາດ ແລະ ແຜນງານຂໍ້ມູນສາທາລະນະໃນການຈັດແປສົນທິສັນຍາ ແລະ ລາຍງານຂອງຄະນະກຳມະການ.

4. ລະບຸເຖິງການປະຕິບັດຕາມຂໍ້ສະເໜີແນະນີ້ໄວ້ໃນລາຍງານສະບັບທຳອິດ ແລະ ສະບັບຕໍ່ໆມາ.

# GR7
# ຂໍ້ສະເໜີແນະທົ່ວໄປ ລຳດັບ 7
# ຊັບພະຍາກອນ
## ກອງປະຊຸມສະໄໝທີ່ ເຈັດ (1988)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍຮັບຊາບເຖິງມະຕິຂອງສະມັດຊາສະຫະປະຊາຊາດທີ່ 41/39 ທີ່ 41/108 ແລະ ໂດຍສະເພາະຢ່າງຫຍິ່ງທີ 42/60 ວັກ 14 ຊຶ່ງເຊີນໃຫ້ຄະນະກຳມະການ ແລະ ລັດພາຄີພິຈາລະນາເລື່ອງການຈັດປະຊຸມຄະນະກຳມະການໃນສະໄໝປະຊຸມຕໍ່ໆໄປທີ່ກຸງວຽນນາ.

ໂດຍຄຳນຶງເຖິງມະຕິຂອງສະມັດຊາສະຫະປະຊາຊາດທີ່ 42/105 ແລະ ໂດຍສະເພາະຢ່າງຫຍິ່ງວັກ 11 ຊຶ່ງຮ້ອງຂໍໃຫ້ເລຂາທິການສະຫະປະຊາຊາດເສີມສ້າງຄວາມເຂັ້ມແຂງ ໃຫ້ການປະສານງານລະຫວ່າງສູນເພື່ອສິດທະມະນຸດແຫ່ງສະຫະປະຊາຊາດກັບສູນເພື່ອການພັດທະນາສັງຄົມ ແລະ ກິດຈະການດ້ານມະນຸດສະທຳຂອງກອງເລຂານຸການໃນສ່ວນທີ່ກ່ຽວກັບການປະຕິບັດຕາມສົນທິສັນຍາວ່າດ້ວຍສິດທິມະນຸດ ແລະ ການໃຫ້ບໍລິການແກ່ໜ່ວຍງານທີ່ຮັກສາສົນທິສັນຍາເຫລົ່ານີ້.

***ສະເໜີແນະໃຫ້ລັດພາຄີ:***

1. ອາດຈະໃຫ້ການສະໜັບສະໜູນຂໍ້ສະເໜີ ເພື່ອການເສີມສ້າງຄວາມເຂັ້ມແຂງ ໃນການປະສານງານລະຫວ່າງສູນເພື່ອສິດທິມະນຸດ ທີ່ກຸງເຈນີວາກັບສູນເພື່ອການພັດທະນາສັງຄົມ ແລະກິດຈະການດ້ານມະນຸດສະທຳນະກຸງວຽນນາ ໃນສ່ວນທີ່ກ່ຽວກັບການໃຫ້ການບໍລິການຂອງຄະນະກຳມະການ;
2. ສະໜັບສະໜູນຂໍ້ສະເໜີທີ່ຈະໃຫ້ຄະນະກຳມະການມີການປະຊຸມກັນ ທີ່ນະຄອນນິວຢອກ ແລະກຸງວຽນນາ
3. ດຳເນີນການຕາມຂັ້ນຕອນທີ່ຈຳເປັນ ແລະ ເໝາະສົມທຸກຢ່າງ ເພື່ອຮັບປະກັນວ່າຄະນະກຳມະ

ການຈະໄດ້ຮັບຊັບພະຍາກອນ ແລະ ບໍລິການທີ່ພຽງພໍເພື່ອຊ່ວຍໃນການປະຕິບັດໜ້າທີ່ຕາມສົນທິສັນຍານີ້ ແລະ ໂດຍສະເພາະຢ່າງຫຍິ່ງໃຫ້ມີເຈົ້າໜ້າທີ່ທີ່ເຮັດວຽກເຕັມເວລາ ເພື່ອຊ່ວຍຄະນະກຳມະການໃນການຈັດຕຽມກອງປະຊຸມ ແລະ ລະຫວ່າງສະໄໝປະຊຸມ;

4. ຮັບປະກັນວ່າຈະຈັດສົ່ງບົດລາຍງານເພີ່ມເຕີມ ແລະ ເອກະສານຕ່າງໆມາຍັງກອງເລຂານຸການໃນເວລາທີ່ເໝາະສົມຈະໄດ້ມີການແປເປັນພາສາທາງການຂອງສະຫະປະຊາຊາດໃຫ້ທັນຕໍ່ການ ການຈັດສົ່ງ ແລະ ພິຈາລະນາຂອງຄະນະກຳມະການ.

## GR8
## ຂໍ້ສະເໜີແນະທົ່ວໄປ ລຳດັບ 8
## ການປະຕິບັດຕາມ ມາດຕາ 8 ຂອງສົນທິສັນຍາ
ກອງປະຊຸມສະໄໝທີ່ ເຈັດ (1988)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍທີ່ພິຈາລະນາບົດລາຍງານຂອງລັດພາຄີ ທີ່ສະເໜີຕາມມາດຕາ 18 ຂອງສົນທິສັນຍາສະເໜີແນະໃຫ້ລັດພາຄີ ດຳເນີນມາດຕະການທີ່ຖືກຕາມມາດຕາ 4 ຂອງສົນທິສັນຍາເພີ່ມຫລາຍຂຶ້ນເພື່ອຮັບປະກັນການປະຕິບັດຕາມມາດຕາ 8 ຂອງສົນທິສັນຍາຢ່າງເຕັມທີ່ ແລະ ເພື່ອຮັບປະກັນວ່າແມ່ຍິງຈະມີໂອກາດໃນການເປັນຕົວແທນລັດຖະບານໃນລະດັບນາໆຊາດ ແລະ ມີສ່ວນຮ່ວມໃນງານຂອງອົງກອນລະຫວ່າງປະເທດ ໂດຍສະເໝີພາບກັບຜູ້ຊາຍ ແລະປາສະຈາກການຈຳແນກ.

## GR9
## ຂໍ້ສະເໜີແນະທົ່ວໄປ ລຳດັບ 9
## ຂໍ້ມູນໃນທາງສະຖິຕິກ່ຽວກັບການສະຖານະການຂອງແມ່ຍິງ
ກອງປະຊຸມສະໄໝທີ່ ແປດ (1989)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍພິຈາລະນາວ່າຂໍ້ມູນໃນທາງສະຖິຕິເປັນສິ່ງທີ່ຈຳເປັນຢ່າງຫຍິ່ງ ສຳລັບການສ້າງຄວາມເຂົ້າໃຈສະຖານະການທີ່ແນ່ນອນຂອງແມ່ຍິງ ໃນແຕ່ລະລັດພາຄີຂອງສົນທິສັນຍາ,

ໂດຍທີ່ໄດ້ສັງເກດວ່າລັດພາຄີຈຳນວນຫລາຍ ສະເໜີລາຍງານໃຫ້ຄະນະກຳມະການພິຈາລະນາ ໂດຍບໍ່ໃຫ້ຂໍ້ມູນທາງສະຖິຕິ,

ສະເໜີແນະວ່າລັດພາຄີຄວນພະຍາຍາມເຮັດທຸກວິຖີທາງເພື່ອຮັບປະກັນວ່າ ໜ່ວຍງານບໍລິການດ້ານສະຖິຕິລະດັບຊາດຊຶ່ງມີໜ້າທີ່ຮັບຜິດຊອບໃນການວາງແຜນການຈັດການສຳມະໂນປະຊາກອນໃນລະດັບຊາດ ແລະ ການສຳຫລວດດ້ານສັງຄົມ ແລະ ເສດຖະກິດອື່ນໆຈະຈັດການແບບສອບຖາມ ເພື່ອການເກັບຂໍ້ມູນແບບແຍກເພດທັງສ່ວນທີ່ເປັນຈຳນວນເຕັມ ແລະ ຮ້ອຍລະເພື່ອໃຫ້ຜູ້ສົນໃຈສາມາດຫາຂໍ້ມູນກ່ຽວກັບສະຖານະການຂອງແມ່ຍິງໃນສ່ວນທີ່ຕົນເອງສົນໃຈໄດ້ໂດຍງ່າຍ

## GR10

## ຂໍ້ສະເໜີແນະທົ່ວໄປ ລຳດັບ 10

## ການສະຫລອງຄົບຮອບສິບປີຂອງການຮັບຮອງສົນທິສັນຍາ

## ວ່າດ້ວຍການລົບລ້າງທຸກຮູບແບບການນຈຳແນກຕໍ່ແມ່ຍິງ

ກອງປະຊຸມສະໄໝທີ່ ແປດ (1989)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍພິຈາລະນາວ່າ ວັນທີ່ 18 ທັນວາ 8 "L" 1989
ຈະເປັນວັນຄົບຮອບສິບປີຂອງການຮັບຮອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ,

ໂດຍພິຈາລະນາຕໍ່ໄປວ່າໃນຊ່ວງເວລາ ສິບປີຜ່ານມາ ໄດ້ປາກົດຊັດເຈນວ່າສົນທິສັນຍາສະບັບນີ້ເປັນໜຶ່ງໃນເຄື່ອງມືທີ່ມີປະສິດທິພາບຫລາຍທີ່ສຸດ ເທົ່າທີ່ສະຫະປະຊາຊາດໄດ້ເຄີຍໃຫ້ການຮັບຮອງມາ ໃນອັນທີ່ຈະສົ່ງເສີມຄວາມສະເໝີພາບພາບລະຫວ່າງເພດໃນສັງ ຄົມ ແລະລັດພາຄີ.

ໂດຍລະນຶກເຖິງຂໍ້ສະເໜີແນະທົ່ວໄປລຳດັບທີ່ 6 (ກອງປະຊຸມສະໄໝທີເຈັດປີ ຄສ 1988) ເລື່ອງກົນໄກລະດັບຊາດທີ່ມີປະສິດທິພາບ ແລະການເຜີຍແຜ່ສູ່ສາທາລະນະ;

ສະເໜີແນະວ່າໃນວາລະຄົບຮອບສິບປີ ຂອງການຮັບຮອງສົນທິສັນຍາສະບັບນີ້ລັດພາຄີຄວນພິຈາລະນາ:

1. ດຳເນີນໂຄງການ ຊຶ່ງທັງການຈັດກອງປະຊຸມ ແລະ ສຳມະນາ ເພື່ອເຜີຍແຜ່ ສົນທິສັນ ຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ສູ່ສາທາລະນະ ໂດຍໃຊ້ພາສາຫລກຂອງປະເທດ ແລະໃຫ້ຂໍ້ມູນກ່ຽວກັບສົນທິສັນຍາໃນປະເທດຂອງຕົນ,

2. ເຊີນອົງກອນແມ່ຍິງລະດັບຊາດໃຫ້ຮ່ວມມືໃນການໂຄສະນາເຜີຍແຜ່ຕ່າງໆທີ່ກ່ຽວກັບສົນທິສັນຍາ ແລະ ການປະຕິບັດຕາມສົນທິສັນຍາ,

3. ສົ່ງເສີມການດຳເນີນການເພື່ອຮັບປະກັນການປະຕິບັດຕາມຫລັກການ ຂອງສົນທິສັນຍາຢ່າງເຕັມຮູບແບບໂດຍສະເພາະແມ່ນມາດຕາ 8 ຊຶ່ງກ່ຽວຂ້ອງກັບການມີສ່ວນຮ່ວມຂອງແມ່ຍິງ ໃນກິດຈະກຳຂອງສະຫະປະຊາຊາດ ແລະລະບົບຂອງສະຫະປະຊາຊາດໃນທຸກລະດັບ,

4. ຮ້ອງຂໍໃຫ້ເລຂາທິການສະຫະປະຊາຊາດສະເຫຼີມສະຫລອງໂອກາດຄົບຮອບ ສິບປີ ຂອງການຮັບຮອງສົນທິສັນຍາສະບັບນີ້ ໂດຍການຮ່ວມມືກັບອົງກອນສະເພາະດ້ານຕ່າງໆ ດຳເນີນການຈັດພິມ ແລະເຜີຍແຜ່ເອກະສານສິ່ງພິມ ແລະ ສື່ອື່ນໆທີ່ກ່ຽວກັບສົນທິສັນຍາ ແລະ ການປະຕິບັດຕາມສົນທິສັນຍາເປັນພາສາທາງການຂອງສະຫະປະຊາຊາດທຸກພາສາ ຜະລິດລາຍການສາລະຄະດີທາງໂທລະພາບທີ່ກ່ຽວກັບສົນທິສັນຍາ ແລະ ຈັດສັນຊັບພະຍາກອນທີ່ຈຳເປັນໃຫ້ກັບໜ່ວຍງານເພື່ອຄວາມກ້າວໜ້າຂອງແມ່ຍິງ ສູນເພື່ອການພັດທະນາສັງຄົມ ແລະ ກິດຈະການດ້ານມະນຸດສະທຳຂອງສຳນັກງານສະຫະປະຊາຊາດ ທີ່ກຸງວຽນນາ ເພື່ອຕຽມການວິເຄາະຂໍ້ມູນທີ່ລັດພາຄີຈັດສົ່ງມາ ສຳລບທີ່ຈະປັບປຸງບົດລາຍງານຂອງຄະນະກຳມະການ ໃຫ້ທັນກັບສະຖານະການ ແລະຈັດພິມ (A/CONF. 116/13) ໂດຍທີ່ບົດລາຍງານດັ່ງກ່າວເຄີຍໄດ້ຮັບການຕີພິມຂຶ້ນເປັນຄັ້ງທຳອິດ ສຳຫລັບການປະຊຸມ ລະດັບໂລກເພື່ອທົບທວນ ແລະ ປະເມີນຜົນກິດສະວັດເພື່ອແມ່ຍິງຂອງສະຫະປະຊາຊາດ: ຄວາມສະເໝີພາບ , ການພັດທະນາ ແລະ ສັນຕິພາບ ຊຶ່ງຈັດຂຶ້ນ ທີ່ ກຸງໄນໂລບີ ເມື່ອ ປີ ຄສ 1985,

## GR11
## ຂໍ້ສະເໜີແນະທົ່ວໄປ ລຳດັບ 11
## ການໃຫ້ຄຳແນະນຳທາງດ້ານເຕັກນິກສຳຫລັບການເຮັດບົດລາຍງານ
## ກອງປະຊຸມສະໄໝທີ່ ແປດ (1989)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍລະນຶກເຖິງວ່າໃນວັນທີ່ 3 ມີນາ ຄສ 1989 ໄດ້ມີລັດໃຫ້ສັດຕະຍາບັນຕໍ່ສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງແລ້ວຈຳນວນ 96 ລັດ;

ໂດຍພິຈາລະນາປະກອບເຖິງຂໍ້ເທັດຈິງທີ່ວ່າຈົນເຖິງວັນດັ່ງກ່າວຄະນະກຳມະການໄດ້ຮັບບົດລາຍງານສະບັບທຳອິດແລ້ວຈຳນວນ 60 ສະບັບ ແລະ ບົດລາຍງານສະບັບທີສອງ 19 ສະບັບ;

ໂດຍສັງເກດວ່າເມື່ອເຖິງກຳນົດ ວັນທີ່ 3 ມີນາ ຄສ 1989 ຍັງມີບາງລັດທີ່ຄ້າງສົ່ງບົດລາຍງານສະບັບທຳອິດຢູ່ຈຳນວນ 36 ສະບັບ ແລະ ບົດລາຍງານສະບັບທີສອງ ຈຳນວນ 36 ສະບັບ;

ໂດຍສະໜັບສະໜູນ, ຍິນດີກັບຄຳຮ້ອງຂໍຕາມສະມັດຊາສະຫະປະຊາຊາດທີ່ 43 /115 ຫຍໍ້ໜ້າທີ 9 ວ່າເລຂາທິການສະຫະປະຊາຊາດ ຄວນຈັດໃຫ້ມີຫລັກສູດການຝຶກອົບຮົມເພີ່ມເຕີມ ສຳລັບປະເທດທີ່ປະສົບບັນຫາຫຍຸ້ງຍາກຢ່າງໜັກ ໃນການຈັດຕັ້ງປະຕິບັດຕາມເງື່ອນໄຂການຜະລິດລາຍການ ພາຍໃນຂໍ້ຕົກລົງດ້ານສິດທິມະນຸດສະບັບຕ່າງໆ ທັງນີ້ພາຍໃນຂອບເຂດຊັບພະຍາກອນທີ່ມີຢູ່ ແລະໂດຍພິຈາລະນາການຈັດລຳດັບຄວາມສຳຄັນຂອງໂຄງການບໍລິການໃຫ້ຄຳປຶກສາ,

ສະເໜີແນະຕໍ່ລັດພາຄີໃຫ້ສົ່ງເສີມສະໜັບສະໜູນ ແລະ ໃຫ້ຄວາມຮ່ວມມືກັບໂຄງການບໍລິການໃຫ້ຄຳປຶກສາດ້ານເຕັກນິກ ລວມທັງການສຳມະນາອົບຮົມ ເພື່ອຊ່ວຍລັດພາຄີທີ່ຮ້ອງຂໍຄວາມຊ່ວຍເຫລືອໃນການປະຕິບັດຕາມພັນທະ ເລື່ອງການເຮັດບົດລາຍງານຕາມມາດຕາ 18 ຂອງສົນທິສັນຍາ;

## GR12
## ຂໍ້ສະເໜີແນະທົ່ວໄປ ລຳດັບ 12
## ຄວາມຮຸນແຮງຕໍ່ແມ່ຍິງ
## ກອງປະຊຸມສະໄໝທີ່ ແປດ (1989)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍພິຈາລະນາວ່າມາດຕາ 2 5 11 12 ແລະ 16 ຂອງສົນທິສັນຍາ ກຳນົດໃຫ້ລັດພາຄີດຳເນີນການເພື່ອຄຸ້ມຄອງແມ່ຍິງຈາກຄວາມຮຸນແຮງ ບໍ່ວ່າໃນຮູບແບບໃດທີ່ເກີດຂຶ້ນພາຍໃນຄອບຄົວ, ບ່ອນເຮັດວຽກ ຫລື ໃນສະຖານທີ່ໃດໜຶ່ງໃນການດຳລົງຊີວິດທາງສັງຄົມ;

ໂດຍພິຈາລະນາປະກອບເຖິງມະຕິຂອງສະພາການເສດຖະກິດ ແລະສັງຄົມ ທີ່ 1988/27

ສະເໜີແນະຕໍ່ລັດພາຄີໃຫ້ລະບຸຂໍ້ມູນຕໍ່ໄປນີ້ໃນລາຍງານປະຈຳວາລະທີ່ສົ່ງເຖິງຄະນະກຳມະການ

1. ກົດໝາຍທີ່ບັງຄັບໃຊ້ເພື່ອຄຸ້ມຄອງແມ່ຍິງ ຈາກເຫດການທີ່ເປັນຄວາມຮຸນແຮງທຸກຮູບ ແບບໃນຊີວິດປະຈຳວັນ (ລວມເຖິງຄວາມຮຸນແຮງທາງເພດ, ການຄຸກຄາມພາຍໃນຄອບຄົວ, ການລ່ວງລະເມີດທາງເພດໃນສະຖານທີ່ເຮັດວຽກ ແລະ ອື່ນໆ);

2. ມາດຕະການອື່ນໆ ເພື່ອການລົບລ້າງຄວາມຮຸນແຮງດັ່ງກ່າວ,

3. ການມີບໍລິການທີ່ໃຫ້ຄວາມຊ່ວຍເຫລືອແກ່ແມ່ຍິງທີ່ຕົກເປັນເຫຍື່ອຂອງການຂົ່ມຂູ່ ຫລື ຄຸກຄາມ,

4. ຂໍ້ມູນທາງສະຖິຕິກ່ຽວກັບເຫດການຄວາມຮຸນແຮງທຸກຮູບແບບຕໍ່ແມ່ຍິງ ແລະກ່ຽວກັບແມ່ຍິງທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ.

## GR13
## ຂໍ້ສະເໜີແນະທົ່ວໄປ ລຳດັບ 13
## ຄ່າຕອບແທນທີ່ເທົ່າກັນສຳລັບວຽກທີ່ມີມູນຄ່າເທົ່າກັນ
## ກອງປະຊຸມສະໄໝທີ່ ແປດ (1989)

*ຄະນະກຳມະການລຶບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍຄຳນຶງເຖິງ ສົນທິສັນຍາສະບັບທີ່ 100 ຂອງອົງການແຮງງານລະຫວ່າງປະເທດ** ວ່າດ້ວຍເລື່ອງການຈ່າຍຄ່າຕອບແທນທີ່ເທົ່າທຽມກັນແກ່ພະນັກງານຍິງ ແລະ ຊາຍ ສຳລັບວຽກທີ່ມີມູນຄ່າເທົ່າກັນ ຊຶ່ງລັດພາຄີສ່ວນໃຫຍ່ຂອງສົນທິສັນຍາ ວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ໄດ້ໃຫ້ສັດຕະຍາບັນແລ້ວ,

ໂດຍຄຳນຶງເຖິງວ່າ ນັບຕັ້ງແຕ່ປີ ຄສ 1983 ຄະນະກຳມະການໄດ້ພິຈາລະນາບົດລາຍງານຂອງລັດພາຄີ ທີ່ເປັນບົດລາຍງານສະບັບທຳອິດໄປແລ້ວ 51ສະບັບແລະລາຍງານສະບັບທີສອງອີກ 5 ສະບັບ,

ໂດຍພິຈາລະນາວ່າເຖິງແມ່ນວ່າ ບົດລາຍງານຂອງລັດພາຄີຈະລະບຸວ່າ ເຖິງຫລັກການເລື່ອງຄ່າຕອບແທນທີ່ເທົ່າທຽມກັນ ຈະໄດ້ຮັບການກຳນົດເປັນກົດໝາຍໃນຫລາຍປະເທດ ແຕ່ການຮັບປະກັນວ່າຈະມີ ການໃຊ້ຫລັກການດັ່ງກ່າວໃນທາງປະຕິບັດນັ້ນ ຍັງຕ້ອງໄດ້ອາໄສການນຳເນີນການອີກຫລາຍທັງນີ້ເພື່ອແກ້ໄຂບັນຫາການຈຳແນກທາງເພດໃນຕະຫລາດແຮງງານ,

ສະເໜີແນະຕໍ່ລັດພາຄີ ຂອງສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງວ່າ:

1. ໃນສິ່ງທີ່ປະຕິບັດຕາມສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ໄດ້ຢ່າງເຕັມທີ່ ລັດພາຄີທີ່ຍັງບໍ່ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາ ສະບັບທີ 100 ຂອງໄອແອວໂອ ຄວນໄດ້ຮັບການສົ່ງເສີມໃຫ້ສັດຕະຍາບັນຕໍ່ສົນທິສັນຍາດັ່ງກ່າວ,

2. ລັດພາຄີຄວນພິຈາລະນາເລື່ອງການ, ການພັດທະນາ ແລະ ການຮັບຮອງລະບົບປະເມີນງານ, ອາຊີບທີ່ໃຊ້ເກນການຕັດສິນທີ່ເປັນກາງທາງເພດ ຊຶ່ງຈະຊ່ວຍໃຫ້ເກີດການປຽບທຽບ ມູນຄ່າຂອງງານທີ່ຕ່າງປະເພດກັນ ຊຶ່ງມີແມ່ຍິງເຮັດເປັນສ່ວນໃຫຍ່ກັບວຽກທີ່ມີຜູ້ຊາຍເຮັດເປັນສ່ວນໃຫຍ່ ແລະ ລັດພາຄີຍັງຄວນທີ່ຈະບັນຈຸຜົນການປະເມີນດັ່ງກ່າວໄວ້ໃນບົດລາຍງານ ທີ່ສົ່ງເຖິງຄະນະກຳມະການລຶບລ້າງການຈຳແນກຕໍ່ແມ່ຍິງດ້ວຍ;

3. ລັດພາຄີຄວນສະໜັບສະໜູນໃຫ້ມີການຈັດຕັ້ງກົນໄກການປະຕິບັດງານທີ່ອາດນຳໄປໃຊ້ໄດ້ແທ້ ແລະສົ່ງເສີມຄວາມພະຍາຍາມຂອງພາຄີຕ່າງໆ ໃນກໍລະນີທີ່ມີການເຮັດຂໍ້ຕົກລົງຮ່ວມກັນ ເພື່ອຮັບປະ

ກັນວ່າຈະມີການນຳຫລັກການເລື່ອງການຈ່າຍຄ່າຕອບແທນທີ່ເທົ່າກັນ ສຳລັບວຽກທີ່ມີມູນຄ່າເທົ່າກັນມາໃຊ້;

## GR14
## ຂໍ້ສະເໜີແນະທົ່ວໄປ ລຳດັບ 14
## ການຕັດອະໄວຍະວະເພດຍິງ
## ກອງປະຊຸມສະໄໝທີ່ ເກົ້າ (1990)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍຄວາມຫ່ວງໄຍວ່າການຕັດອະໄວຍະວະເພດຍິງ ແລະ ການປະຕິບັກຕາມປະເພນີອື່ນໆໃນລັກສະນະທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງແມ່ຍິງ ຍັງຄົງດຳເນີນຢູ່;

ໂດຍສັງເກດດ້ວຍຄວາມຍິນດີ ວ່າລັດຖະບານຂອງປະເທດທີ່ຍັງມີວິທີປະຕິບັດດັ່ງກ່າວ ອົງກອນແມ່ຍິງລະດັບຊາດ, ອົງກອນພັດທະນາເອກະຊົນ ແລະ ໜ່ວຍງານສະເພາະດ້ານເຊັ່ນ: ອົງການອະນາໄມໂລກ ແລະ ກອງທຶນເພື່ອເດັກນ້ອຍແຫ່ງສະຫະປະຊາຊາດ ຕະຫລອດຈົນເຖິງຄະນະກຳມາທິການສິດທິມະນຸດ ແລະ ຄະນະກຳມາທິການຍ່ອຍວ່າດ້ວຍການປ້ອງກັນການຈຳແນກ ແລະ ການຄຸ້ມຄອງຊຸມຊົນກຸ່ມນ້ອຍຍັງຄົງໃຫ້ຄວາມສຳຄັນຕໍ່ກັບປະເດັນດັ່ງກ່າວ ໂດຍໄດ້ຄຳນຶງເປັນພິເສດວ່າວິທີປະຕິບັດຕາມປະເພນີເຊັ່ນ: ການຕັດອະໄວຍະວະເພດຍິງມີຜົນຮ້າຍແຮງທາງດ້ານສຸຂະພາບ ແລະ ດ້ານອື່ນໆຕໍ່ແມ່ຍິງ ແລະເດັກນ້ອຍ;

ໂດຍສັງເກດດ້ວຍຄວາມສົນໃຈເຖິງການສຶກສາຂອງຜູ້ລາຍງານພິເສດ ວ່າດ້ວຍເລື່ອງປະເພນີປະຕິບັດ ທີ່ມີຜົນຕໍ່ສຸຂະພາບຂອງແມ່ຍິງ ແລະ ເດັກນ້ອຍ ແລະການສຶກສາຂອງຄະນະເຮັດວຽກພິເສດດ້ານປະເພນີປະຕິບັດ;

ໂດຍໄດ້ຄຳນຶງວ່າແມ່ຍິງຈຳນວນຫລາຍກຳລັງດຳເນີນປະຕິບັດການທີ່ສຳຄັນດ້ວຍຕົນເອງ ໃນສິ່ງທີ່ຈະຊີ້ໃຫ້ເຫັນ ແລະຕໍ່ສູ້ກັບວິທີປະຕິບັດທີ່ສິ່ງຜົນຮ້າຍຕໍ່ສຸຂະພາບ ແລະສະຫວັດດີພາບຂອງແມ່ຍິງ ແລະເດັກນ້ອຍ;

ໂດຍເຊື່ອໝັ້ນວ່າປະຕິບັດການທີ່ສຳຄັນທັງຂອງແມ່ຍິງ ແລະກຸ່ມອື່ນໆທີ່ສົນໃຈຈຳເປັນຈະຕ້ອງໄດ້ຮັບການສະໜັບສະໜູນ ແລະສົ່ງເສີມຈາກລັດຖະບານ;

ໂດຍສັງເກດດ້ວຍຄວາມຫ່ວງໄຍເປັນຢ່າງຫຍິ່ງວ່າຍັງຄົງມີແຮງກົດດັນທາງດ້ານ ວັດທະນະທຳ, ປະເພນີ ແລະເສດຖະກິດ ຊຶ່ງເຮັດໃຫ້ວິທີປະຕິບັດທີ່ເປັນອັນຕະລາຍເຊັ່ນ: ການຕັດອະໄວຍະວະເພດຍິງຍັງຄົງດຳລົງຊີວິດຢູ່ຕໍ່ໄປ;

***ສະເໜີແນະຈາກລັດພາຄີ:***

(ກ) ໃຫ້ລັດພາຄີດຳເນີນມາດຕະການທີ່ເໝາະສົມ ແລະ ມີປະສິດທິພາບ ເພື່ອລົບລ້າງການຕັດອະໄວຍະວະເພດຍິງ ໂດຍມາດຕະການດັ່ງກ່າວລວມເຖິງ;

(1) ການເກັບຮວບຮວມ ແລະເຜີຍແຜ່ຂໍ້ມູນພື້ນຖານ ກ່ຽວກັບວິທີປະຕິບັດ ຕາມປະເພນີດັ່ງກ່າວ ໂດຍມະຫາວິທະຍາໄລ, ສະມາຄົມດ້ານການແພດ ແລະ ພະຍາບານອົງກອນແມ່ຍິງລະດັບຊາດ ຫລື ອົງກອນຕ່າງໆ;

(2) ການສະໜັບສະໜູນອົງກອນແມ່ຍິງລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ເຮັດວຽກເພື່ອຈຸດປະສົງລົບລ້າງການຕັດອະໄວຍະວະເພດຍິງ ແລະ ວິທີປະຕິບັດອື່ນໆທີ່ເປັນອັນຕະລາຍຕໍ່ແມ່ຍິງ;

(3) ການສົ່ງເສີມນັກການເມືອງຜູ້ປະກອບວິຊາຊີບ, ຜູ້ນຳທາງສາສະໜາ ແລະຜູ້ນຳຊຸມຊົນທຸກລະດັບລວມເຖິງດ້ານສື່ໂຄສະນາ ແລະ ສິລະປະ ເພື່ອຮ່ວມມືກັນສ້າງທັດສະນະຄະຕິ ເພື່ອຈຸດປະສົງລົບລ້າງການຕັດອະໄວຍະວະເພດຍິງ;

(4) ການລິເລີ່ມໂຄງການການສຶກສາ ແລະ ຝຶກອົບຮົມທີ່ເໝາະສົມ ຕະຫລອດຈົນການສຳມະນາບົນ ພື້ນຖານຂອງຂໍ້ຄົ້ນພົບຈາກຜົນຂອງການວິໄຈ ກ່ຽວກັບບັນຫາທີ່ເກີດຂຶ້ນຈາກການຕັດອະໄວຍະວະເພດຍິງ;

(ຂ) ໃຫ້ລັດພາຄີບັນຈຸຍຸດທະສາດຕ່າງໆທີ່ເໝາະສົມໄວ້ໃນນະໂຍບາຍສຸຂະພາບລະດັບຊາດ ໂດຍຈຸດປະສົງທີ່ຈະລົບລ້າງການຕັດອະໄວຍະວະເພດຍິງ ໃນການບໍລິການດ້ານສາທາລະນະສຸກ, ຍຸດທະສາດດັ່ງກ່າວອາດລວມເຖິງການກຳນົດຄວາມຮັບຜິດຊອບພິເສດສຳຫລັບບຸກຄະລາກອນດ້ານສຸຂະພາບ ລວມທັງຜູ້ທີ່ຊ່ວຍເກີດລູກຕາມປະເພນີ (ໝໍຕຳແຍ) ໃນການອະທິບາຍໃຫ້ເຫັນເຖິງຜົນທີ່ເປັນອັນຕະລາຍຂອງການຕັດອະໄວຍະວະເພດຍິງ;

(ຄ) ໃຫ້ລັດພາຄີຂໍຄວາມຊ່ວຍເຫລືອດ້ານຂໍ້ມູນ ແລະຄຳແນະນຳຈາກອົງກອນທີ່ກ່ຽວ ຂ້ອງພາຍໃຕ້ລະບົບຂອງສະຫະປະຊາຊາດ ເພື່ອສະໜັບສະໜູນ ແລະ ເກື້ອກູນຕໍ່ຄວາມພະຍາຍາມທີ່ຈະລົບລ້າງວິທີປະຕິບັດຕາມປະເພນີ ຊຶ່ງເປັນອັນຕະລາຍໃຫ້ໝົດໄປ;

(ງ) ໃຫ້ລັດພາຄີລະບຸຂໍ້ມູນກ່ຽວກັບມາດຕະການ ເພື່ອລົບລ້າງການຕັດອະໄວຍະວະເພດຍິງ ທີ່ໄດ້ດຳເນີນການແລ້ວ ໄວ້ໃນລາຍງານທີ່ສະເໜີຕໍ່ຄະນະກຳມະການ ຖືກຕາມມາດຕາ 10 ແລະ 12 ຂອງສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ.

## GR15

## ຂໍ້ສະເໜີແນະທົ່ວໄປ ລຳດັບ 15

## ການຫລີກເວັ້ນການຈຳແນກຕໍ່ແມ່ຍິງ ໃນຍຸດທະສາດລະດັບຊາດ ເພື່ອການປ້ອງກັນ ແລະການຄວບຄຸມໂລກພູມຄຸ້ມກັນຕ່ຳ (ເອດສ)

ກອງປະຊຸມສະໄໝທີ່ ເກົ້າ (1990)

ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,

ໂດຍໄດ້ພິຈາລະນາເຖິງຂໍ້ມູນທີ່ມີການນຳສະເໜີຕໍ່ຄະນະກຳມະການ ໃນເລື່ອງຜົນກະທົບທີ່ອາດເກີດຂຶ້ນຕໍ່ການໃຊ້ສິດທິຂອງແມ່ຍິງ ອັນເນື່ອງມາຈາກໂລກພູມຄຸ້ມກັນຕ່ຳ (ເອດສ) ທີ່ແຜ່ກະຈາຍໄປທົ່ວໂລກ ແລະ ຍຸດທະສາດໃນການຄວບຄຸມໂລກດັ່ງກ່າວ;

ໂດຍໄດ້ຄຳນຶງເຖິງບົດລາຍງານ ແລະ ເອກະສານທີ່ເຮັດໂດຍອົງການອານາໄມໂລກ ຕະຫລອດຮອດອົງກອນ ແລະໜ່ວຍງານອື່ນໆ ຂອງສະຫະປະຊາຊາດທີ່ກ່ຽວກັບເຊື້ອໂລກເອດ (HIV) ແລະໂດຍສະເພາະຢ່າງຫຍິ່ງແມ່ນບົດບັນທຶກຂອງເລຂາທິການສະຫະປະຊາຊາດ ເຖິງຄະນະກຳມາທິການສະຖານະພາບຂອງແມ່ຍິງ ເລື່ອງຜົນກະທົບຂອງໂລກເອດຕໍ່ຄວາມກ້າວໜ້າຂອງແມ່ຍິງ ແລະເອກະສານຮ່າງສຸດທ້າຍຂອງການປຶກສາຫາລືລະດັບນາໆຊາດເລື່ອງໂລກເອດ ແລະສິດທິມະນຸດ ຊຶ່ງຈັດຂຶ້ນທີ່ກຸງເຈນີວາ ລະຫວ່າງວັນທີ 26 ເຖິງ 28 ກໍລະກົດ ຄສ 1989,

ໂດຍຮັບຊາບເຖິງມະຕິຂອງສະມັດຊາອົງການອະນາໄມໂລກທີ່ WHA 41,24 ເລື່ອງການຫລີກເວັ້ນການຈຳແນກທີ່ກ່ຽວກັບຜູ້ຕິດເຊື້ອເອດໄອວີ ແລະ ຜູ້ເປັນໂລກເອດ ເມື່ອວັນທີ 13 ພຶດສະພາ ຄສ 1988 ມະຕິທີ່ 1989/11 ຂອງຄະນະກຳມາທິການສິດທິມະນຸດ ເລື່ອງການບໍ່ມີການຈຳແນກດ້ານສຸຂະພາບ ໃນວັນທີ 2 ມີນາ ຄສ 1989 ແລະ ໂດຍສະເພາະແມ່ນຖະແຫລງການ ວ່າດ້ວຍແມ່ຍິງ, ເດັກນ້ອຍ ແລະ ໂລກເອດ ເມື່ອວັນທີ 30 ພຶດສະພາ ຄສ 1989,

ໂດຍຮັບຮູ້ວ່າອົງການອະນາໄມໂລກກຳນົດວ່າປະເດັນຫລັກຂອງວັນໂລກເອດ ໃນວັນທີ່ 1 ທັນວາ ຄສ 1990 ຄື " ແມ່ຍິງກັບໂລກເອດ "

***ສະເໜີແນະວ່າ:***

(ກ) ໃຫ້ລັດພາຄີໃຊ້ຄວາມພະຍາຍາມໃຫ້ຫລາຍຂຶ້ນໃນການເຜີຍແຜ່ຂໍ້ມູນ ເພື່ອເພີ່ມຄວາມຮັບຮູ້ຂອງສາທາລະນະໃນເລື່ອງຄວາມສ່ຽງຕໍ່ການຕິດເຊື້ອເອດໄອວີ ແລະໂລກເອດ ໂດຍສະເພາະໃນແມ່ຍິງ ແລະເດັກນ້ອຍ ແລະ ຜົນກະທົບທີ່ມີຕໍ່ຄົນທັງສອງກຸ່ມນີ້;

(ຂ) ໂຄງການຕໍ່ຕ້ານໂລກເອດຄວນໃຫ້ຄວາມສົນໃຈເປັນພິເສດໃນເລື່ອງສິດທິ ແລະຄວາມຕ້ອງການຂອງແມ່ຍິງ, ເດັກນ້ອຍ ແລະປັດໄຈທີ່ກ່ຽວກັບບົດບາດໃນການເຕີບໃຫຍ່ຂະຫຍາຍຕົວຂອງແມ່ຍິງ ລວມທັງສະຖານະພາບທີ່ດ້ອຍກວ່າຂອງແມ່ຍິງໃນບາງສັງຄົມ ຊຶ່ງເຮັດໃຫ້ພວກເຂົາຍິ່ງມີຄວາມສ່ຽງຕໍ່ການຕິດເຊື້ອເອດ

(ຄ) ໃຫ້ລັດພາຄີຮັບປະກັນການມີສ່ວນຮ່ວມຢ່າງເຂັ້ມແຂງຂອງແມ່ຍິງໃນງານ(ເຫດສະການ)ສາທາລະນະສຸກ ແລະ ດຳເນີນມາດຕະການ ເພື່ອເພີ່ມບົດບາດຂອງແມ່ຍິງໃນຖານະຜູ້ໃຫ້ເບິ່ງແຍງຜູ້ທີ່ເຮັດວຽກດ້ານສາທາລະນະສຸກ ແລະຜູ້ໃຫ້ການສຶກສາ ໃນເລື່ອງການປ້ອງກັນການຕິດເຊື້ອເອດໄອວີ;

(ງ) ໃນບົດລາຍງານຕາມມາດຕາ 12 ຂອງສົນທິສັນຍາ ໃຫ້ລັດພາຄີລະບຸຂໍ້ມູນ ເລື່ອງຜົນກະທົບຈາກໂລກເອດຕໍ່ສະຖານະການຂອງແມ່ຍິງ ແລະ ສິ່ງທີ່ໄດ້ດໍາເນີນການເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງແມ່ຍິງຜູ້ຕິດເຊື້ອ ແລະເພື່ອຫລີກເວັ້ນການຈໍາແນກບາງປະການຕໍ່ແມ່ຍິງອັນເນື່ອງມາຈາກໂລກເອດ.

## GR16

## ຂໍ້ສະເໜີແນະທົ່ວໄປ ລໍາດັບ 16

## ແຮງງານຂອງແມ່ຍິງທີ່ໄດ້ຮັບຄ່າຕອບແທນໃນກິດຈະການຄອບຄົວ ໃນຊົນນະບົດ ແລະ ໃນຕົວເມືອງ

ກອງປະຊຸມສະໄໝທີ່ ສິບ (1991)

ຄະນະກໍາມະການລົບລ້າງການຈໍາແນກຕໍ່ແມ່ຍິງ,

ໂດຍໄດ້ຄໍານຶງມາດຕາ 2 (ຄ) ແລະ ມາດຕາ 11 (ຄ) (ງ) ແລະ (ຈ) ຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ ແລະຂໍ້ສະເໜີແນະທົ່ວໄປລໍາດັບທີ່ 9 (ກອງປະຊຸມສະໄໝທີ່ແປດ 1989) ເລື່ອງຂໍ້ມູນໃນທາງສະຖິຕິ ກ່ຽວກັບສະຖານນະການຂອງແມ່ຍິງ;

ໂດຍພິຈາລະນາປະກອບວ່າມີຈໍານວນຂອງແມ່ຍິງໃນລັດພາຄີເປັນອັດຕາສ່ວນຮ້ອຍທີ່ມີຈໍານວນຂ້ອນຂ້າງສູງ ທີ່ຕ້ອງເຮັດວຽກໂດຍບໍ່ໄດ້ຮັບຄ່າຕອບແທນ, ສະຫວັດດີການ ແລະ ຜົນປະໂຫຍດທາງສັງຄົມໃນກິດຈະການຕ່າງໆທີ່ມັກມີສະມາຊິກຄອບຄົວທີ່ຜູ້ຊາຍເປັນເຈົ້າຂອງ,

ໂດຍສັງເກດວ່າລາຍງານໂດຍທົ່ວໄປທີ່ນໍາສະເໜີຕໍ່ຄະນະກໍາມະການລົບລ້າງການຈໍາແນກຕໍ່ແມ່ຍິງ ມັກຈະກ່າວເຖິງບັນຫາຂອງພະນັກງານຍິງ ທີ່ບໍ່ໄດ້ຮັບຄ່າຕອບແທນໃນກິດຈະການຂອງຄອບຄົວ,

ໂດຍຢືນຢັນວ່າວຽກທີ່ບໍ່ໄດ້ຮັບຄ່າຕອບແທນເປັນຮູບແບບໜຶ່ງຂອງການເອົາລັດເອົາປຽບແມ່ຍິງ ຊຶ່ງຂັດກັບສົນທິສັນຍານີ້;

### *ສະເໜີແນະໃຫ້ລັດພາຄີ:*

(ກ) ລະບຸເຖິງຂໍ້ມູນສະຖານະການທາງກົດໝາຍ ແລະ ສັງຄົມ ກ່ຽວກັບແມ່ຍິງທີ່ເຮັດວຽກໃນກິດຈະການຂອງຄອບຄົວ ໂດຍບໍ່ໄດ້ຮັບຄ່າຕອບແທນໄວ້ໃນບົດລາຍງານ ທີ່ນໍາສະເໜີຕໍ່ຄະນະກໍາມະການ;

(ຂ) ຮວບຮວມຂໍ້ມູນສະຖິຕິກ່ຽວກັບແມ່ຍິງທີ່ເຮັດວຽກໂດຍບໍ່ໄດ້ຮັບຄ່າຕອບແທນ, ສະຫວັດດີການ ແລະ ຜົນປະໂຫຍດທາງສັງຄົມໃດໆ ໃນກິດຈະການທີ່ມີສະມາຊິກຄອບຄົວ ຄົນໜຶ່ງຄົນໃດເປັນເຈົ້າຂອງ ແລະ ສະແດງຂໍ້ມູນດັ່ງກ່າວໄວ້ໃນບົດລາຍງານທີ່ນໍາສະເໜີຕໍ່ຄະນະກໍາມະການ;

(ຄ) ດໍາເນີນມາດຕະການທີ່ຈໍາເປັນ ເພື່ອຮັບປະກັນຄ່າຕອບແທນ, ສະຫວັດດີການ ແລະ ຜົນປະໂຫຍດທາງສັງຄົມ ແກ່ແມ່ຍິງທີ່ເຮັດວຽກໃນກິດຈະການທີ່ມີສະມາຊິກຄອບຄົວເປັນເຈົ້າຂອງ ໂດຍບໍ່ໄດ້ຮັບສິດຜົນປະໂຫຍດໃດໆ.

# GR17

# ຂໍ້ສະເໜີແນະທົ່ວໄປ ລຳດັບ 17

# ການວັດແທກ ແລະສະແດງຂໍ້ມູນທາງດ້ານປະລິມານເລື່ອງການເຮັດວຽກໃນຄົວເຮືອນ ໂດຍບໍ່ໄດ້ຮັບຄ່າຕອບແທນຂອງແມ່ຍິງ ແລະການນັບລວມວຽກໃນຄົວເຮືອນໄວໃນຜົນຜະລິດມວນລວມປະຊາຊາດ

ກອງປະຊຸມສະໄໝທີ່ ສິບ (1991)

*ຄະນະກຳມະການລຶບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍໄດ້ຄຳນຶງມາດຕາ 11 ຂອງ ສົນທິສັນຍາ ວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ;

ໂດຍຄຳນຶງເຖິງຫຍໍ້ໜ້າທີ່ 120 ຂອງຍຸດທະສາດໃນໂລບີ ເພື່ອຄວາມກ້າວໜ້າຂອງແມ່ຍິງ ໂດຍຢືນຢັນວ່າການວັດແທກ ແລະ ສະແດງຂໍ້ມູນທາງດ້ານປະລິມານເລື່ອງການເຮັດວຽກຢູ່ໃນຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນຂອງແມ່ຍິງ ຊຶ່ງເປັນວຽກທີ່ມີສ່ວນສົ່ງເສີມການພັດທະນາຂອງແຕ່ລະປະເທດນັ້ນຈະຊ່ວຍເຜີຍໃຫ້ເຫັນບົດບາດທາງດ້ານເສດຖະກິດທີ່ເປັນຈິງຂອງແມ່ຍິງ;

ໂດຍເຊື່ອໝັ້ນວ່າການວັດແທກ ແລະ ສະແດງຂໍ້ມູນທາງດ້ານປະລິມານດັ່ງກ່າວ ຈະເປັນພື້ນຖານໃຫ້ກັບການກຳນົດນະໂຍບາຍ ທີ່ກ່ຽວຂ້ອງກັບຄວາມກ້າວໜ້າຂອງແມ່ຍິງຕໍ່ໄປ;

ໂດຍສັງເກດເຖິງຂໍ້ອະພິປາຍຂອງຄະນະກຳມາທິການດ້ານສະຖິຕິ ເມື່ອກອງປະຊຸມສະໄໝທີ່ 25 (ຊາວຫ້າ) ເລື່ອງການທົບທວນລະບົບບັນຊີປະຊາຊາດ ທີ່ໃຊ້ກັນໃນປັດຈຸບັນກັບການພັດທະນາສະຖິຕິກ່ຽວກັບແມ່ຍິງ;

## *ສະເໜີແນະໃຫ້ລັດພາຄີ:*

(ກ) ສົ່ງເສີມ ແລະສະໜັບສະໜູນການວິໄຈ ແລະ ສຶກສາທົດລອງເພື່ອວັດແທກ ແລະກຳໜົດມູນຄ່າຂອງການເຮັດວຽກຢູ່ໃນຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນຂອງແມ່ຍິງຕົວຢ່າງເຊັ່ນ: ການສຳຫລວດຂໍ້ມູນການໃຊ້ເວລາ ໂດຍຖືເປັນສ່ວນໜຶ່ງຂອງໂຄງການສຳຫລວດຄົວເຮືອນທົ່ວປະເທດ ແລະ ການຮວບ

ຮວມສະຖິຕິແບບແຍກເພດ ໃນເລື່ອງການໃຊ້ເວລາສຳລັບກິດຈະກຳຕ່າງໆທັງພາຍໃນຄອບຄົວ ແລະ ຕະຫລາດແຮງງານ;

(ຂ) ດຳເນີນມາດຕະການທີ່ກ່ຽວຂ້ອງກັບບົດບັນຍັດຂອງສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ຍຸດທະສາດໄນໂລບີ ເພື່ອຄວາມກ້າວໜ້າຂອງແມ່ຍິງ ເພື່ອວັດແທກປະລິມານ ແລະ ນັບລວມການເຮັດວຽກໃນຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນຂອງແມ່ຍິງໄວ້ໃນຜະລິດຕະພັນມວນລວມຂອງປະຊາຊາດ;

(ຄ) ໃນບົດລາຍງານຕາມ ມາດຕາ 18 ຂອງສົນທິສັນຍາ ໃຫ້ລະບຸເຖິງຂໍ້ມູນກ່ຽວກັບການວິໄຈ ແລະສຶກສາທົດລອງເພື່ອວັກແທກ ແລະ ກຳໜົດມູນຄ່າການເຮັດວຽກໃນຄອບຄົວ ໂດຍບໍ່ໄດ້ຮັບຄ່າຕອບແທນຂອງແມ່ຍິງລວມທັງຄວາມກ້າວໜ້າໃນການນັບລວມກິດຈະກຳການເຮັດວຽກໃນຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນຂອງແມ່ຍິງເຂົ້າເປັນສ່ວນໜຶ່ງໃນບັນຊີປະຊາຊາດ.

## GR18
## ຂໍ້ສະເໜີແນະທົ່ວໄປ ລຳດັບ 18
## ແມ່ຍິງຜູ້ທີ່ມີຄວາມພິການ
## ກອງປະຊຸມສະໄໝທີ່ ສິບ (1991)

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ,*

ໂດຍພິຈາລະນາ ໂດຍໃຫ້ຄວາມສົນໃຈເປັນພິເສດຕໍ່ມາດຕາ 3 ຂອງສົນທິສັນຍາ ວ່າດ້ວຍການລົບລ້າງການທຸກຮູບແບບການຈຳແນກຕໍ່ແມ່ຍິງ;

ໂດຍໄດ້ພິຈາລະນາລາຍງານປະຈຳວາລະຂອງລັດພາຄີແລ້ວ ກວ່າ 60 ສະບັບ ແລະ ເຫັນວ່າບົດລາຍງານເຫລົ່ານີ້ເກືອບຈະບໍ່ໄດ້ໃຫ້ຂໍ້ມູນກ່ຽວກັບແມ່ຍິງຜູ້ທີ່ພິການເທົ່າທີ່ຄວນ;

ໂດຍຫ່ວງໄຍກ່ຽວກັບສະຖານະການຂອງແມ່ຍິງພິການ ຊຶ່ງໄດ້ຮັບຜົນກະທົບຈາກການຈຳແນກແບບຕໍ່ເນື່ອງ (ຊ້ຳຊ້ອນ) ອັນເນື່ອງມາຈາກສະພາບຄວາມເປັນຢູ່ທີ່ມີລັກສະນະ ສະເພາະຂອງແມ່ຍິງກຸ່ມນີ້;

ໂດຍຄຳນຶງເຖິງຫຍໍ້ໜ້າທີ່ 296 ຂອງຍຸດທະສາດ ໄນໂລບີ ເພື່ອຄວາມກ້າວໜ້າຂອງແມ່ຍິງຊຶ່ງແມ່ຍິງຜູ້ທີ່ພິການ ຖືກຈັດຢູ່ໃນກຸ່ມຜູ້ທີ່ຖືກຈຳແນກໄດ້ໂດຍງ່າຍພາຍໃຕ້ຫົວຂໍ້ " ປະເດັນທີ່ຄວນຫ່ວງໃຍເປັນພິເສດ "

*ໂດຍຢືນຢັນການສະໜັບສະໜູນ* ຕໍ່ໂຄງການປະຕິບັດການລະດັບໂລກກ່ຽວກັບຜູ້ພິການ (1982)

*ສະເໜີແນະ:* ໃຫ້ລັດພາຄີໃຫ້ຂໍ້ມູນກ່ຽວກັບແມ່ຍິງຜູ້ທີ່ພິການ ໃນບົດລາຍງານທີ່ຈະສົ່ງຕາມກຳນົດເວລາ ແລະ ໃຫ້ຂໍ້ມູນກ່ຽວກັບມາດຕະການທີ່ລັດໄດ້ດຳເນີນການກັບສະຖານະການສະເພາະຂອງແມ່ຍິງກຸ່ມນີ້ລວມທັງມາດຕະການພິເສດ ເພື່ອຮັບປະກັນວ່າພວກເຂົາຈະໄດ້ເຂົ້າເຖິງການສຶກສາ ແລະການຈ້າງງານ, ການບໍລິການດ້ານສຸຂະພາບ ແລະສະຫວັດດີການທາງສັງຄົມໄດ້ຢ່າງສະເໝີພາບ ແລະ ຮັບປະກັນວ່າພວກເຂົາຈະສາມາດມີສ່ວນຮ່ວມໃນກິດຈະກຳທາງສັງຄົມ ແລະວັດທະນະທຳທຸກດ້ານ.

## GR19
## ຂໍ້ແນະນຳທົ່ວໄປ ລຳດັບທີ 19:
## ຄວາມຮຸນແຮງຕໍ່ແມ່ຍິງ
## ກອງປະຊຸມສະໄໝທີ ສິບເອັດ ( 1992 )

**ຄວາມເປັນມາ**

1. ຄວາມຮຸນແຮງບົນພື້ນຖານທາງເພດ (gender) ເປັນການຈຳແນກຮູບແບບໜຶ່ງ ຊຶ່ງເປັນອຸປະສັກຮ້າຍແຮງຕໍ່ການທີ່ແມ່ຍິງຈະສາມາດໃຊ້ສິດ ແລະ ເສລີພາບບົນ ພື້ນຖານຂອງຄວາມສະເໝີພາບກັບຜູ້ຊາຍ.
2. ໃນປີ ຄສ 1989 ຄະນະກຳມະການໄດ້ແນະນຳລັດລະບຸຂໍ້ມູນກ່ຽວກັບຄວາມຮຸນແຮງ ແລະ ມາດຕະການທີ່ໃຊ້ໃນການຈັດການກັບປັນຫາດັ່ງກ່າວ ໄວ້ໃນລາຍງານຂອງລັດ ( ຂໍ້ສະເໜີແນະ ທົ່ວໄປທີ່ 12 ສະໄໝປະຊຸມທີ ແປດ).

3. ໃນສະໄໝປະຊຸມທີ 10 ປີ ຄສ 1991 ໄດ້ມີການຕົກລົງໃຫ້ໃຊ້ເວລາສ່ວນໜຶ່ງຂອງສະໄໝປະຊຸມທີ່ສິບເອັດ ອະພິປາຍ ແລະ ສຶກສາ ມາດຕາ 6 ແລະ ມາດຕາອື່ນໆຂອງສົນທິສັນຍາ ໃນສ່ວນທີ່ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ການລ່ວງລະເມີດທາງເພດກັບການເອົາລັດເອົາປຽບແມ່ຍິງ. ການເລືອກປະເດັນດັ່ງກ່າວສືບເນື່ອງຈາກການ ຄາດການເຖິງການປະຊຸມໂລກ ເລື່ອງສິດທິມະນຸດ ໃນປີ ຄສ 1993 ຊຶ່ງສະມັດຊາສະຫະປະຊາຊາດເປັນຜູ້ຮຽກປະຊຸມຕາມມະຕິທີ 45/155 ເມື່ອວັນທີ 18 ທັນວາຄົມ ປີ ຄສ 1990.
4. ຄະນະກຳມະການສະຫຼຸບວ່າຍັງມີລາຍງານຂອງລັດພາຄີ ທີ່ບໍ່ໄດ້ສະທ້ອນໃຫ້ເຫັນ ຄວາມກ່ຽວພັນຢ່າງໃກ້ຊິດລະຫວ່າງ ການຈຳແນກຕໍ່ແມ່ຍິງ ຄວາມຮຸນແຮງບົນພື້ນຖານທາງເພດ ກັບການລະເມີດສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານ ການປະຕິບັດຕາມສົນທິສັນຍາຢ່າງເຕັມທີ່ ຍ່ອມໝາຍເຖິງການທີ່ລັດຕ້ອງມີມາດຕະການທາງບວກເພື່ອລົບລ້າງຄວາມຮຸນແຮງທຸກຮູບແບບຕໍ່ແມ່ຍິງ.
5. ຄະນະກຳມະການແນະນຳຕໍ່ລັດພາຄີວ່າ ໃນການທົບທວນກົດໝາຍ ແລະ ນະໂຍບາຍຂອງລັດ ແລະ ໃນການເຮັດບົດລາຍງານຕາມສົນທິສັນນີ້ ລັດພາຄີຄວນພິຈາລະນາຄວາມເຫັນຕໍ່ໄປນີ້ຂອງຄະນະກຳມະການໃນເລື່ອງຄວາມຮຸນແຮງບົນພື້ນຖານທາງເພດ.

## *ຄວາມເຫັນທົ່ວໄປ*

6. ມາດຕາ 1 ຂອງສົນທິສັນຍາໄດ້ນິຍາມການຈຳແນກຕໍ່ແມ່ຍິງ

ຄວາມໝາຍຂອງການຈຳແນກນີ້ລວມເຖິງຄວາມຮຸນແຮງ ບົນພື້ນຖານທາງເພດໄດ້ແກ່ຄວາມຮຸນແຮງທີ່ກະທຳຕໍ່ແມ່ຍິງ ເພາະລາວເປັນຜູ້ຍິງ ຫລື ມີຜົນກະທົບຕໍ່ແມ່ຍິງຢ່າງຮຸນແຮງເປັນພິເສດ ຊຶ່ງລວມເຖິງການທຳຮ້າຍ ຫຼື ເຮັດໃຫ້ເຈັບປວດໃນທາງຮ່າງກາຍ, ຈິດໃຈ ຫລື ທາງເພດ ການຂົ່ມຂູ່ວ່າຈະທຳຮ້າຍ, ການບັງ ຄັບ ແລະ ການບັ່ນທອນເສລີພາບອື່ນໆ.

ຄວາມຮຸນແຮງບົນພື້ນຖານທາງເພດ ອາດເປັນການລະເມີດບົດບັນຍັດສະເພາະຕ່າງໆ ຂອງສົນທິສັນຍາ ບໍ່ວ່າບົດບັນຍັດນັ້ນໆ ຈະເວົ້າເຖິງຄວາມຮຸນແຮງໄວ້ຢ່າງຊັດເຈນ ຫຼື ບໍ່ກໍຕາມ.

7. ຄວາມຮຸນແຮງບົນພື້ນຖານຂອງເພດ ( ໝາຍເຖິງຄວາມເປັນຍິງ ຫຼື ຊາຍ )

ຊຶ່ງຫຼຸດຜ່ອນ ຫຼື ລົບລ້າງການທີ່ແມ່ຍິງຄວນຈະໄດ້ຮັບ ຊຶ່ງສິດທິມະນຸດ ແລະເສລີພາບຂັ້ນພື້ນຖານຕາມທີ່ລະບຸໄວ້ໃນກົດໝາຍລະຫວ່າງປະເທດທົ່ວໄປ ຫລື ສົນທິສັນຍາວ່າດ້ວຍສິດທິມະນຸດຖືເປັນການຈຳແນກຕໍ່ແມ່ຍິງຕາມຄວາມໝາຍຂອງ ມາດຕາ1 ຂອງສົນທິສັນຍານີ້ ສິດທິ ແລະ ເສລີພາບ ເຫຼົ່ານີ້ລວມເຖິງ :

ກ. ສິດທິໃນຊີວິດ ;

ຂ. ສິດທິທີ່ຈະບໍ່ຖືກທໍລະມານ ຫຼື ໄດ້ຮັບການປະຕິບັດ ຫຼື ຖືກລົງໂທດຢ່າງໂຫດຮ້າຍ ບໍ່ມີມະນຸດສະທຳ ຫຼື ທຳລາຍຄວາມເປັນມະນຸດ ;

ຄ. ສິດທິທີ່ຈະໄດ້ຮັບການຄຸ້ມຄອງຢ່າງສະເໝີພາບ ຕາມຫລັກປະຕິບັດດ້ານມະນຸດສະທຳໃນ

ຍາມທີ່ມີການສູ້ຮົບດ້ວຍອາວຸດ ລວມເຖິງລະຫວ່າງປະເທດແລະພາຍໃນປະເທດ ;

ງ. ສິດໃນເສລີພາບ ແລະຄວາມປອດໄພຂອງບຸກຄົນ ;

ຈ. ສິດທີ່ຈະໄດ້ຮັບການຄຸ້ມຄອງຢ່າງສະເໝີພາບຕາມກົດໝາຍ ;

ສ. ສິດດ້ານຄວາມສະເໝີພາບໃນຄອບຄົວ ;

ຊ. ສິດທີ່ຈະມີສຸກຂະພາບກາຍ ແລະຈິດດີຕາມມາດຕະຖານສູງສຸດທີ່ຈະເປັນໄປໄດ້ ;

ຍ. ສິດທີ່ຈະມີສະພາບການເຮັດວຽກທີ່ເປັນທຳ ແລະ ຍອມຮັບໄດ້ ;

8. ສົນທິສັນຍານີ້ຄວບຄຸມເຖິງຄວາມຮຸນແຮງ ທີ່ເຮັດຄວາມຜິດໂດຍເຈົ້າໜ້າທີ່ລັດ ສິ່ງທີ່ເກີດດັ່ງກ່າວ ນອກຈາກຈະເປັນການລະເມີດສົນທິສັນຍານີ້ ຍັງອາດເປັນການລະເມີດໜ້າທີ່ຂອງລັດ ຕາມກົດໝາຍລະຫວ່າງປະເທດວ່າດ້ວຍສິດທິມະນຸດ ແລະ ສົນທິສັນຍາອື່ນໆອີກດ້ວຍ.

9. ຢ່າງໃດກໍ່ຕາມຕ້ອງເນັ້ນໜັກໂດຍການເລືອກປະຕິບັດຕາມອານຸສັນຍານີ້ ບໍ່ຈຳກັດຢູ່ສະເພາະທີ່ກະທຳໂດຍລັດ ຫລືໃນນາມຂອງລັດເທົ່ານັ້ນ (ເບິ່ງມາດຕາ 2(ຈ) 2(ສ) ແລະ 5). ຕົວຢ່າງ : ຕາມມາດຕາ 2 (ຈ) ສົນທິສັນຍາ ລະບຸວ່າລັດພາຄີຕ້ອງດຳເນີນມາດຕະການທີ່ເໝາະສົມເພື່ອລົບລ້າງ ການຈຳແນກຕໍ່ແມ່ຍິງ ໂດຍບຸກຄົນ ອົງການ ຫລື ກິດຈະການໃດໆ ສ່ວນກົດໝາຍລະຫວ່າງປະເທດທົ່ວໄປ ແລະກະຕິກາສະເພາະດ້ານສິດທິມະນຸດ ລະບຸວ່າລັດຍັງຕ້ອງຮັບຜິດຊອບ ຕໍ່ການກະທຳຂອງເອກະຊົນຫາກລັດເມີນເສີຍບໍ່ສາມາດດຳເນີນການເຕັມຄວາມສາມາດເພື່ອປ້ອງກັນການລະເມີດສິດ ຫລື ເພື່ອກວດສອບ ແລະ ລົງໂທດກໍລະນີການກະທຳຄວາມຮຸນແຮງ ລວມທັງຕ້ອງຮັບຜິດຊອບຊົດໃຊ້ຄ່າເສຍຫາຍອີກ.

## ຄວາມເຫັນຕໍ່ບາງມາດຕາຂອງສົນທິສັນຍາ

### ມາດຕາ 2 ແລະ ມາດຕາ 3

10. ມາດຕາ 2 ແລະ 3 ລະບຸເຖິງພັນທະຢ່າງຄວບຄຸມໃນການລົບລ້າງທຸກຮູບແບບນອກເໜືອ ຈາກພັນທະຕາມມາດຕາ 5 -16 ;

### ມາດຕາ 2 (ສ) ມາດຕາ 5 ແລະມາດຕາ 10 (ຄ)

11. ທັດສະນະຄະຕິຕາມແບບປະເພນີນິຍົມທີ່ເບິ່ງແມ່ຍິງ ເຖິງສະຖານະກ່ວາຜູ້ຊາຍ ແລະມີບົດບາດທີ່ຈຳກັດ , ຕາຍຕົວ ສິ່ງຜົນໃຫ້ພຶດຕິກຳທີ່ລວມເຖິງການໃຊ້ຄວາມຮຸນແຮງ ແລະ ການກົດຂີ່ບັງຄັບດຳລົງຢູ່ຢ່າງກ້ວາງຂວາງເຊັ່ນ: ຄວາມຮຸນແຮງ ແລະ ການຂົ່ມຂູ່ກັນໃນຄອບຄົວ, ການບັງຄັບໃຫ້

12. ທັດສະນະຄະຕິເຊັ່ນນີ້ ຍັງສົ່ງຜົນໃຫ້ເກີດການເຜີຍແຜ່ພາບລາມົກ ແລະ ການສ້າງພາບພົດແມ່ຍິງ ຫລື ໃຊ້ຜົນປະໂຫຍດທາງການຄ້າຈາກແມ່ຍິງ ໃນຖານະທີ່ເປັນວັດຖຸທາງເພດຫຼາຍກວ່າທີ່ຈະເບິ່ງແມ່ຍິງໃນຖານະສ່ວນບຸກຄົນ ຊຶ່ງສະພາບເຊັ່ນນີ້ຈະສົ່ງຜົນສະທ້ອນ ໄປສູ່ຄວາມຮຸນແຮງບົນພື້ນຖານບົດບາດຍິງຊາຍອີກ ຢ່າງຕໍ່ເນື່ອງ.

## ມາດຕາ 6

13. ມາດຕາ 6: ກຳນົດໃຫ້ລັດພາຄີດຳເນີນມາດຕະການ ເພື່ອປາບປາມການຄ້າແມ່ຍິງ ແລະ ການຫາຜົນປະໂຫຍດຈາກການຄ້າປະເວນີຂອງແມ່ຍິງທຸກຮູບແບບ.

14. ຄວາມທຸກຍາກ ແລະ ການບໍ່ມີວຽກເຮັດ ຈຶ່ງເປີດໂອກາດໃຫ້ເກີດການຄ້າແມ່ຍິງເພີ່ມຫຼາຍຂຶ້ນນອກຈາກການຄ້າແມ່ຍິງໃນຮູບແບບເກົ່າໆແລ້ວ ໃນຂະນະນີ້ຍັງມີການສະແຫວງຫາຜົນປະໂຫຍດທາງເພດຮູບແບບໃໝ່ໆເຊັ່ນ: ການທ່ອງທ່ຽວທາງເພດ, ການຈັດຫາຄົນມາເຮັດວຽກເປັນແມ່ບ້ານຈາກປະເທດກຳລັງພັດທະນາ ເພື່ອໄປເຮັດວຽກໃນປະເທດທີ່ພັດທະນາແລ້ວ ແລະ ການຫາຈັດໃຫ້ມີການການແຕ່ງດອງລະຫວ່າງແມ່ຍິງຈາກປະເທດກຳລັງພັດທະນາກັບຄົນຕ່າງປະເທດ, ການກະທຳເຊັ່ນນີ້ບໍ່ສອດຄ່ອງກັບໂອກາດການໃຊ້ສິດຢ່າງສະເໝີພາບຂອງແມ່ຍິງ ໂດຍຄຳນຶງເຖິງສິດ ແລະ ສັກສີຂອງເຂົາ ພ້ອມຍັງເຮັດໃຫ້ແມ່ຍິງຕ້ອງຕົກຢູ່ໃນຄວາມສ່ຽງຕໍ່ຄວາມຮຸນແຮງ ແລະ ການຖືກຄຸກຄາມ.

15. ຄວາມທຸກຍາກ ແລະ ການບໍ່ມີວຽກເຮັດຊຸກຍູ້(ຜັກດັນ) ໃຫ້ແມ່ຍິງຈຳນວນຫຼາຍ ລວມທັງເດັກນ້ອຍແມ່ຍິງ ຕ້ອງເຂົ້າສູ່ການຄ້າປະເວນີ, ຜູ້ຄ້າປະເວນີຕ້ອງຕົກຢູ່ໃນພາວະຄວາມສ່ຽງຕໍ່ການຖືກກະທຳຄວາມຮຸນແຮງຫຼາຍເປັນພິເສດ ຍ້ອນສະຖານະພາບຂອງພວກເຂົາ ຊຶ່ງອາດຈະບໍ່ຖືກຕ້ອງຕາມກົດໝາຍໄດ້ຊຸກຍູ້ໃຫ້ພວກເຂົາກາຍເປັນບຸກຄົນທີ່ຢູ່ໃນຂອບເຂດຂອງຄວາມຜິດ ແມ່ຍິງກຸ່ມນີ້ຕ້ອງການ

ປົກປ້ອງເພື່ອຫຼີກລ້ຽງ ຈາກຖືກຂົ່ມຂືນທຳຊຳເລົາ ແລະ ຄວາມຮຸນແຮງຮູບແບບອື່ນໆຢ່າງສະເໝີພາບຕາມກົດໝາຍ.

16. ສົງຄາມຄວາມຂັດແຍ່ງທີ່ໃຊ້ອາວຸດ ແລະ ການຍຶດຄອງດິນແດນ ມັກນຳໄປສູ່ການຄ້າປະເວນີ ການຄ້າແມ່ຍິງ ແລະ ການທຳຮ້າຍທາງເພດຕໍ່ແມ່ຍິງເພີ່ມຫຼາຍຂຶ້ນ ຈຶ່ງຈຳເປັນຕ້ອງມີມາດຕະການປົກປ້ອງ, ຄຸ້ມຄອງ ແລະ ລົງໂທດເປັນການສະເພາະ.

## ມາດຕາ 11

17. ຄວາມສະເໝີພາບໃນການຈ້າງງານອາດຈະຖືກຫຼຸດລົງ ເມື່ອແມ່ຍິງຕ້ອງປະເຊີນກັບຄວາມຮຸນແຮງບົນພື້ນຖານຂອງຄວາມເປັນເພດ ( ຍິງ ) ເຊັ່ນ: ການລ່ວງລະເມີດທາງເພດໃນສະຖານທີ່ເຮັດວຽກ.

18. ການລ່ວງລະເມີດທາງເພດໝາຍລວມເຖິງຄວາມປະພຶດທີ່ບໍ່ມີຕ້ອງການ ເພື່ອຫວັງຜົນທາງເພດເຊັ່ນການຖືກຈັບບາຍ (ການຖືກເນື້ອຕ້ອງໂຕ) ແລະການລ່ວງເລະເມີດທາງຮ່າງກາຍ, ການເວົ້າຈາລາມົກ (ທີ່ບໍ່ສຸພາບ) ການສະແດງຮູບພາບລາມົກ, ການສະແດງຄວາມຕ້ອງການ ທາງເພດໂດຍຄຳເວົ້າ ຫຼື ການກະທຳ. ການກະທຳດັ່ງກ່າວອາດເຮັດໃຫ້ຜູ້ທີ່ຖືກກະທຳຮູ້ສຶກຕໍ່າຕ້ອຍ ແລະ ອາດເຮັດໃຫເດກີດບັນຫາດ້ານສຸຂະພາບ ແລະ ຄວາມປອດໄພ ເມື່ອແມ່ຍິງຜູ້ຖືກກະທຳມີ ເຫດຜົນທີ່ຄວນເຊື່ອໄດ້ວ່າການຂັດຂືນ ບໍ່ຍອມເຮັດຕາມອາດເຮັດໃຫ້ເກີດຜົນລົບຕໍ່ລາວ ເລື່ອງການຈ້າງງານລວມເຖິງການຊອກຫາວຽກ ຫຼື ການເລື່ອນຕຳແໜ່ງ ຫຼື ເມື່ອພຶດຕິກຳດັ່ງກ່າວກໍ່ໃຫ້ເກີດບັນຍາກາດໃນການເຮັດວຽກທີ່ບໍ່ເປັນມິດສະຖານະການເຊັ່ນນີ້ ແມ່ນຖືວ່າເປັນການຈຳແນກ.

## ມາດຕາ 12

19. ມາດຕາ12
ກຳນົດໃຫ້ຮູ້ລັດພາຄີຕ້ອງດຳເນີນມາດຕະການ ເພື່ອຮັບປະກັນການເຂົ້າເຖິງການບໍລິການດ້ານສຸຂະພາບຢ່າງສະເໝີພາບຄວາມຮຸນແຮງຕໍ່ແມ່ຍິງເຮັດໃຫ້ແມ່ຍິງຕ້ອງຕົກຢູ່ໃນສະພາບຄວາມເປັນອັນຕະລາຍ ທາງດ້ານສຸຂະພາບ ແລະ ຊີວິດ.

20. ໃນບາງລັດຍັງມີວິທີປະຕິບັດຕາມປະເພນີ ຊຶ່ງເປັນອັນຕະລາຍຕໍ່ສຸຂະພາບຂອງແມ່ຍິງ ແລະ ເດັກນ້ອຍໂດຍມີວັດທະນະທຳ ແລະ ປະເພນີເປັນເຄື່ອງມືຊ່ວຍໃນການປະຕິບັດດັ່ງກ່າວ ລວມເຖິງຂໍ້ຫ້າມ ເລື່ອງການບໍລິໂພກອາຫານສຳລັບແມ່ຍິງທີ່ຖືພາມານ ຄວາມຕ້ອງການຂອງເດັກຜູ້ຊາຍ ແລະການຕັດອະໄວຍະວະເພດ ຫຼື ການປາດອະໄວຍະວະເພດຍິງ.

## ມາດຕາ 14

21. ແມ່ຍິງທີ່ຢູ່ໃນຊົນນະບົດຕ້ອງສ່ຽງກັບຄວາມຮຸນແຮງບົນພື້ນຖານທາງເພດ (ຄວາມເປັນຍິງ ຫຼື ຊາຍ) ເພາະທັດສະນະຄະຕິແບບປະເພນີນິຍົມ ກ່ຽວກັບບົດບາດທີ່ດ້ອຍກວ່າຂອງແມ່ຍິງ ຍັງໃຊ້ຊີວິດຢູ່ໃນຊຸມຊົນ,ຊົນນະບົດຫຼາຍແຫ່ງ, ເດັກນ້ອຍແມ່ຍິງຈາກຊຸມຊົນຊົນນະບົດ ຕ້ອງສ່ຽງເປັນພິເສດຕໍ່ກັບຄວາມຮຸນແຮງ ແລະ ການສະແຫວງຫາຜົນປະໂຫຍດທາງເພດ ເມື່ອເດີນທາງອອກຈາກຊຸມຊົນນະບົດ ເພື່ອໄປ ຫາວຽກເຮັດໃນຕົວເມືອງ.

## ມາດຕາ 16 ( ແລະ ມາດຕາ 5 )

22. ການບັງຄັບໃຫ້ເຮັດໝັນ ຫຼື ການຫຼຸລູກ ມີຜົນເສຍຕໍ່ສຸຂະພາບກາຍ ແລະ ຈິດໃຈຂອງແມ່ຍິງ ແລະ ລະເມີດສິດທິຂອງແມ່ຍິງ ທີ່ຕັດສິນໃຈວ່າຈະມີລູກຈັກຄົນ ແລະ ມີໄລຍະຫ່າງກັນເທົ່າໃດ.

23. ຄວາມຮຸນແຮງໃນຄອບຄົວ ເປັນຮູບແບບຄວາມຮຸນແຮງຕໍ່ແມ່ຍິງທີ່ຮ້າຍແຮງທີ່ສຸດ, ຄວາມຮຸນແຮງດັ່ງກ່າວມີປາກົດຢູ່ໃນທຸກສັງຄົມ, ມີແມ່ຍິງທຸກໄວທີ່ຕ້ອງປະເຊີນໜ້າກັບຄວາມຮຸນແຮງທຸກປະເພດຈາກ ສາຍພົວພັນພາຍໃນຄອບຄົວ ບໍ່ວ່າຈະເປັນການທຸບຕີ, ການຂົ່ມຂືນທຳຊຳເລົາ ແລະ ການທຳຮ້າຍທາງ ເພດໃນຮູບແບບອື່ນ, ຄວາມຮຸນແຮງທາງຈິດໃຈ ແລະຮູບແບບອື່ນ ໂດຍມີທັດສະນະຄະຕິແບບປະເພນີ ນິຍົມເປັນເຄື່ອງສະໜັບສະໜູນ(ຄ້ຳຈູນ) ຄວາມບໍ່ສາມາດເພິ່ງພາຕົນເອງໄດ້ໃນດ້ານເສດຖະກິດ ກົດດັນໃຫ້ແມ່ຍິງຈຳນວນຫຼາຍຕ້ອງທົນຢູ່ກັບສະ ພາບຄວາມສຳພັນທີ່ມີຄວາມຮຸນແຮງ, ການທີ່ຜູ້ຊາຍປະຕິເສດດຄວາມຮັບຜິດຊອບຕໍ່ຄອບຄົວອາດຖື ເປັນອີກຮູບແບບໜຶ່ງຂອງຄວາມຮຸນແຮງ ແລະ ການບັງຄັບ, ຄວາມຮຸນແຮງໃນລັກສະນະເຊັ່ນນີ້ເຮັດໃຫ້ ແມ່ຍິງຕ້ອງມີຄວາມສ່ຽງດ້ານສຸຂະພາບ ແລະ ທຳລາຍຄວາມສາມາດຂອງແມ່ຍິງໃນການມີສ່ວນຮ່ວມ ໃນຊີວິດຄອບຄົວ ແລະ ຊີວິດຂອງສັງຄົມຢ່າງເທົ່າທຽມ.

## ຂໍ້ສະເໜີແນະສະເພາະດ້ານ

24. ຈາກຄວາມຕ່າງໆເຫລົ່ານີ້ ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ ສະເໜີແນະວ່າ:

(ກ). ລັດພາຄີຄວນດຳເນີນມາດຕະການທີ່ເໝາະສົມ ແລະ ມີປະສິດທິພາບໃນການແກ້ໄຂບັນຫາຄວາມຮຸນແຮງບົນພື້ນຖານທາງເພດທຸກຮູບແບບ ລວມທັງການກະທຳໃນສະຖານທີ່ສາທາລະນະ ແລະ ສ່ວນຕົວ.

(ຂ). ລັດພາຄີຄວນຮັບປະກັນວ່າກົດໝາຍຕ້ານການໃຊ້ຄວາມຮຸນແຮງ ແລະ ຄຸກຄາມກັນພາຍໃນຄອບຄົວ, ການຂົ່ມຂືນທຳຊຳເລົາ, ການທຳຮ້າຍທາງເພດ ແລະ ຄວາມຮຸນແຮງ ບົນພື້ນຖານທາງເພດຢ່າງອື່ນໆ ຈະໃຫ້ການຄຸ້ມຄອງແມ່ຍິງທຸກຄົນໄດ້ຢ່າງພຽງພໍ ແລະ ເຄົາລົບກຽດ ແລະ ສັກສີຂອງແມ່ຍິງ ແລະ ຄວນມີການໃຫ້ບໍລິການຄຸ້ມຄອງ ແລະ ສະໜັບສະໜູນທີ່ເໝາະສົມແກ່ຜູ້ທີ່ຕົກເປັນເຫຍື່ອ ນອກຈາກນີ້ ການອົບຮົມໃຫ້ເຈົ້າໜ້າທີ່ໃນຂະບວນການຍຸຕິທຳ ແລະ ຜູ້ຮັກສາກົດໝາຍຕະ

ຫລອດຈົນເຖິງເຈົ້າໜ້າທີ່ຂອງລັດອື່ນໆ ມີຄວາມລະອຽດອ່ອນຕໍ່ເລື່ອງເພດນັບເປັນສິ່ງຈຳເປັນສຳລັບການປະຕິບັດຕາມ ສົນທິສັນ ຍາ.

(ຄ). ລັດພາຄີຄວນສົ່ງເສີມໃຫ້ມີການຮວບຮວມສະຖິຕິ ແລະ ການວິໄຈເລື່ອງຂອບເຂດ, ສາເຫດ ຜົນຂອງຄວາມຮຸນແຮງ ລວມທັງເລື່ອງປະສິດທິພາບຂອງມາດຕະການຕ່າງໆ ໃນການປ້ອງກັນ ແລະ ຈັດ ການກັບຄວາມຮຸນແຮງ.

(ງ). ຄວນມີການດຳເນີນມາດຕະການທີ່ມີປະສິດທິພາບ ເພື່ອຮັບປະກັນວ່າສື່ໂຄສະນາຈະເຄົາລົບ ແລະ ສົ່ງເສີມການເຄົາລົບຕໍ່ແມ່ຍິງ.

(ຈ) ໃນລາຍງານຂອງລັດພາຄີ ຄວນຊີ້ໃຫ້ເຫັນເຖິງສະພາວະ ແລະ ຂອບເຂດຂອງທັດສະນະ, ຮີດຄອງ ແລະ ວິທີປະຕິບັດທີ່ເຮັດໃຫ້ຄວາມຮຸນແຮງຕໍ່ແມ່ຍິງຍັງຄົງຢູ່ ລວມເຖິງຊະນິດຂອງຄວາມຮຸນແຮງທີ່ເປັນຜົນຈາກສິ່ງເຫລົ່ານີ້, ລັດພາຄີຄວນລາຍງານເຖິງມາດຕະການທີ່ໄດ້ດຳເນີນການ ເພື່ອແກ້ໄຂປັນຫາຄວາມຮຸນແຮງ ແລະ ຜົນຂອງມາດຕະການເຫລົ່ານັ້ນ.

(ສ). ຄວນມີການດຳເນີນມາດຕະການທີ່ມີປະສິດທິພາບໃນການແກ້ໄຂທັດສະນະ ແລະ ການປະພຶດປະຕິບັດເຫລົ່ານັ້ນ ລັດຄວນລິເລີ່ມໂຄງການການສຶກສາ ແລະ ຂໍ້ມູນສາທາລະນະ ເພື່ອຊ່ວຍລົບລ້າງອັກຄະຕິກທີ່ເປັນອຸປະສັກຕໍ່ຄວາມສະເໝີພາບຂອງແມ່ຍິງ ( ຂໍ້ສະເໜີແນະ ລຳດັບທີ່ 3 ປີ ຄສ 1987).

(ຊ) ມາດຕະການປ້ອງກັນ ແລະ ລົງໂທດເປັນການສະເພາະເປັນສິ່ງຈຳເປັນໃນການແກ້ໄຂບັນຫາການຄ້າມະນຸດ ແລະ ການເອົາປຽບທາງເພດ.

(ຍ) ໃນລາຍງານລັດພາຄີຄວນບັນລະຍາຍເຖິງຂອບເຂດຂອງບັນຫາ ແລະ ມາດຕະການທັງໝົດລວມທັງບົດບັນຍັດລົງໂທດ ມາດຕະການປ້ອງກັນ ແລະການຟື້ນຟູ ທີ່ໄດ້ດຳເນີນການແລ້ວເພື່ອຄຸ້ມຄອງ ແມ່ຍິງທີ່ຢູ່ໃນກິດຈະກຳການຄ້າປະເວນີ ຫຼື ເປັນຜູ້ຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ການລ່ວງລະເມີດທາງເພດ ແລະ ຄວນມີການບັນລະຍາຍ ເຖິງປະສິດທິພາບຂອງມາດຕະການເຫລົ່ານີ້.

(ດ) ຄວນຈັດໃຫ້ມີຂັ້ນຕອນ ເພື່ອການສົ່ງເລື່ອງຮ້ອງຮຽນ ແລະ ການປິ່ນປົວ ລວມທັງການຈ່າຍຄ່າຊົດເຊີຍ.

(ຕ) ລັດພາຄີຄວນລະບຸເຖິງຂໍ້ມູນກ່ຽວກັບການລ່ວງລະເມີດ ແລະ ມາດຕະການເພື່ອການຄຸ້ມຄອງແມ່ຍິງຈາກການລ່ວງລະເມີດທາງເພດ ແລະ ຄວາມຮຸນແຮງ ຫຼື ການບັງຄັບຮູບແບບອື່ນໃນສະຖານທີ່ເຮັດວຽກໄວ້ໃນລາຍງານພ້ອມ.

(ຖ) ລັດພາຄີຄວນຈັດຕັ້ງ ຫຼື ສະໜັບສະໜູນບໍລິການສຳລັບຜູ້ຕົກເປັນເຫຍື່ອ ຄວາມຮຸນແຮງໃນຄອບຄົວ, ການຂົ່ມຂືນທຳຊຳເລົາ, ການທຳຮ້າຍທາງເພດ ແລະ ຄວາມຮຸນແຮງບົນພື້ນຖານ ທາງບົດບາດຍິງຊາຍໃນຮູບແບບອື່ນ ຊຶ່ງລວມເຖິງການໃຫ້ທີ່ພັກອາໄສ, ການມີບຸກຄະລາກອນດ້ານສຸຂະພາບທີ່ໄດ້ຮັບການອົບຮົມເປັນ ພິເສດ, ການຟື້ນຟູ ແລະ ໃຫ້ຄຳປຶກສາ.

(ທ). ລັດພາຄີຄວນດຳເນີນມາດຕະການ ເພື່ອແກ້ໄຂບັນຫາຄວາມຮຸນແຮງຕ່າງໆດັ່ງກ່າວ ແລະ ຄວນຄຳນຶງເຖິງຂໍ້ສະເໜີແນະຂອງຄະນະກຳມະການ ໃນເລື່ອງການຕັດອະໄວຍະວະເພດຍິງ ( ຂໍ້ສະເໜີແນະ ລຳດັບທີ່ 14) ໃນການເຮັດບົດລາຍງານປະເດັນກ່ຽວກັບສຸຂະພາບ.

(ນ). ລັດພາຄີຄວນຮັບປະກັນວ່າຈະມີການດຳເນີນມາດຕະການເພື່ອປ້ອງກັນການບັງຄັບ ໃນເລື່ອງທີ່ກ່ຽວກັບການຈະເລີນພັນ ແລະ ການມີລູກ ແລະຮັບປະກັນວ່າແມ່ຍິງຈະບໍ່ຖືກບັງຄັບ ໃຫ້ຕ້ອງເພິ່ງວິທີການ ທາງການແພດທີ່ບໍ່ປອດໄພເຊັ່ນ: ການຫລຸລູກທີ່ຜິດກົດໝາຍ ເນື່ອງຈາກຂາດການບໍລິການເພື່ອການຄວບ ຄຸມການຈະເລີນພັນທີ່ເໝາະສົມ.

(ບ) ລັດພາຄີຄວນລະບຸໃນບົດລາຍງານເຖິງຂອບເຂດຂອງບັນຫາເຫລົ່ານີ້ ແລະ ຊີ້ໃຫ້ເຫັນມາດຕະການທີ່ໄດ້ດຳເນີນການແລ້ວ ແລະ ຜົນຂອງມາດຕະການເຫລົ່ານັ້ນ ;

(ປ) ລັດພາຄີຄວນຮັບປະກັນວ່າແມ່ຍິງໃນຊົນນະບົດຈະສາມາດເຂົ້າເຖິງການບໍລິການຕ່າງໆ ສຳລັບຜູ້ຕົກເປັນເຫຍື່ອຂອງຄວາມຮຸນແຮງ ແລະ ຄວນຈັດໃຫ້ມີການບໍລິການພິເສດສຳລັບຊຸມຊົນ ທີ່ຢູ່ຫ່າງໄກ ໃນກໍລະນີທີ່ຈຳເປັນ;

(ຜ) ມາດຕະການເພື່ອຄຸ້ມຄອງແມ່ຍິງຈາກຄວາມຮຸນແຮງ ຄວນລວມເຖິງໂອກາດທີ່ຈະໄດ້ຮັບການຝຶກອົບຮົມ ແລະ ການມີວຽກເຮັດ ແລະ ການຕິດຕາມກວດສອບເງື່ອນໄຂການ ຈ້າງງານຂອງຄົນເຮັດວຽກບ້ານພ້ອມ.

(ຝ) ລັດພາຄີຄວນລາຍງານເລື່ອງຄວາມສ່ຽງທີ່ແມ່ຍິງຊົນນະບົດ ທີ່ຕ້ອງປະເຊີນກັບຂອບເຂດ ແລະ ສະຖານະການຂອງຄວາມຮຸນແຮງ ແລະ ການຄຸກຄາມທີ່ພວກເຂົາເຫລົ່ານັ້ນຕ້ອງ ປະເຊີນກັບຄວາມຕ້ອງການ ແລະ ການເຂົ້າເຖິງການສະໜັບສະໜູນ ແລະ ການບໍລິການອື່ນໆ ຄວາມມີປະສິດທິພາບຂອງມາດຕະການ ເພື່ອແກ້ໄຂບັນຫາຄວາມຮຸນແຮງ;

(ພ) ມາດຕະການທີ່ຈຳເປັນເພື່ອການແກ້ໄຂບັນຫາຄວາມຮຸນແຮງໃນຄອບຄົວ ຄວນລວມເຖິງ:

1. ໂທດທາງອາຍາໃນກໍລະນີທີ່ຈຳເປັນ ລວມທັງການຊົດໃຊ້ທາງແພ່ງ ເມື່ອເກີດກໍລະນີຄວາມຮຸນແຮງໃນຄອບຄົວ;
2. ກົດໝາຍທີ່ຍົກເລີກຂໍ້ອ້າງເລື່ອງການປົກປ້ອງກຽດຕິຍົດໃນກໍລະນີກ່ຽວກັບການທຳຮ້າຍ ແລະ ການຄາດຕະກຳສະມາຊິກຄອບຄົວທີ່ເປັນແມ່ຍິງ;

3. ບໍລິການເພື່ອຮັບປະກັນຄວາມປອດໄພ ແລະສະຫວັດດີພາບຂອງຜູ້ຕົກເປັນເຫຍື່ອຄວາມຮຸນແຮງໃນຄອບຄົວ ລວມເຖິງການໃຫ້ທີ່ພັກພາອາໄສ ການໃຫ້ຄຳປຶກສາ ແລະ ໂຄງການຟື້ນຟູ;
4. ໂຄງການຟື້ນຟູສຳລັບຜູ້ກໍ່ຄວາມຮຸນແຮງໃນຄອບຄົວ;
5. ບໍລິການໃຫ້ການສະໜັບສະໜູນສຳລັບຄອບຄົວທີ່ປະເຊີນບັນຫາກັບ ການຂົ່ມຂືນທຳຊຳເລົາ ແລະ ການລວນລາມທາງເພດໃນຄອບຄົວ;

(ຟ) ລັດພາຄີຄວນລາຍງານເຖິງຂອບເຂດຂອງຄວາມຮຸນແຮງ ແລະ ການລວນລາມທາງເພດໃນຄອບຄົວ ແລະ ມາດຕະການເພື່ອປ້ອງກັນ ລົງໂທດ ແລະ ຮັກສາທີ່ໄດ້ດຳເນີນການແລ້ວ;

(ມ) ລັດພາຄີຄວນດຳເນີນມາດຕະການ ທັ້ງທາງດ້ານກົດໝາຍ ແລະ ມາດຕະການອື່ນໆ ທຸກຢ່າງທີ່ຈຳເປັນ ເພື່ອໃຫ້ການຄຸ້ມຄອງທີ່ມີປະສິດທິພາບໃຫ້ແມ່ຍິງຫຼຸດພົ້ນຈາກຄວາມຮຸນແຮງ ບົນພື້ນຖານທາງເພດ ຊຶ່ງສ່ວນໜຶ່ງຂອງມາດຕະການເຫລົ່ານີ້ໄດ້ແກ່:

1. ມາດຕະການທາງກົດໝາຍທີ່ມີປະສິດທິພາບ ລວມເຖິງການດຳເນີນການທາງອາຍາ, ການຊົດໃຊ້ ທາງແພ່ງ ແລະ ການຈ່າຍຄ່າຊົດເຊີຍ ເພື່ອຄຸ້ມຄອງແມ່ຍິງຈາກ ຄວາມຮຸນແຮງທຸກປະເພດ ຊຶ່ງສ່ວນໜຶ່ງ ໄດ້ແກ່ຄວາມຮຸນແຮງ ແລະ ການຄຸກຄາມໃນຄອບຄົວ, ການທຳຮ້າຍທາງເພດ ແລະ ການລ່ວງລະເມີດ ທາງເພດໃນສະຖານທີ່ເຮັດວຽກ;
2. ມາດຕະການປ້ອງກັນລວມເຖິງໂຄງການເຜີຍແຜ່ຂໍ້ມູນສາທາລະນະ ແລະ ການສຶກສາເພື່ອປ່ຽນແປງທັດສະນະຄະຕິ ກ່ຽວກັບບົດບາດ ແລະ ສະຖານະພາບຂອງແມ່ຍິງ ແລະ ຜູ້ຊາຍ;
3. ມາດຕະການປ້ອງກັນລວມເຖິງການໃຫ້ທີ່ພັກພາອາໄສ, ການໃຫ້ຄຳປຶກສາ, ການຟື້ນຟູ ແລະ ບໍລິການໃຫ້ການສະໜັບສະໜູນ ສຳລັບແມ່ຍິງທີ່ເປັນເຫຍື່ອຂອງຄວາມຮຸນແຮງ ມີຄວາມສ່ຽງຕໍ່ພາວະຄວາມຮຸນແຮງ;

(ຢ) ລັດພາຄີຄວນລາຍງານເຖິງຄວາມຮຸນແຮງບົນພື້ນຖານທາງເພດທຸກຮູບແບບ ແລະ ການລາຍງານເຫລົ່ານີ້ ຄວນລະບຸເຖິງຂໍ້ມູນທີ່ມີຢູ່ກ່ຽວກັບປາກົດການຄວາມຮຸນແຮງແຕ່ລະຮູບແບບ ແລະ ຜົນຂອງຄວາມຮຸນແຮງດັ່ງກ່າວຕໍ່ແມ່ຍິງຜູ້ຕົກເປັນເຫຍື່ອ;

(ລ) ລາຍງານຂອງລັດພາຄີຄວນລະບຸເຖິງຂໍ້ມູນກ່ຽວກັບມາດຕະການທາງກົດໝາຍ, ການປ້ອງກັນ ແລະ ການຄຸ້ມຄອງທີ່ໄດ້ດຳເນີນການແລ້ວ ເພື່ອແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ ລວມປະສິດທິຜົນຂອງມາດຕະການເຫລົ່ານັ້ນ.

## GR20

## ຂໍ້ສະເໜີແນະທົ່ວໄປ ລຳດັບ 20
## ການຕັ້ງຂໍ້ສະຫງວນຕໍ່ສົນທິສັນຍາ
ກອງປະຊຸມສະໄໝທີ ສິບເອັດ (1992)

1. ຄະນະກຳມະການໄດ້ຄຳນຶງເຖິງການຕັດສິນໃຈຂອງກອງປະຊຸມຂອງລັດພາຄີ ຄັ້ງທີສີ່ ກ່ຽວກັບຂໍ້ສະຫງວນຕໍ່ສົນທິສັນຍາ ຕາມມາດຕາ 28.2 ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ສະເໜີແນະທົ່ວໄປ ລຳດັບທີ່ 4 ຂອງຄະນະກຳມະການ;

2. ຄະນະກຳມະການສະເໜີແນະວ່າໃນສ່ວນທີ່ກ່ຽວກັບການກະກຽມເພື່ອກອງປະຊຸມລະດັບໂລກວ່າດ້ວຍສິດທິມະນຸດໃນປີ ຄສ 1993 ລັດພາຄີຄວນ:

(ກ) ຍົກເອົາປະເດັນກ່ຽວກັບຄວາມຖືກຕ້ອງຕາມກົດໝາຍ ແລະ ຜົນທາງກົດໝາຍຂອງຂໍ້ສະຫງວນຕໍ່ສົນທິສັນຍາສະບັບນີ້ໃນຫົວຂໍ້ຂອງຂໍ້ສະຫງວນຕໍ່ຂໍ້ຕົກລົງ ວ່າດ້ວຍສິດທິມະນຸດສະບັບອື່ນໆ;

(ຂ) ການພິຈາລະນາຂໍ້ສະຫງວນເຫລົ່ານັ້ນອີກເທື່ອໜຶ່ງ ໂດຍຄຳນຶງເຖິງການເສີມສ້າງຄວາມເຂັ້ມແຂງ ໃຫ້ກັບການປະຕິບັດຕາມຂໍ້ຕົກລົງ ວ່າດ້ວຍສິດທິມະນຸດສະບັບອື່ນໆ;

(ຄ) ພິຈາລະນາດຳເນີນການຕາມຂັ້ນຕອນ ກ່ຽວກັບການຕັ້ງຂໍ້ສະຫງວນຕໍ່ສົນທິສັນຍານີ້ ໂດຍປຽບທຽບກັບຂໍ້ຕົກລົງວ່າດ້ວຍສິດທິມະນຸດສະບັບອື່ນໆ.

## GR21
## ຂໍ້ສະເໜີແນະທົ່ວໄປ ລຳດັບທີ 21
## ຄວາມສະເໝີພາບໃນການແຕ່ງດອງ ແລະ ຄວາມສຳພັນໃນຄອບຄົວ
ກອງປະຊຸມສະໄໝທີ ສິບສາມ ( 1994 )

1. ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ( ມະຕິສະມັດໃຫຍ່ຊາຊາດທີ່ 34/180 ຄັດຕິດ) ຢັ້ງຢືນຄວາມສະເໝີພາບດ້ານສິດທິມະນຸດຂອງແມ່ຍິງ ແລະ ຜູ້ຊາຍ ໃນສັງຄົມ ແລະ ໃນຄອບຄົວ, ສົນທິສັນຍາສະບັບນີ້ນັບວ່າມີຄວາມສຳຄັນ ໃນຖານະເປັນໜຶ່ງໃນຂໍ້ຕົກລົງລະຫວ່າງປະເທດ ທີ່ກ່ຽວກາບສິດທິມະນຸດ.

2. **ສົນທິສັນຍາ ແລະ ຖະແຫຼງການ ສະບັບອື່ນໆ**

ໄດ້ໃຫ້ຄວາມສຳຄັນຢ່າງຫລວງຫຼາຍກັບຄອບຄົວ ແລະ ສະຖານະພາບຂອງແມ່ຍິງ ໃນຄອບຄົວ ເຊັ່ນກັນ ເອກະສານເຫລົ່ານີ້ ລວມເຖິງແຫລງການສາກົນວ່າດ້ວຍສິດທິມະນຸດ (ມະຕິສະມັດຊາ ສະຫະປະ ຊາຊາດທີ່ 217/A (III) ກະຕິກາລະຫວ່າງປະເທດ ວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການ ເມືອງ (ມະຕິທີ່ 2200/A (XXI) ຄັດຕິດ ) ສົນທິສັນຍາວ່າດ້ວຍສັນຊາດຂອງແມ່ ຍິງທີ່ມີຄອບຄົວແລ້ວ (ມະຕິທີ່ 1040 (XI) ຄັດຕິດ) ສົນທິສັນຍາວ່າດ້ວຍການເຫັນດີໃນການສ້າງ ຄອບຄົວອາຍຸຂັ້ນຕ່ຳ ສຳລັບການສ້າງຄອບຄົວ ແລະ ການຈົດທະບຽນການແຕ່ງດອງ ( ມະຕິທີ່ 1763 A (XVII) ຄັດຕິດ) ແລະ ຂໍ້ສະເໜີແນະສືບຕໍ່ຂອງສົນທິສັນຍາດັ່ງກ່າວ (ມະຕິທີ່ 2018 ອ (XX) ແລະ ຍຸດທະສາດ ໄນໂລບີ ເພື່ອຄວາມກ້າວໜ້າຂອງແມ່ຍິງ ;

3. ສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ໄດ້ຄຳນຶງເຖິງສິດທີ່ບໍ່ສາ ມາດປະຕິເສດໄດ້ຂອງແມ່ຍິງຕາມທີ່ມີປາກົດຢູ່ແລ້ວໃນສົນທິສັນຍາ ແລະ ຖະແຫລງການຕ່າງໆ ທີ່ໄດ້ກ່າວມາຂ້າງເທິງ ແຕ່ສົນທິສັນຍາສະບັບນີ້ກ້າວໜ້າຕໍ່ໄປອີກ ໂດຍການຄຳນຶງຄວາມສຳຄັນ ຂອງວັດ ທະນະທຳ ແລະ ປະເພນີໃນການສ້າງຄວາມຄິດ ແລະ ພຶດຕິກຳຂອງແມ່ຍິງ ແລະ ຜູ້ຊາຍ ແລະ ບົດ ບາດທີ່ສຳ ຄັນຂອງວັດທະນະທຳ ແລະ ປະເພນີໃນການຈຳກັດການໃຊ້ສິດຂັ້ນພື້ນຖານ ຂອງແມ່ຍິງ;

## ຄວາມເປັນມາ

4. ສະມັດຊາໃຫຍ່ສະຫະປະຊາຊາດໄດ້ມີມະຕິທີ່ 44/82 ກຳນົດໃຫ້ປີ ຄສ 1994 ເປັນປີຄອບຄົວ ສາກົນ ຄະນະກຳມະການຈຶ່ງຖືໂອກາດນີ້ເໜັ້ນໜັກເຖິງຄວາມສຳຄັນ ຂອງການປະຕິບັດຕາມ ຫຼັກການສິດທິຂັ້ນພື້ນຖານຂອງແມ່ຍິງໃນຄອບຄົວ ໂດຍໃຫ້ເປັນມາດຕະການໜຶ່ງ ທີ່ສະໜັບສະ ໜູນ ແລະ ສົ່ງເສີມການ ສະເຫຼີມສະຫລອງລະດັບຊາດທີ່ຈະມີຂຶ້ນ;

5. ຈາກການທີ່ໄດ້ເລືອກແລ້ວວ່າຈະສະຫລອງປີຄອບຄົວສາກົນ ຕາມແນວທາງດັ່ງທີ່ກ່າວມາຄະນະ ນະກຳມະການຈຶ່ງໄດ້ຮ້ອງຂໍວິເຄາະເນື້ອຄວາມໃນ 3 ມາດຕາຂອງສົນທິສັນຍານີ້ ຊຶ່ງຖືໄດ້ວ່າມີ ຄວາມສຳຄັນເປັນພິເສດຕໍ່ສະຖານະພາບຂອງແມ່ຍິງໃນຄອບຄົວ.

## ມາດຕາ 9

1. ລັດພາຄີຈະໃຫ້ແມ່ຍິງມີສິດສະເໝີພາບກັບຜູ້ຊາຍ ໃນການທີ່ຈະໄດ້ມາ, ປ່ຽນແປງ ຫຼື ຮັກສາໄວ້ຊຶ່ງ ສັນຊາດຂອງຕົນ ລັດພາຄີຈະຮັບປະກັນເປັນພິເສດວ່າ ທັງການແຕ່ງດອງກັບຄົນຕ່າງປະເທດ ຫຼື ການປ່ຽນແປງສັນຊາດຂອງຜົວລະຫວ່າງທີ່ແຕ່ງດອງແລ້ວ ຈະບໍ່ເຮັດໃຫ້ສັນຊາດຂອງເມັຍປ່ຽນໄປ ໂດຍອັດ ຕະໂນມັດ ຊຶ່ງເຮັດໃຫ້ລາວເປັນຄົນບໍ່ມີສັນຊາດ ຫຼື ບັງຄັບໃຫ້ລາວຕ້ອງຖືສັນຊາດນຳຜົວ;

2. ລັດພາຄີຈະໃຫ້ແມ່ຍິງມີສິດສະເໝີພາບກັບຜູ້ຊາຍ ໃນເລື່ອງກ່ຽວກັບສັນຊາດຂອງລູກຂອງຕົນ;

## ຄວາມເຫັນ

6. ສັນຊາດເປັນສິ່ງທີ່ສຳຄັນທີ່ສຸດ ສຳລັບການມີສ່ວນຮ່ວມທາງສັງຄົມຢ່າງເຕັມສ່ວນ ໂດຍທົ່ວໄປ ລັດຈະມອບສັນຊາດໃຫ້ແກ່ບຸກຄົນທີ່ເກີດໃນປະເທດນັ້ນໆສັນຊາດອາດເປັນສິ່ງທີ່ໄດ້ມາດ້ວຍເຫດຜົນ ຂອງການຕັ້ງຖິ່ນຖານ ຫຼື ມອບໃຫ້ດ້ວຍເຫດຜົນດ້ານມະເຊັ່ນ: ໃນສະພາບ ທີ່ບໍ່ມີລັດທັງນີ້ໃນສະພາບທີ່ປາສະຈາກສະຖານະພາບໃນດ້ານສັນຊາດ ຫລື ຄວາມເປັນພົນລະເມືອງແມ່ຍິງຍ່ອມຖືກຕັດຮອນສິດ ໃນການອອກສຽງເລືອກຕັ້ງ, ການຮັບຕຳແໜ່ງທາງການ ແລະ ອາດຖືກປະເສດການເຂົ້າເຖິງປະໂຫຍດທາງສັງຄົມ ແລະ ທາງເລືອກໃນດ້ານສະຖານທີ່ອາໄສ ແມ່ຍິງໃນໄວຜູ້ໃຫຍ່ຄວນຈະສາມາດຂໍປ່ຽນ ສັນຊາດໄດ້ ແລະ ສັນຊາດກໍບໍ່ຄວນຖືກຖອດຖອນ ເພາະການແຕ່ງດອງ ຫຼື ການຍົກເລີກການແຕ່ງດອງ ຫຼື ເພາະຜູ້ເປັນຜົວ ຫຼື ພໍ່ ໄດ້ປ່ຽນສັນຊາດຂອງຕົນໄປ;

## ມາດຕາ 15

1. ລັດພາຄີຈະໃຫ້ແມ່ຍິງມີສິດສະເໝີພາບກັບຜູ້ຊາຍໃນທາງກົດໝາຍ;
2. ໃນກໍລະນີທາງແພ່ງ ລັດພາຄີຈະໃຫ້ແມ່ຍິງມີຄວາມສາມາດຕາມກົດໝາຍເຊັ່ນດຽວກັບຜູ້ຊາຍ ແລະ ຈະໃຫ້ໂອກາດເຊັ່ນດຽວກັນໃນການໃຊ້ຄວາມາສາມາດນັ້ນ ໂດຍສະເພາະຢ່າງຍິ່ງ ລັດພາຄີ ຈະໃຫ້ສິດທິເທົ່າທຽມແກ່ແມ່ຍິງໃນການເຮັດສັນຍາ ແລະ ການຈັດການກັບຊັບສິນບັດ ແລະ ຈະປະຕິບັດກັບແມ່ຍິງຢ່າງສະເໝີພາບໃນທຸກຂັ້ນຕອນຂອງຂະບວນການຂອງສານ ແລະ ການສືບສວນສອບສວນຄະດີ.

3. ລັດພາຄີຕົກລົງວ່າສັນຍາທັງຫຼາຍ ແລະ ເອກະສານສ່ວນບຸກຄົນອື່ນໆ ທັງໝົດທຸກຊະນິດທີ່ມີຜົນຕາມກົດໝາຍ ຊຶ່ງມີຈຸດປະສົງຈຳກັດຄວາມສາມາດໃນທາງກົດໝາຍຂອງແມ່ຍິງ ຈະຖືວ່າບໍ່ມີຜົນ ແລະ ເປັນໂມຄະ;
4. ລັດພາຄີຈະໃຫ້ແມ່ຍິງ ແລະ ຜູ້ຊາຍມີສິດເຊັ່ນດຽວກັນໃນເລື່ອງກົດໝາຍ ທີ່ກ່ຽວກັບການເດີນທາງ, ເຄື່ອນຍ້າຍຂອງບຸກຄົນ ແລະ ເສລີພາບໃນການເລືອກທີ່ຢູ່ອາໄສ ແລະ ພູມລຳເນົາ.

## ຄວາມເຫັນ:

7. ໃນກໍລະນີທີ່ແມ່ຍິງບໍ່ສາມາດເຮັດສັນຍາໃດໆ ຫຼື ບໍ່ສາມາດເຂົ້າເຖິງສິນເຊື່ອທາງການເງິນ ຫຼື ຈຳ

ເປັນຕ້ອງໄດ້ຮັບການຍິນຍອມ ຫຼື ການຮັບປະກັນຈາກຜົວ ຫຼື ຍາດພີ່ນ້ອງທີ່ເປັນຜູ້ຊາຍ ຍ່ອມໝາຍເຖິງວ່າແມ່ຍິງຜູ້ນັ້ນຖືກປະຕິເສດສິດໃນຕົນເອງຕາມກົດໝາຍ ຂໍ້ຫ້າມດັ່ງກ່າວເຮັດໃຫ້ແມ່ຍິງບໍ່ສາມາດ ຄຸ້ມຄອງຊັບສິນ ໃນຖານະເປັນຜູ້ມີກຳມະສິດໂດຍສົມບູນ ແລະ ຂັດຂວາງລາວອອກຈາກການຈັດ ການທຸລະກິດຂອງຕົນເອງຕາມກົດໝາຍ ຫຼື ການເຮັດສັນຍາທຸກຮູບແບບຂໍ້ຫ້າມເຊັ່ນນີ້ເປັນການຈຳ ກັດຄວາມສາມາດຂອງແມ່ຍິງ ໃນການຫາລ້ຽງຊີບຕົນເອງ ແລະ ບຸກຄົນໃນຄວາມດູແລຢ່າງຮ້າຍແຮງ;

8. ໃນບາງປະເທດສິດທິຂອງແມ່ຍິງ ໃນການຍື່ນຄຳຮ້ອງຟ້ອງຕໍ່ສານຍັງຖືກຈຳກັດໂດຍກົດໝາຍ ຫຼື ໂອກາດຂອງລາວໃນການໄດ້ຮັບຄຳປຶກສາທາງກົດໝາຍ ແລະ ການຂາດຄວາມສາມາດໃນການຮຽກຮ້ອງເອົາຄ່າຊົດເຊີຍຄວາມເສຍຫາຍຈາກສານ, ສ່ວນໃນບາງປະເທດສະຖານະພາບຂອງແມ່ຍິງໃນຖານະເປັນພະຍານ ຫຼື ຫຼັກຖານທີ່ເປັນຍິງເປັນຜູ້ຍົກຂຶ້ນມາມັກ ໄດ້ຮັບການຕີຄ່າໃຫ້ມີນໍ້າໜັກໜ້ອຍ ກວ່າສະຖານະພາບ ຫຼື ຫລັກຖານຂອງຜູ້ຊາຍ, ກົດໝາຍ ຫຼື ຮີດຄອງປະເພນີເຊັ່ນນີ້ຈຳກັດສິດຂອງ ແມ່ຍິງ ທີ່ຈະຮຽກຮ້ອງ ຫຼື ຮັກສາສ່ວນແບ່ງຊັບສິນໄດ້ຢ່າງສະເໝີພາບ ແລະ ຍັງທຳລາຍສະຖານະພາບຂອງລາວ ໃນຖານະເປັນສະມາຊິກຂອງຊຸມຊົນທີ່ເພິ່ງຕົນເອງໄດ້ມີຄວາມຮັບຜິດຊອບ ແລະ ມີຄຸນຄ່າ ລັດໃດທີ່ມີກົດໝາຍຊຶ່ງຈຳກັດຄວາມສາມາດໃນທາງກົດໝາຍຂອງແມ່ຍິງ ຫຼື ເຫັນດີໃຫ້ບຸກຄົນ ຫຼື ສະຖາບັນຕ່າງໆປະຕິບັດການເຊັ່ນນັ້ນ ລັດນັ້ນກຳລັງປະຕິເສດບໍ່ໃຫ້ ແມ່ຍິງມີສິດສະເໝີພາບກັບ ຜູ້ຊາຍ ແລະ ຈຳກັດຄວາມສາມດຂອງແມ່ຍິງ ໃນການລ້ຽງດູຕົນເອງ ແລະ ບຸກຄົນພາຍໃຕ້ຄວາມດູແລ ຂອງຕົນເອງ;

9. ພູມລຳເນົາເປັນແນວຄິດຂອງປະເທດທີ່ກົດໝາຍໃນລະບອບ ຄອມມອນລໍ ໂດຍມີຄວາມໝາຍເຖິງປະເທດທີ່ບຸກຄົນຕັ້ງໃຈຈະຢູ່ອາໄສ ແລະ ຍອມຮັບອຳນາດສານຂອງປະເທດນັ້ນ ພູມລຳເນົາຂອງເດັກນ້ອຍຈະຖືກກຳນົດໃນເບື້ອງຕົ້ນຜ່ານທາງພໍ່ແມ່ ແຕ່ສຳລັບຜູ້ໃຫຍ່ ພູມລຳເນົາໝາຍເຖິງປະເທດທີ່ ບຸກຄົນຢູ່ອາໄສເປັນປົກກະຕິ ແລະ ຕັ້ງໃຈຈະອາໄສຢູ່ຕະຫລອດໄປ ຈາກການກວດສອບຈາກການລາຍງານຂອງລັດພາຄີ ໄດ້ພົບກໍລະນີທີ່ຄືກັນກັບເລື່ອງສັນຊາດ ກ່າວຄືກົດໝາຍບໍ່ໄດ້ອະນຸຍາດໃຫ້ ແມ່ຍິງເລືອກພູມລຳເນົາຂອງຕົນເອງໄດ້ສະເໝີໄປ ແຕ່ກໍເຊັ່ນດຽວກັບເລື່ອງສັນຊາດ ແມ່ຍິງໃນໄວຜູ້ໃຫຍ່ ຄວນຈະສາມາດປ່ຽນແປງພູມລຳເນົາໄດ້ຕາມເຈດຕະນາຂອງຕົນ ໂດຍບໍ່ຂຶ້ນຢູ່ກັບສະຖານະພາບການມີຄອບຄົວ ຂໍ້ຫ້າມບໍ່ໃຫ້ແມ່ຍິງມີສິດເລືອກພູມລຳເນົາໄດ້ເຊັ່ນດຽວກັບຜູ້ຊາຍ ອາດຈຳກັດ ການທີ່ແມ່ຍິງຈະເຂົ້າເຖິງສານຍຸຕິທຳໃນປະເທດທີ່ລາວອາໄສຢູ່ ຫຼື ເຮັດໃຫ້ລາວບໍ່ສາມາດເຂົ້າ ຫຼື ອອກຈາກປະເທດໃດປະເທດໜຶ່ງໄດ້ໂດຍເສລີຕາມສິດທີ່ລາວມີ;

10. ແມ່ຍິງຜູ້ຍ້າຍຖິ່ນຖານທີ່ອາໄສຢູ່ ແລະ ເຮັດວຽກຊົ່ວຄາວຢູ່ໃນອີກປະເທດໜຶ່ງ ຄວນໄດ້ຮັບອະນຸຍາດໃຫ້ມີສິດເຊັ່ນດຽວກັບຜູ້ຊາຍ ໃນການໃຫ້ຄູ່ຜົວເມຍ ຫຼື ຄູ່ຄອງ ແລະ ລູກ ຕິດຕາມມາອາໄສຢູ່ຮ່ວມກັນ;

## ມາດຕາ 16

1. ລັດພາຄີຈະໃຊ້ມາດຕະການທີ່ເໝາະສົມທັງຫລາຍ ໃນການລົບລ້າງການຈຳແນກຕໍ່ແມ່ຍິງໃນທຸກເລື່ອງທີ່ກ່ຽວກັບການແຕ່ງດອງ (ການສ້າງຄອບຄົວ) ແລະ ຄວາມສຳພັນໃນຄອບຄົວ ແລະ ໂດຍສະເພາະຢ່າງຍິ່ງຈະຮັບປະກັນບົນພື້ນຖານຂອງຄວາມສະເໝີພາບຂອງແມ່ຍິງ ແລະ ຜູ້ຊາຍໃນສິດທິຕໍ່ໄປນີ້:

(ກ) ສິດທິເຊັ່ນດຽວກັນໃນ( ການແຕ່ງດອງ) ສ້າງຄອບຄົວ

(ຂ) ສິດທິເຊັ່ນດຽວກັນໃນການເລືອກຄູ່ຄອງ ແລະ ການຈັດການແຕ່ງດອງຢ່າງອິດສະຫຼະ ແລະ ດ້ວຍຄວາມເຫັນດີຢ່າງເປັນອິດສະຫຼະ ແລະ ດ້ວຍຄວາມພໍໃຈເທົ່ານັ້ນ;

(ຄ) ສິດທິ ແລະ ຄວາມຮັບຜິດຊອບເຊັ່ນດຽວກັນ ໃນລະຫວ່າງທີ່ຍັງເປັນຜົວເມຍກັນ ແລະ ເມື່ອຕັດຂາດຈາກການເປັນຜົວເມຍ;

(ງ) ສິດທິ ແລະ ຄວາມຮັບຜິດຊອບເຊັ່ນດຽວກັນ ໃນຖານະເປັນພໍ່ແມ່ ໃນເລື່ອງທີ່ກ່ຽວກັບລູກຂອງຕົນ ໃນນີ້ໂດຍບໍ່ຕ້ອງຄຳນຶງເຖິງສະຖານະພາບການມີຄອບຄົວຂອງແຕ່ລະຝ່າຍ ແລະ ໃນທຸກກໍລະນີຜົນປະໂຫຍດຂອງລູກແມ່ນຖືວ່າເປັນສຳຄັນທີ່ສຸດ;

(ຈ) ສິດທິເຊັ່ນດຽວກັນໃນການຕັດສິນໃຈຢ່າງເປັນອິດສະຫລະ ແລະ ມີຄວາມຮັບຜິດຊອບໃນເລື່ອງຈຳນວນ ແລະໄລຍຫ່າງໃນການມີລູກຂອງຕົນ ແລະໃຫ້ສາມາດເຂົ້າເຖິງຂໍ້ມູນ ການສຶກສາ ແລະ ວິທີທີ່ຈະເຮັດໃຫ້ແມ່ຍິງໃຊ້ສິດເຫລົ່ານີ້ໄດ້;

(ສ) ສິດທິ ແລະ ຄວາມຮັບຜິດຊອບເຊັ່ນດຽວກັນໃນເລື່ອງການປົກຄອງລູກ, ການປົກປ້ອງ ລູກ, ການໄດ້ຮັບການມອບໝາຍໃຫ້ເບິ່ງແຍງລູກ ແລະການຮັບເອົາລູກລ້ຽງ ຫຼື ແນວທາງປະຕິບັດໃນຮູບແບບດຽວກັນ ໃນກໍລະນີທີ່ມີແນວຄວາມຄິດເຫລົ່ານີ້ຢູ່ໃນກົດໝາຍຂອງປະເທດ ແລະ ໃນທຸກກໍລະນີຜົນປະໂຫຍດຂອງລູກ ແມ່ນຖືເປັນສິ່ງສຳແຄັນສູງສຸດ;

(ຊ) ສິດທິສ່ວນບຸກຄົນເຊັ່ນດຽວກັນໃນຖານະຜົວ ແລະ ເມຍ ລວມເຖິງສິດທິໃນການເລືອກໃຊ້ນາມສະກຸນ ແລະ ການປະກອບອາຊີບ;

(ຍ) ສິດທິເຊັ່ນດຽວກັນສຳລັບຄູ່ຜົວເມຍທັງສອງ ໃນສ່ວນທີ່ກ່ຽວກັບການເປັນເຈົ້າຂອງ, ການໄດ້ມາ, ການຈັດການບໍລິຫານ, ການອຸປະໂພກ ແລະການຂາຍຊັບສິນ ບໍ່ວ່າຈະບໍ່ຄິດມູນຄ່າ ຫຼື ເພື່ອຕີລາຄາມູນຄ່າກໍຕາມ;

2. ການຮັບໝັ້ນໝາຍ ແລະ ການແຕ່ງດອງຂອງເດັກ ຈະບໍ່ມີຜົນທາງກົດໝາຍ ແລະ ຈະຕ້ອງມີການດຳເນີນການທີ່ຈຳເປັນທັງຫລາຍ ລວມເຖິງການບັນຍັດໃນກົດໝາຍ ເພື່ອລະບຸອາຍຸຂັ້ນຕ່ຳ ສຳລັບການແຕ່ງດອງ ແລະ ເພື່ອບັງຄັບໃຫ້ມີການຈົດທະບຽນສ້າງຄອບຄົວ ໃນຫ້ອງການຈົດທະບຽນຂອງທາງລັດຖະການ.

**ຄວາມເຫັນ**

## ຊີວິດທາງສັງຄົມ ແລະ ຊີວິດສ່ວນຕົວ

11. ໃນທາງປະຫວັດສາດ ກິດຈະກຳທີ່ສັງຄົມ ແລະຊີວິດສ່ວນຕົວຂອງມະນຸດມັກຖືກເບິ່ງວ່າມີຄວາມແຕກຕ່າງກັນ ແລະມີການອອກກົດເກນ(ລະບຽບ) ຄວບຄຸມຕາມຄວາມແຕກຕ່າງກັນ ໃນທຸກສັງຄົມ ກິດຈະກຳຂອງແມ່ຍິງ ຊຶ່ງມີບົດບາດຕາມປະເພນີໃນສະຖານທີ່ສ່ວນຕົວ ຫຼື ໃນເຮືອນ ມັກຖືກຖືວ່າເປັນສິ່ງທີ່ບໍ່ມີຄຸນຄ່າມາເປັນເວລາດົນນານ;

12. ແຕ່ໃນເມື່ອກິດຈະກຳດັ່ງກ່າວມີຄຸນຄ່າຢ່າງຫລວງຫລາຍ ຕໍ່ການດຳລົງຊີວິດຢູ່ຂອງສັງຄົມ ຈຶ່ງບໍ່ມີອັນເຫດທີ່ຈະເລືອກໃຊ້ກົດໝາຍ ຫຼື ຮີດຄອງທີ່ແຕກຕ່າງ ແລະການຈຳແນກທີ່ຈະປະຕິບັດຕໍ່ກິດຈະກຳເຫລົ່ານີ້ ລາຍງານຂອງລັດພາຄີສະແດງໃຫ້ເຫັນວ່າມີບາງປະເທດທີ່ຍັງບໍ່ມີຄວາມສະເໝີພາບຕາມກົດໝາຍແມ່ຍິງຈຶ່ງຍັງຕ້ອງຖືກຂັດຂວາງຈາກການເຂົ້າເຖິງຊັບພະຍາກອນຢ່າງສະເໝີພາບ ແລະເຖິງແມ່ນວ່າໃນປະເທດທີ່ມີຄວາມສະເໝີພາບຕາມກົດໝາຍ ແຕ່ທຸກສັງຄົມກໍໄດ້ກຳນົດບົດບາດທີ່ແຕກຕ່າງ ແລະ ຖືກເບິ່ງວ່າບໍ່ມີຄຸນຄ່າແກ່ແມ່ຍິງ ດ້ວຍເຫດຫລັກການເລື່ອງຄວາມຍຸຕິທຳ ແລະ ຄວາມສະເໝີພາບ ໂດຍສະເພາະຢ່າງຍິ່ງຕາມທີ່ໄດ້ລະບຸໃນມາດຕາ 16 ແລະ ໃນມາດຕາ 2, 5 ແລະ 24 ຂອງສົນທິສັນຍານີ້ອາດຈະຍັງຖືກລະເມີດ;

## ຮູບແບບທີ່ຫລາກຫລາຍຂອງຄອບຄົວ

13. ຮູບແບບ ແລະ ແນວຄິດກ່ຽວກັບຄອບຄົວ ອາດມີຄວາມແຕກຕ່າງກັນໄປໃນແຕ່ລະລັດ ແລະລວມທັງໃນແຕ່ລະທ້ອງຖິ່ນຂອງລັດໜຶ່ງໆອີກ ແຕ່ວ່າໃນຄອບຄົວຈະມີຮູບແບບແນວໃດ ແລະ ບໍ່ວ່າປະເທດນັ້ນໆຈະມີລະບົບກົດໝາຍ, ສາສະໜາ, ຮີດຄອງ ຫຼື ປະເພນີຢ່າງໃດກໍຕາມການປະຕິບັດຕໍ່ແມ່ຍິງໃນຄອບຄົວ ໂດຍທາງກົດໝາຍ ແລະ ໃນຊີວິດສ່ວນບຸກຄົນ ຕ້ອງສອດຄ່ອງກັບຫລັກການເລື່ອງຄວາມສະເໝີພາບ ແລະຍຸຕິທຳສຳລັບຄົນທຸກຄົນດັ່ງທີ່ໄດ້ລະບຸໄວ້ໃນມາດຕາ 2 ຂອງສົນທິສັນຍາ;

## ການແຕ່ງດອງແບບເອົາຫລາຍ ຜົວ, ເມຍ ( ມີຜົວ ຫຼື ເມຍຫລາຍຄົນ )

14. ລາຍງານຂອງລັດພາຄີສະແດງໃຫ້ເຫັນວ່າ ການມີຄວາມສຳພັນແບບຫລາຍຜົວ,ເມຍ ຍັງເປັນສິ່ງທີ່ປະຕິບັດຢູ່ໃນຫລາຍປະເທດ ການແຕ່ງດອງແບບມີຫລາຍຜົວ,ເມຍນີ້ ແມ່ນຂັດກັບສິດທິຂອງແມ່ຍິງທີ່ຈະໄດ້ຮັບຄວາມສະເໝີພາບເຊັ່ນດຽວກັນກັບຜູ້ຊາຍ ແລະອາດຈະສົ່ງຜົນຮ້າຍແຮງຕໍ່ກັບສະພາບອາລົມ ແລະ ຖານະທາງດ້ານການເງິນຂອງແມ່ຍິງ ແລະຜູ້ທີ່ຢູ່ພາຍໃຕ້ການເບິ່ງແຍງຂອງລາວ ຈຶ່ງບໍ່ຄວນມີການສົ່ງເສີມ ແລະ ຄວນຫ້າມການແຕ່ງດອງໃນລັກສະນະດັ່ງກ່າວ ຄະນະກຳມະການສັງເກດດ້ວຍຄວາມເປັນຫ່ວງ ວ່າເຖິງແມ່ນວ່າລັດພາຄີບາງລັດຈະມີລັດຖະທຳມະ

ນູນທີ່ຮັບປະກັນສິດທິຢ່າງເທົ່າທຽມກັນ ແຕ່ກໍຍັງອະນຸຍາດໃຫ້ມີການແຕ່ງດອງແບບມີຫລາຍຜົວ, ເມຍ ໄດ້ຕາມກົດໝາຍທີ່ກ່ຽວກັບບຸກຄົນ ຫຼື ກົດໝາຍແບບຮີດຄອງປະເພນີ ການກະທຳໃນລັກສະນະນີ້ເປັນການລະເມີດສິດທິຂອງແມ່ຍິງຕາມລັດຖະທຳມະນູນ ແລະ ຝ່າຝືນຂໍ້ກຳນົດຕາມມາດຕາ 5 ຂອງສົນທິສັນຍາ;

## ມາດຕາ 16(1)(ກ) ແລະ (ຂ)

15. ໃນຂະນະທີ່ປະເທດສ່ວນໃຫຍ່ລາຍງານວ່າລັດຖະທຳມະນູນ ແລະ ກົດໝາຍຂອງປະເທດສອດຄ່ອງກັບສົນທິສັນຍານີ້ ແຕ່ຮີດຄອງປະເພນີ ແລະ ຄວາມຜິດພາດໃນການບັງຄັບໃຊ້ກົດໝາຍເຫລົ່ານີ້ ໃນຄວາມເປັນຈິງຖືເປັນການຂັດຕໍ່ສົນທິສັນຍາ;

16. ສິດທິຂອງແມ່ຍິງທີ່ຈະເລືອກຄູ່ຄອງ ແລະແຕ່ງດອງໂດຍອິດສະຫລະ ເປັນຫົວໃຈສຳຄັນຂອງຊີວິດ, ສັກສີ ແລະ ຄວາມສະເໝີພາບຂອງລາວໃນຖານະເປັນມະນຸດ, ການກວດສອບບົດລາຍງານຂອງລັດພາຄີ ສະແດງໃຫ້ເຫັນວ່າຍັງຄົງມີບາງປະເທດທີ່ເຫັນດີໃຫ້ມີການແຕ່ງດອງ ຫຼື ແຕ່ງດອງໃໝ່ດ້ວຍການບັງຄັບ ໂດຍອ້າງເຖິງຮີດຄອງ ຄວາມເຊື່ອທາງສາສະໜາ ຫຼື ຄວາມເປັນມາທາງຊົນຊາດຂອງຄົນກຸ່ມໃດໜຶ່ງ ນອກຈາກນັ້ນບາງປະເທດຍັງອະນຸຍາດໃຫ້ມີການຈັດການແຕ່ງດອງຂອງແມ່ຍິງ ໂດຍຫວັງຄ່າຕອບແທນ ຫຼື ເພື່ອຄວາມກ້າວໜ້າ ແລະ ມີບາງປະເທດທີ່ຄວາມທຸກຍາກໃນກຸ່ມແມ່ຍິງ ຊຸກຍູ້ໃຫ້ພວກເຂົາຕ້ອງແຕ່ງດອງກັບຄົນຕ່າງປະເທດ ເພື່ອຄວາມໝັ້ນຄົງທາງດ້ານການເງິນ ສິດທິຂອງແມ່ຍິງໃນການເລືອກວ່າຈະສ້າງຄອບຄົວເມື່ອໃດ ຈະສ້າງຄອບຄົວ ຫຼື ບໍ່ ແລະ ຈະສ້າງກັບໃຜຕ້ອງໄດ້ຮັບການຄຸ້ມຄອງ ແລະ ກຳນົດເປັນຂໍ້ກົດໝາຍ ໃນນີ້ອາດມີຂໍ້ຫ້າມທີ່ສົມເຫດສົມຜົນໄດ້ເຊັ່ນ:ໃນກໍລະນີຂອງເດັກນ້ອຍແມ່ຍິງ ຫຼື ການແຕ່ງດອງລະຫວ່າງບຸກຄົນໃນສາຍເລືອດດຽວກັນ;

## ມາດຕາ 16 (1) (ຄ)

17. ການກວດສອບບົດລາຍງານຂອງລັດພາຄີສະແດງໃຫ້ເຫັນວ່າຫລາຍປະເທດມີລະບົບກົດໝາຍທີ່ໃຫ້ສິດທິ ແລະຄວາມຮັບຜິດຊອບແກ່ຄູ່ຜົວເມຍ ໂດຍອີງຕາມຫລັກການ ຂອງກົດໝາຍຄອມມອນລໍ ສາສະໜາ ຫຼື ກົດໝາຍຮີດຄອງປະເພນີ ແທນທີ່ຈະຖືເອົາຕາມຫລັກການທີ່ລະບຸໃນສົນທິສັນຍາສະບັບນີ້ ຄວາມຜິດພາດທີ່ແຕກຕ່າງກັນເຫລົ່ານີ້ ໃນກົດໝາຍ ແລະ ການປະຕິບັດກ່ຽວກັບການແຕ່ງດອງທີ່ມີຜົນກະທົບຢ່າງກວ້າງຂວາງຕໍ່ແມ່ຍິງ ກໍຄືເປັນການຈຳກັດສິດທິ ທີ່ຈະມີສະຖານະພາບ ແລະ ຄວາມຮັບຜິດຊອບເທົ່າທຽມກັນໃນຊີວິດການສ້າງຄອບຄົວຂໍ້ຈຳກັດເຊັ່ນນີ້ມັກ

ສິ່ງຜົນໃຫ້ຜົວມີສະຖານະພາບເປັນຫົວໜ້າຄອບຄົວ ແລະ ເປັນຜູ້ຕັດສິນໃຈຫລັກ ຊຶ່ງຂັດກັບບົດບັນຍັດຂອງສົນທິສັນຍານີ້;

18. ຍິ່ງໄປກວ່ານັ້ນ ໂດຍທົ່ວໄປບຸກຄົນທີ່ໃຊ້ຊີວິດຢູ່ຮ່ວມກັນ ໂດຍບໍ່ໄດ້ແຕ່ງດອງ ມັກບໍ່ໄດ້ຮັບການຄຸ້ມຄອງຕາມກົດໝາຍເລີຍ ແມ່ຍິງທີ່ມີຄວາມສຳພັນໃນລັກສະນະນີ້ ຫາກໍໄດ້ຮັບການຄຸ້ມຄອງຕາມກົດໝາຍໃຫ້ມີສະຖານະພາບເທົ່າທຽມກັບຜູ້ຊາຍທັງຢູ່ໃນຄອບຄົວ ແລະການມີສ່ວນແບ່ງໃນລາຍໄດ້ ແລະຊັບສິນ ແມ່ຍິງກຸ່ມນີ້ຄວນໄດ້ຮັບສິດທິ ແລະການແບ່ງປັນຄວາມຮັບຜິດຊອບຢ່າງສະເໝີພາບກັບຜູ້ຊາຍໃນເລື່ອງການເບິ່ງແຍງ ແລະ ລ້ຽງດູລູກ ແລະ ສະມາຊິກຄົນອື່ນໆໃນຄອບຄົວ;

## ມາດຕາ 16 (1) (ງ) ແລະ (ສ)

19. ຕາມທີ່ໄດ້ລະບຸໄວ້ໃນມາດຕາ 5(ຂ) ລັດສ່ວນໃຫຍ່ຍອມຮັບການແບ່ງປັນຄວາມຮັບຜິດຊອບໃນຖານະເປັນຜູ້ປົກຄອງຮ່ວມກັນ ໃນການເບິ່ງແຍງ, ຄຸ້ມຄອງ ແລະ ທະນຸບຳລຸງລູກ ຫລັກການທີ່ວ່າ " ຈະຕ້ອງຄຳນຶງເຖິງຜົນປະໂຫຍດອັນສູງສຸດຂອງເດັກນ້ອຍເປັນສຳຄັນ " ປາກົດຢູ່ໃນສົນທິສັນຍາວ່າດ້ວຍສິດທິເດັກ (ມະຕິສະມັດຊາຊາດທີ່ 44/25 ພາກຊ້ອນທ້າຍ) ແລະເບິ່ງຄືວ່າຈະເປັນທີ່ຍອມຮັບທົ່ວໄປໃນປັດຈຸບັນ ເຖິງຢ່າງໃດກໍຕາມໃນທາງປະຕິບັດບາງປະເທດ ຍັງບໍ່ທັນດຳເນີນຕາມຫລັກການທີ່ຈະໃຫ້ຜູ້ປົກຄອງຂອງເດັກ ມີສະຖານະພາບເທົ່າທຽມກັນ ໂດຍສະເພາະໃນກໍລະນີທີ່ບໍ່ໄດ້ແຕ່ງດອງ, ລູກຂອງບຸກຄົນທີ່ມີຄວາມສຳພັນໃນລັກສະນະດັ່ງກ່າວ ມັກຂາດໂອກາດທີ່ຈະມີສະຖານະພາບເຊັ່ນດຽວກັບເດັກ ທີ່ເກີດຈາກການແຕ່ງດອງ ແລະໃນກໍລະນີຜູ້ທີ່ເປັນແມ່ມີການຮ້າງກັບຜົວ ຫຼື ແຍກທາງກັນຢູ່ ພໍ່ຈຳນວນຫລາຍມັກບໍ່ໄດ້ມີສ່ວນຮ່ວມຮັບຜິດຊອບໃນການເບິ່ງແຍງ, ຄຸ້ມຄອງ ແລະ ຖະນຸບຳລຸງລູກຂອງຕົນ;

20. ການມີສິດທິ ແລະຄວາມຮັບຜິດຊອບຮ່ວມກັນດັ່ງທີ່ໄດ້ລະບຸໄວ້ໃນສົນທິສັນຍານີ້ ຄວນມີການບັງຄັບໃຊ້ຕາມກົດໝາຍແລະຕາມຄວາມເໝາະສົມໂດຍອີງຕາມແນວຄິດທາງກົດໝາຍເລື່ອງການປົກຄອງລູກ, ການປົກປ້ອງລູກ ການໄດ້ຮັບມອບໝາຍໃຫ້ເບິ່ງແຍງລູກ ແລະຮັບເອົາລູກລ້ຽງ ລັດພາຄີຄວນຮັບປະກັນວ່າກົດໝາຍຂອງລັດລະບຸເຖິງສິດທິ ແລະຄວາມຮັບຜິດຊອບຮ່ວມກັນຢ່າງສະເໝີພາບໃນສ່ວນທີ່ກ່ຽວຂ້ອງກັບລູກ ໂດຍບໍ່ມີການແບ່ງແຍກຕາມສະຖານະພາບການແຕ່ງດອງ ຫຼື ບໍ່ວ່າຈະຢູ່ຮ່ວມກັບລູກ ຫຼື ບໍ່;

## ມາດຕາ 16 (1) (ຈ)

21. ໜ້າທີ່ຮັບຜິດຊອບທີ່ແມ່ຍິງຕ້ອງແບກຫາບໃນການລ້ຽງດູລູກ ມີຜົນຕໍ່ສິດທິຂອງພວກເຂົາໃນການທີ່ຈະເຂົ້າເຖິງການສຶກສາ, ການຈ້າງງານ ແລະກິດຈະກຳອື່ນໆ ທີ່ກ່ຽວກັບການພັດທະນາຕົນເອງ ແລະ ຍັງເປັນການເພີ່ມພາລະວຽກໃຫ້ກັບແມ່ຍິງຢ່າງບໍ່ເປັນທຳ, ຈຳນວນ ແລະໄລຍະຫ່າງຂອງການມີລູກກໍມີຜົນກະທົບໃນລັກສະນະດຽວກັນນີ້ກັບຊີວິດຂອງແມ່ຍິງ ແລະຍັງສົ່ງຜົນສະທ້ອນຕໍ່ສຸຂະພາບຮ່າງກາຍ ແລະຈິດໃຈຂອງພວກເຂົາ ແລະລູກຂອງພວກເຈົ້າອີກດ້ວຍ ດ້ວຍເຫດຜົນເຫລົ່ານີ້ແມ່ຍິງຈຶ່ງຄວນເປັນຜູ້ຕັດສິນໃຈເລື່ອງຈຳນວນ ແລະ ໄລຍະຫ່າງຂອງການມີລູກ;

22. ບົດລາຍງານບາງສະບັບ ສະແດງໃຫ້ເຫັນເຖິງການບັງຄັບ ທີ່ມີຜົນກະທົບຮ້າຍແຮງຕໍ່ແມ່ຍິງເຊັ່ນ: ການບັງຄັບໃຫ້ມີລູກ, ການຫຼຸລູກ ຫຼືການເຮັດໝັນ ເຖິງແມ່ນວ່າການຕັດສິນໃຈວ່າຈະມີລູກ ຫຼືບໍ່ມີຄວາມຕ້ອງການທີ່ຈະປຶກສາຫາລືກັບຄູ່ຜົວເມຍ ຫຼື ຄູ່ຄອງແຕ່ກໍບໍ່ຄວນຖືກຈຳກັດໂດຍຄູ່ຜົວເມຍ ,ພໍ່ແມ່, ຄູ່ຄອງ ຫຼື ລັດຖະບານ ແລະການຕັດສິນໃຈຢ່າງມີຂໍ້ມູນໃນເລື່ອງກ່ຽວກັບ ວິທີການຄຸມກຳເນີດທີ່ປອດໄພແລະໄດ້ຜົນ,ແມ່ຍິງຈຳເປັນຈະຕ້ອງໄດ້ຮັບຮູ້ຂໍ້ມູນກ່ຽວກັບວິທີການຄຸມກຳເນີດ ແລະຜົນປະໂຫຍດ ແລະຕ້ອງເຂົ້າເຖິງຂໍ້ມູນເລື່ອງເພດສຶກສາ ແລະການບໍລິການວາງແຜນຄອບຄົວຕາມທີ່ໄດ້ລະບຸໄວ້ໃນມາດຕາ 10(ຊ) ຂອງສົນທິສັນຍາ;

23. ເປັນການເຂົ້າໃຈນຳກັນແລ້ວວ່າ ບ່ອນໃດມີວິທີການຄວບຄຸມສະພາບການຈະເລີນພັນ ໂດຍສະໝັກໃຈດ້ວຍວິທີການທີ່ເໝາະສົມ ແລະ ທົ່ວເຖິງ, ສະພາບຂອງສຸຂະພາບ, ການພັດທະນາ ແລະ ຄວາມເປັນຢູ່ຂອງສະມາຊິກຂອງຄອບຄົວຕ້ອງດີຂຶ້ນ ຍິ່ງໄປກວ່ານັ້ນການບໍລິການດັ່ງກ່າວຍັງຊ່ວຍເຮັດໃຫ້ຄຸນນະພາບຂອງຊີວິດ ແລະສຸຂະພາບໂດຍລວມຂອງກຸ່ມປະຊາກອນໃນບ່ອນນັ້ນໆ ດີຂຶ້ນ ແລະ ຄວບຄຸມການເພີ່ມຈຳນວນປະຊາກອນ ໂດຍສະໝັກໃຈຊຶ່ງຈະຊ່ວຍຮັກສາສະພາບແວດລ້ອມ ແລະ ຊ່ວຍໃຫ້ບັນລຸເຖິງການພັດທະນາເສດຖະກິດ ແລະສັງຄົມທີ່ຍືນຍົງ.

## ມາດຕາ 16 (1) (ຊ)

24. ຄອບຄົວທີ່ໝັ້ນຄົງຄືຄອບຄົວທີ່ຕັ້ງຢູ່ບົນຫລັກການຂອງຄວາມເປັນທຳ, ຍຸຕິທຳ ແລະການພັດທະນາຕົນເອງຂອງສະມາຊິກແຕ່ລະຄົນ, ຄູ່ຄອງ(ຄູ່ຜົວເມຍ) ແຕ່ລະຝ່າຍ ຈຶ່ງຄວນມີສິດທີ່ຈະເລືອກອາຊີບ ແລະການຈ້າງງານທີ່ເໝາະສົມທີ່ສຸດກັບຄວາມສາມາດ, ຄຸນສົມບັດ ແລະ ຄວາມຄາດຫວັງຂອງຕົນຕາມທີ່ລະບຸໄວ້ໃນມາດຕາ 11(ກ) ແລະ(ຄ) ຂອງສົນທິສັນຍານີ້ ຍິ່ງໄປກວ່ານັ້ນຄູ່ຄອງແຕ່ລະຝ່າຍຍັງຄວນມີສິດທິທີ່ຈະເລືອກໃຊ້ຊື່ຂອງຕົນຊຶ່ງຈະເປັນການຮັກສາພາບພົດສ່ວນຕົວ ແລະລັກສະນະໃນຊຸມຊົນ ແລະໃຫ້ບຸກຄົນນັ້ນໆມີເອກະລັກຕ່າງຈາກ ສະມາຊິກອື່ນຂອງສັງ

ຄືນ ໃນກໍລະນີທີ່ກົດໝາຍ ຫຼື ຮີດຄອງປະເພນີບັງຄັບໃຫ້ແມ່ຍິງຕ້ອງປ່ຽນຊື່ໃນເມື່ອສ້າງຄອບຄົວ ຫຼື ເມື່ອສິ້ນສຸດການເປັນຜົວເມຍ ຈຶ່ງຖືໄດ້ວ່າແມ່ຍິງຖືກປະຕິເສດສິດທີ່ດັ່ງກ່າວ;

## ມາດຕາ 16 (1) (ຊ)

25. ສິດທີ່ລະບຸໄວ້ໃນມາດຕານີ້ຊ້ອນທັບ ແລະ ເສີມກັນກັບ ມາດຕາ15 (2) ຊຶ່ງກຳນົດ ໃຫ້ລັດມີພັນທະກໍລະນີ ທີ່ຕ້ອງໃຫ້ສິດສະເໝີພາບແກ່ແມ່ຍິງໃນການເລີ່ມ ແລະ ເຮັດສັນຍາ ແລະ ການຈັດການ ກັບຊັບສິນ;

26. ມາດຕາ 15(1) ຮັບປະກັນວ່າແມ່ຍິງຈະໄດ້ຄວາມສະເໝີພາບເຊັ່ນດຽວກັນກັບຜູ້ຊາຍ ໃນທາງກົດໝາຍ ສິດທີ່ທີ່ຈະເປັນເຈົ້າຂອງ, ຈັດການໃຊ້ປະໂຫຍດ ແລະຈຳໜ່າຍແຈກຢາຍຊັບສິນ ນັບວ່າເປັນຫົວໃຈຫລັກຂອງສິດທິແມ່ຍິງ ທີ່ຈະສາມາດເພິ່ງພາຕົນເອງໄດ້ໃນທາງການເງິນ ແລະໃນຫລາຍປະເທດຖືເປັນສິ່ງຈຳເປັນຫລາຍ ສຳລັບຄວາມສາມາດຂອງແມຍິງ ທີ່ຈະຫາລ້ຽງຊີບ ແລະ ຈັດຫາທີ່ຢູ່ອາໄສ ແລະອາຫານສຳລັບຕົນເອງ ແລະ ຄອບຄົວ;

27. ປະເທດທີ່ມີການປ່ຽນແປງຮູບການກະສິກຳ ຫຼື ການຂະຫຍາຍທີ່ດິນ ໃນລະຫວ່າງກຸ່ມຊົນຊາດຕ່າງໆ, ສິດທິຂອງແມ່ຍິງທີ່ຈະໄດ້ຮັບສ່ວນແບ່ງຈາກການຂະຫຍາຍທີ່ດິນ ຢ່າງສະເໝີພາບກັບຜູ້ຊາຍ ຄວນໄດ້ຮັບການເຄົາລົບ ໃນນີ້ໂດຍບໍ່ຖືກຈຳກັດດ້ວຍສະຖານະພາບຂອງການມີຄອບຄົວ.

28. ປະເທດສ່ວນໃຫຍ່ມັກມີແມ່ຍິງໂສດ ຫຼື ຢ່າຮ້າງຢູ່ເປັນສັດສ່ວນທີ່ຫລາຍພໍສົມຄວນ ແລະ ແມ່ຍິງເຫລົ່ານີ້ ຈຳນວນຫລາຍຕ້ອງຫາຕ້ອງຫາລ້ຽງຄອບຄົວພຽງຜູ້ດຽວ, ການຈຳແນກໃນການແບ່ງປັນຊັບສິນ ບົນພື້ນຖານທີ່ວ່າຜູ້ຊາຍເປັນຜູ້ຫາລ້ຽງແມ່ຍິງ ແລະ ເດັກນ້ອຍໃນຄອບຄົວຂອງຕົນແຕ່ພຽງຝ່າຍດຽວ ແລະ ພວກເຂົາຕ້ອງປະຕິບັດໜ້າທີ່ນີ້ ໂດຍເຄັ່ງຄັດນັ້ນຈຶ່ງເປັນການປະຕິບັດທີ່ຂັດກັບສະພາບຄວາມເປັນຈິງຢ່າງຊັດເຈນ, ດັ່ງນັ້ນກົດໝາຍ ຫຼື ຮີດຄອງໃດກໍຕາມທີ່ໃຫ້ສິດແກ່ຜູ້ຊາຍ ໃນອັນດັບທີ່ຈະໄດ້ຮັບສ່ວນແບ່ງຊັບສິນຫລາຍກວ່າເມື່ອມີການຢ່າຮ້າງກັນ ຫຼື ສິ້ນສຸດສາຍພົວພັນໃນການເປັນຜົວເມຍ ຫຼື ເມື່ອມີຍາດຕິພີ່ນ້ອງເສຍຊີວິດ ຖືເປັນການຈຳແນກ ແລະ ຈະມີຜົນກະທົບຮ້າຍແຮງຕໍ່ຄວາມສາມາດໃນທາງປະຕິບັດຂອງແມ່ຍິງໃນການຢ່າຮ້າງຈາກຜົວ, ການຫາລ້ຽງຊີບຕົນເອງ ຫຼື ຄອບຄົວແລະ ການດຳລົງຊີວິດຢ່າງມີສັກສີໃນຖານະບຸກຄົນທີ່ເພິ່ງພາຕົນເອງໄດ້;

29. ສິດທິຕ່າງໆເຫລົ່ານີ້ທັງໝົດຄວນໄດ້ຮັບການຄ້ຳປະກັນ ໂດຍບໍ່ຖືກຈຳກັດດ້ວຍສະຖານະພາບການມີຄອບຄົວຂອງແມ່ຍິງ;

## ສິນສົມສ້າງ

30. ມີບາງປະເທດທີ່ບໍ່ໄດ້ຮັບຮອງເອົາສິດທິຂອງແມ່ຍິງທີ່ຈະເປັນເຈົ້າຂອງຊັບສິນ ໂດຍສະເໝີພາບກັບຜົວໃນຂະນະທີ່ເປັນຜົວເມຍກັນຢູ່ ຫຼື ມີສາຍພົວພັນແບບຜົວເມຍກັນ ແລະເມື່ອການແຕ່ງດອງ ຫຼື ສາຍພົວພັນດັ່ງກ່າວສິ້ນສຸດລົງ ຫລາຍປະເທດຮັບຮອງເອົາສິດທິດັ່ງກ່າວແຕ່ໃນທາງປະຕິບັດຄວາມສາມາດຂອງແມ່ຍິງທີ່ຈະໃຊ້ສິດນັ້ນ ອາດຈະຖືກຈຳກັດດ້ວຍບັນທັດຖານ (ກົດເກນ) ທາງກົດໝາຍ ຫຼື ຮີດຄອງ;

31. ເຖິງວ່າໃນກໍລະນີທີ່ແມ່ຍິງໄດ້ຮັບສິດທີດັ່ງກ່າວ ແລະສານຍຸຕິທຳກໍບັງຄັບໃຫ້ເປັນໄປຕາມນັ້ນແຕ່ຊັບສິນທີ່ແມ່ຍິງເປັນເຈົ້າຂອງໃນລະຫວ່າງການຢູ່ຮ່ວມກັນກັບຜົວເມຍເມື່ອມີການຢ່າຮ້າງກໍອາດຢູ່ພາຍໃຕ້ການຈັດການຂອງຜູ້ຊາຍ ໃນຫລາຍລັດລວມທັງລັດທີ່ມີລະບົບຊັບສິນຮ່ວມກັນຂອງຊຸມຊົນມັກຈະບໍ່ມີຂໍ້ກຳນົດຕາມກົດໝາຍວ່າຈະຕ້ອງມີການປຶກສາຫາລືກັບແມ່ຍິງເມື່ອຈະມີການຂາຍ ຫຼື ຈຳໜ່າຍແຈກຢາຍຊັບສິນທີ່ຜູ້ຊາຍ ແລະແມ່ຍິງເປັນເຈົ້າຂອງຮ່ວມກັນໃນລະຫວ່າງທີ່ຢູ່ຮ່ວມກັນເປັນຜົວເມຍ ຫຼື ຂະນະທີ່ມີສາຍພົວພັນຜົວເມຍນຳກັນ ສະພາບເຊັ່ນນີ້ເປັນການຈຳກັດຄວາມສາມດຂອງແມ່ຍິງ ໃນຄວບຄຸມການຈຳໜ່າຍແຈກຢາຍຊັບສິນ ຫຼື ລາຍໄດ້ອັນເກີດມາຈາກຊັບສິນນັ້ນ;

32. ໃນບາງປະເທດການແບ່ງປັນສິນສົມສ້າງມັກພິຈາລະນາ ໂດຍໃຫ້ຄວາມສຳຄັນກັບການມີສ່ວນຮ່ວມຫາລາຍໄດ້ທີ່ເປັນເງິນ ເພື່ອຈັດຫາມາຊຶ່ງຊັບສິນໃນລະຫວ່າງການເປັນຜົວເມຍກັນ ໃນຂະນະທີ່ການມີສ່ວນຮ່ວມໃນຮູບແບບອື່ນເຊັ່ນ: ການເບິ່ງແຍງລ້ຽງດູລູກ, ການເບິ່ງແຍງຍາດພີ່ນ້ອງຜູ້ສູງອາຍຸ ແລະການເຮັດໜ້າທີ່ໃນຄົວເຮືອນ ມັກຈະຖືກຫລຸດຄວາມສຳຄັນລົງ ຫລາຍຄັ້ງທີ່ການມີສ່ວນຮ່ວມຂອງເມຍ ໃນຮູບແບບທີ່ບໍ່ປາກົດເປັນເງິນ ໄດ້ຊ່ວຍໃຫ້ຜົວສາມາດຫາລາຍໄດ້ ແລະເພີ່ມພູນຊັບສິນໄດ້, ດັ່ງນັ້ນການມີສ່ວນຮ່ວມທັງທີ່ເປັນເງິນແລະທີ່ບໍ່ແມ່ນເງິນຄວນຈະມີນ້ຳໜັກເທົ່າໆກັນໃນການພິຈາລະນາ;

33. ໃນຫລາຍປະເທດຊັບສິນທີ່ເພີ່ມພູນຂຶ້ນໃນລະຫວ່າງການມີສາຍພົວພັນຜົວເມຍກັນມັກບໍ່ໄດ້ຮັບການປະຕິບັດທາງກົດໝາຍໃນລັກສະນະດຽວກັບຊັບສິນທີ່ເກີດຈາກການເປັນຜົວເມຍໂດຍຖືກຕ້ອງຕາມກົດໝາຍ ແລະເມື່ອສາຍພົວພັນນັ້ນສິ້ນສຸດລົງ ແມ່ຍິງກໍມັກຈະໄດ້ຮັບສ່ວນແບ່ງທີ່ໜ້ອຍກວ່າຄູ່ຄອງຂອງຕົນຫລາຍ ກົດໝາຍຊັບສິນ ແລະຮີດຄອງຕ່າງໆຊຶ່ງມີການຈຳແນກຕໍ່ແມ່ຍິງທີ່ມີຄອບຄົວແລ້ວ ແລະຍັງບໍ່ມີຄອບຄົວ(ເປັນໂສດ) ເຖິງວ່າຈະມີລູກ ຫຼື ບໍ່ມີ ໃນລັກສະນະເຊັ່ນນີ້ ຄວນຖືກຍົກເລີກ ແລະຢັບຢັ້ງຂັດຂວາງ;

## ການຮັບມູນມໍລະດົກ

34. ລາຍງານຂອງລັດພາຄີຄວນລະບຸເຖິງຄວາມເຫັນທີ່ກ່ຽວກັບບົດບັນຍັດຕາມກົດໝາຍ ຫຼື ຮີດຄອງປະເພນີທີ່ກ່ຽວກັບກົດໝາຍວ່າດ້ວຍມູນມໍລະດົກ ຊຶ່ງມີຜົນກະທົບຕໍ່ສະຖານະພາບຂອງແມ່ຍິງຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍານີ້ ແລະໃນມະຕິຂອງສະພາລັດຖະມົນຕີເສດຖະກິດ ແລະສັງຄົມທີ່ 884D (XXXIV) ຊຶ່ງສະພາລັດຖະມົນຕີໄດ້ແນະນຳໃຫ້ລັດຮັບປະກັນວ່າຜູ້ຊາຍ ແລະແມ່ຍິງທີ່ມີສາຍພົວພັນກັບຜູ້ເສຍຊີວິດໃນລະດັບດຽວກັນ ຈະຕ້ອງໄດ້ຮັບສ່ວນແບ່ງໃນຊັບສິນຢ່າງເທົ່າທຽມກັນ ແລະ ໄດ້ຮັບການຈັດໃຫ້ຢູ່ໃນລະດັບຊັ້ນຜູ້ສືບທອດມູນມໍລະດົກ ໂດຍສະເໝີພາບກັນ ຊຶ່ງຂໍ້ກຳນົດນີ້ຍັງບໍ່ໄດ້ຮັບການປະຕິບັດໂດຍທົ່ວໄປ;

35. ຍັງມີຫລາຍປະເທດທີ່ມີກົດໝາຍ ແລະການປະຕິບັດເລື່ອງມູນມໍລະດົກ ແລະຊັບສິນທີ່ສິ່ງຜົນໃຫ້ເກີດມີການຈຳແນກຕໍ່ແມ່ຍິງຢ່າງຮຸນແຮງ ດ້ວຍເຫດຂອງການປະຕິບັດຢ່າງບໍ່ສະເໝີພາບກັນນີ້ເມື່ອຜູ້ເປັນຜົວ ຫຼື ພໍ່ເສຍຊີວິດລົງ ແມ່ຍິງອາດໄດ້ຮັບສ່ວນແບ່ງຊັບສົມບັດໜ້ອຍກວ່າກໍລະນີຂອງຜູ້ຊາຍທີ່ເປັນໝ້າຍ ແລະ ລູກຜູ້ຊາຍ ໃນບາງກໍລະນີແມ່ຍິງຈະໄດ້ຮັບສິດໂດຍຈຳກັດ ແລະຖືກຄວບຄຸມ ແລະ ຈະໄດ້ຮັບສະເພາະສ່ວນແບ່ງລາຍໄດ້ທີ່ເກີດຈາກຊັບສິນຂອງຜູ້ຕາຍເທົ່ານັ້ນມີຫລາຍຄັ້ງທີ່ສິດທິໃນການສືບທອດມູນມໍລະດົກສຳລັບແມ່ຍິງທີ່ເປັນໝ້າຍ ບໍ່ໄດ້ສະທ້ອນຫລັກການເປັນເຈົ້າຂອງຊັບສິນທີ່ໄດ້ມາຈາກການແຕ່ງດອງຢ່າງສະເໝີພາບ ບົດບັນຍັດເຊັ່ນທີ່ກ່າວ ມານີ້ເປັນສິ່ງທີ່ຂັດກັບສົນທິສັນຍາ ແລະ ຄວນຖືກຍົກເລີກໄປ;

## ມາດຕາ 16 (2)

36. ໃນຖະແຫລງການວຽນນາ ແລະ ແຜນປະຕິບັດການທີ່ຮັບຮອງເມື່ອການປະຊຸມໂລກວ່າດ້ວຍສິດທິມະນຸດ ຊຶ່ງຈັດຂຶ້ນທີ່ກຸງວຽນນາລະຫວ່າງວັນທີ 14 ຫາ 25 ມິຖຸນາ ຄສ 1993 ນັ້ນ ລັດໄດ້ຮັບການຜັກດັນ(ຊຸກຍູ້)ໃຫ້ຍົກເລີກກົດໝາຍ ແລະກົດລະບຽບ ແລະ ການລົບລ້າງຮີດຄອງ ແລະວິທີການປະຕິບັດຊຶ່ງມີການຈຳແນກ ແລະ ເຮັດໃຫ້ເກີດຄວາມເສຍຫາຍຕໍ່ເດັກນ້ອຍແມ່ຍິງ ມາດຕາ 16(2) ແລະ ຂໍ້ກຳນົດໃນສົນທິສັນຍາວ່າດ້ວຍສິດທິເດັກ ຫ້າມບໍ່ໃຫ້ລັດພາຄີອະນຸຍາດ ຫຼື ໃຫ້ການຮັບຮອງການແຕ່ງດອງລະຫວ່າງບຸກຄົນຊຶ່ງຍັງບໍ່ທັນບັນລຸນິຕິພາວະໃນບົດຄວາມຂອງສົນທິສັນຍາວ່າດ້ວຍສິດທິເດັກ "ເດັກ ແມ່ນໝາຍເຖິງມະນຸດທຸກຄົນທີ່ອາຍຸຕ່ຳກວ່າ18 ປີ (ສິບແປດປີ) ເວັ້ນແຕ່ຈະບັນລຸນິຕິພາວະກ່ອນໜ້ານັ້ນຕາມກົດໝາຍທີ່ໃຊ້ບັງຄັບແກ່ເດັກນັ້ນ" ເຖິງແມ່ນວ່າຈະມີຄຳຈຳກັດຄວາມດັ່ງກ່າວ ແລະ ໂດຍຄຳນຶງເຖິງຂໍ້ກຳນົດຂອງຖະແຫລງການວຽນນາ ຄະນະກຳມະການຈຶ່ງພິຈາລະນາວ່າອາຍຸຂັ້ນຕ່ຳ ສຳລັບການແຕ່ງດອງຄວນເປັນ 18 ປີ ລວມທັງແມ່ຍິງ ແລະຜູ້ຊາຍ ເມື່ອແມ່ຍິງ ແລະ ຜູ້ຊາຍສ້າງຄອບຄົວນຳກັນ ພວກເຂົາຕ້ອງມີຄວາມຮັບຜິດຊອບທີ່ສຳຄັນ ດັ່ງນັ້ນການອະນຸຍາດໃຫ້ແຕ່ງດອງ ຈຶ່ງຄວນເຮັດສະເພາະເມື່ອແມ່ຍິງ ແລະຜູ້ຊາຍບັນລຸນິຕິພາວະໂດຍສົມບູນ ແລະມີຄວາມສາມາດ ທີ່ຈະດຳເນີນກິດຈະການຕ່າງໆໄດ້ແລ້ວ ຈາກຂໍ້ມູນຂອງອົງການອະນາໄມໂລກ ເມື່ອເດັກນ້ອຍໂດຍສະເພາະແມ່ນເດັກນ້ອຍແມ່ຍິງ ທີ່ແຕ່ງດອງ

ແລະ ມີລູກ ຈະເກີດຜົນກະທົບຕໍ່ສຸຂະພາບຂອງພວກເຂົາ ລວມທັງຍັງເຮັດໃຫ້ຕ້ອງຢຸດຕິການຮຽນ (ການສຶກສາ) ຜົນສະທ້ອນທີ່ນຳມາກໍຄືຄວາມສາມາດໃນການເພິ່ງພາຕົນເອງຂອງພວກເຂົາກໍຈະຈຳກັດໄປພ້ອມ.

37. ສະພາບການເຊັ່ນນີ້ບໍ່ໄດ້ມີຜົນກະທົບສະເພາະຕໍ່ຊີວິດສ່ວນຕົວຂອງແມ່ຍິງເທົ່ານັ້ນ ແຕ່ຍັງຈຳກັດການພັດທະນາທັກສະ ແລະ ການເພິ່ງພາຕົນເອງ ແລະຫລຸດໂອກາດທີ່ຈະໄດ້ຮັບການຈ້າງງານຈຶ່ງມີຜົນດ້ານລົບຕໍ່ຄອບຄົວ ແລະຊຸມຊົນດ້ວຍ;

38. ມີບາງປະເທດກຳນົດອາຍຸຂັ້ນຕ່ຳສຳລັບການແຕ່ງດອງຂອງຜູ້ຊາຍ ແລະແມ່ຍິງໄວ້ໃຫ້ແຕກຕ່າງກັນ ຂໍ້ກຳນົດເຊັ່ນນີ້ເປັນຄາດຄະເນຂຶ້ນມາຢ່າງຜິດໆ ວ່າແມ່ຍິງມີອັດຕາການພັດທະນາທາງປັນຍາຕ່າງຈາກຜູ້ຊາຍ ຫຼື ຄິດໄປວ່າລະດັບພັດທະນາການທາງຮ່າງກາຍ ແລະ ປັນຍາຂອງແມ່ຍິງເມື່ອມີຄອບຄົວແລ້ວແມ່ນບໍ່ມີຄວາມສຳຄັນ, ຂໍ້ກຳນົດເຊັ່ນນີ້ຈຶ່ງຄວນຖືກຍົກເລີກໄປ ໃນປະເທດອື່ນໆ ຍັງມີການອະນຸຍາດໃຫ້ມີການໝັ້ນເດັກນ້ອຍແມ່ຍິງ ຫຼື ໃຫ້ສະມາຊິກໃນຄອບຄົວປະຕິການແທນເດັກນ້ອຍແມ່ຍິງ ມາດຕະການເຫລົ່ານີ້ບໍ່ພຽງແຕ່ຂັດກັບສົນທິສັນຍານີ້ເທົ່ານັ້ນ ແຕ່ຍັງຂັດກັບສິດທິຂອງແມ່ຍິງທີ່ະເລືອກຄູ່ໄດ້ໂດຍເສລີພາບ.

39. ລັດພາຄີຄວນຈັດໃຫ້ມີການຈົດທະບຽນຄອບຄົວທັງໝົດ ບໍ່ວ່າຈະເປັນການສ້າງຄອບຄົວ ໂດຍກົດໝາຍແພ່ງ, ການສ້າງຄອບຄົວຕາມປະເພນີ ຫຼືຕາມຫລັກສາສະໜາ ແລະລັດພາຄີຄວນຮັບປະກັນວ່າຈະມີການປະຕິບັດຕາມສົນທິສັນຍານີ້ ແລະສະຖາປະນາຄວາມສະເໝີພາບລະຫວ່າງຄູ່ຜົວເມຍ, ກຳນົດອາຍຸຂັ້ນຕ່ຳສຳລັບການສ້າງຄອບຄົວ ຫ້າມການມີຄູ່ຄອງສອງຄົນ ຫຼື ຫລາຍຄົນ ແລະ ປົກປ້ອງສິດທິຂອງເດັກ;

## ຂໍ້ສະເໜີແນະ

## ຄວາມຮຸນແຮງຕໍ່ແມ່ຍິງ

40. ຈາກການພິຈາລະນາເຖິງສະຖານະພາບຂອງແມ່ຍິງໃນຄອບຄົວ ຄະນະກຳມະການມີຈຸດປະສົງທີ່ຈະເໜັ້ນໜັກວ່າ ຂໍ້ກຳນົດຕາມຂໍ້ສະເໜີແນະທົ່ວໄປ ລຳດັບທີ 19 ( ກອງປະຊຸມສະໄໝທີ 11) ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ມີຄວາມສຳຄັນຫລາຍຕໍ່ກັບຄວາມສາມາດຂອງແມ່ຍິງທີ່ຈະໃຊ້ສິດ ແລະເສລີພາບບົນຄວາມສະເໝີພາບກັບຜູ້ຊາຍ ຄະນະກຳມະການຍັງເໜັ້ນໜັກໃຫ້ລັດພາຄີປະຕິບັດຕາມຂໍ້ສະເໜີແນະທົ່ວໄປດັ່ງກ່າວ ເພື່ອຮັບປະກັນວ່າແມ່ຍິງຈະຫລຸດພົ້ນຈາກຄວາມ

ຮຸນແຮງ ບົນພື້ນຖານທາງເພດ ທັງໃນຊີວິດສັງຄົມ ແລະ ໃນຄອບຄົວ ອັນຈະເປັນອຸປະສັກທີ່ໃຫຍ່ຫລວງຕໍ່ສິດທິ ແລະ ເສລີພາບຂອງແມ່ຍິງໃນຖານະສ່ວນບຸກຄົນ;

## ຂໍ້ສະຫງວນ

41. ຄະນະກຳມະການໄດ້ສັງເກດດ້ວຍຄວາມເປັນຫ່ວງ ແລະ ກັງວົນເປັນຢ່າງຫຍິ່ງເຖິງຈຳນວນລັດພາຄີທີ່ຕັ້ງຂໍ້ສະຫງວນສຳລັບມາດຕາ 16 ທັງໝົດຂອງມາດຕາ ຫຼື ບາງສ່ວນ ໂດຍສະເພາະຢ່າງຫຍິ່ງເມື່ອມີການຕັ້ງຂໍ້ສະຫງວນສຳລັບ ມາດຕາ 2 ໂດຍອ້າງວ່າການປະຕິບັດຕາມມາດຕາດັ່ງກ່າວ ອາດຂັດກັບທັດສະນະເລື່ອງຄອບຄົວ ຊຶ່ງເປັນທີ່ຍອມຮັບທົ່ວໄປ, ທັດສະນະດັ່ງກ່າວສ່ວນໜຶ່ງແມ່ນນອນຢູ່ບົນພື້ນຖານຂອງຄວາມເຊື່ອທາງດ້ານວັດທະນະທຳ ຫຼື ສາສະໜາ ຫຼື ສະຖານະພາບທາງດ້ານເສດຖະກິດ ແລະ ການເມືອງຂອງປະເທດ;

42. ຫລາຍປະເທດເຫລົ່ານີ້ ຍັງມີຄວາມເຊື່ອໃນໂຄງສ້າງຂອງຄອບຄົວແບບຜູ້ຊາຍເປັນໃຫຍ່ ທີ່ກຳນົດໃຫ້ພໍ່, ຜົວ ຫຼື ລູກຊາຍ ຢູ່ໃນຕຳແໜ່ງທີ່ສູງກວ່າໃນບາງປະເທດ ຊຶ່ງທັດສະນະແບບສຸດທ້າຍ ຫຼື ແນວຄິດທີ່ມີຄວາມຮຸນແຮງອື່ນໆ ຫຼື ຄວາມຍາກລຳບາກໃນທາງເສດຖະກິດໄດ້ຜັກດັນໃຫ້ມີການທວນຄືນໄປສູ່ຄ່ານິຍົມ ແລະ ປະເພນີປະຕິບັດແບບດັ້ງເດີມ ຖານະຂອງແມ່ຍິງໃນຄອບຄົວມັກຈະຕົກຕ່ຳລົງຢ່າງເຫັນໄດ້ຢ່າງຊັດເຈນໃນຂະນະທີ່ປະເທດອື່ນໆຊຶ່ງໄດ້ມີການຍອມຮັບກັນວ່າ ຄວາມກ້າວໜ້າທາງເສດຖະກິດ ແລະ ຄວາມເປັນຢູ່ທີ່ດີຂອງຊຸມຊົນ ໂດຍລວມຂອງສັງຄົມສະໄໝໃໝ່ນັ້ນ ຕ້ອງອາໄສການມີສ່ວນຮ່ວມຂອງບຸກຄົນທີ່ຢູ່ໃນໄວຜູ້ໃຫຍ່ທັງໝົດ ຢ່າງສະເໝີພາບກັນບໍ່ວ່າຈະເປັນເພດໃດກໍຕາມ ສິ່ງທີ່ຕ້ອງຫ້າມ ແລະຄວາມຄິດໃນແງ່ປະຕິກິລິຍາ ຫຼືຄວາມຄິດສຸດຂົ້ວດັ່ງເຊັ່ນທີ່ກ່າວມານີ້ ຈະຖືກຜັກດັນໃຫ້ຄ່ອຍໆໝົດໄປ;

43. ຕາມມາດຕາ 2, ມາດຕາ 3 ແລະ ໂດຍສະເພາະຢ່າງຫຍິ່ງ ມາດຕາ 24 ຄະນະກຳມະການຮຽກຮ້ອງໃຫ້ລັດພາຄີທັງໝົດຄ່ອຍໆພັດທະນາຕາມລຳດັບໂດຍການມຸ່ງໝັ້ນ, ຢຸດຕິ, ຂັດຂວາງ ສິ່ງທີ່ສະແດງເຖິງຄວາມບໍ່ສະເໝີພາບໃດໆໃນຄອບຄົວ ເພື່ອໃຫ້ບັນລຸເຖິງສະພາບການທີ່ແຕ່ລະປະເທດທີ່ຈະຖອນຂໍ້ສະຫງວນທີ່ຕັ້ງໄວ້ ໂດຍສະເພາະແມ່ນມາດຕາ 9, ມາດຕາ 15 ແລະ 16 ຂອງສົນທິສັນຍານີ້.

44. ລັດພາຄີ ຄວນຈະມຸ່ງໝັ້ນ, ຢັບຢັ້ງ, ຂັດຂວາງ ສິ່ງທີ່ສະແດງເຖິງຄວາມບໍ່ສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍ ຊຶ່ງໄດ້ຮັບການຮັບຮອງຕາມກົດໝາຍ ຫຼືໂດຍກົດຂອງສາສະໜາ ຫຼື ຂອງ

ເອກະຊົນ ຫຼື ໂດຍຮີດຄອງ ແລະ ດຳເນີນການເພື່ອໃຫ້ບັນລຸເຖິງສະພາບການທີ່ຈະມີການຍົກເລີກຂໍ້ສະຫງວນ ໂດຍສະເພາະຕໍ່ ມາດຕາ 16;

45. ຈາກການກວດສອບບົດລາຍງານສະບັບທຳອິດ ແລະ ສະບັບຕໍ່ໆມາຄະນະກຳມະການສັງເກດວ່າໃນກໍລະນີຂອງລັດພາຄີຂອງສົນທິສັນຍານີ້ທີ່ໄດ້ໃຫ້ສັດຕະຍາບັນ ໂດຍບໍ່ຕ້ອງຕັ້ງຂໍ້ສະຫງວນກໍ່ຍັງອາດມີກົດໝາຍບາງສະບັບ ໂດຍສະເພາະທີ່ກ່ຽວກັບຄອບຄົວຊຶ່ງບໍ່ສອດຄ່ອງກັບບົດບັນຍັດຂອງສົນທິສັນຍາ;

46. ກົດໝາຍເຫລົ່ານີ້ຍັງມີມາດຕະການຫລາຍຢ່າງ ຊຶ່ງມີການຈຳແນກຕໍ່ແມ່ຍິງ ບົນພື້ນຖານຂອງບັນທັດຖານ, ຮີດຄອງ ແລະ ອະຄະຕິທາງວັດທະນະທຳສັງຄົມ ການທີ່ລັດເຫລົ່ານີ້ມີສະພາບການສະເພາະໃນສ່ວນທີ່ກ່ຽວກັບມາດຕາຕ່າງໆ ດັ່ງທີ່ໄດ້ກ່າວມາແລ້ວ ຈຶ່ງເປັນການຍາກທີ່ຄະນະກຳມະການຈະປະເມີນ ແລະ ເຂົ້າໃຈເຖິງສະຖານະພາບຂອງແມ່ຍິງ;

47. ໂດຍອ້າງເຖິງມາດຕາ 1 ແລະ 2 ຂອງສົນທິສັນຍານີ້ເປັນພິເສດ ຄະນະກຳມະການຂໍຮຽກຮ້ອງໃຫ້ລັດພາຄີໃຊ້ຄວາມພະຍາຍາມທີ່ຈຳເປັນ ເພື່ອເຮັດການກວດສອບສະຖານະການທີ່ແນ່ນອນກ່ຽວກັບປະເດັນຕ່າງໆ ທີ່ກ່າວມາ ແລະ ເພື່ອຈະມີມາດຕະການທີ່ຈຳເປັນ ໃນການຈັດການ ກັບກົດໝາຍຂອງລັດ ຊຶ່ງມີຂໍ້ກຳນົດ ທີ່ຈຳແນກຕໍ່ແມ່ຍິງ;

## ການລາຍງານ

48. ໂດຍອາໄສຄວາມເຫັນຈາກຂໍ້ສະເໜີແນະທົ່ວໄປນີ້ ບົດລາຍງານຂອງລັດພາຄີຄວນ:

(ກ) ສະແດງຂັ້ນຕອນຄວາມກ້າວໜ້າໃນປະເທດນັ້ນໆ ໄດ້ດຳເນີນການແລ້ວ ເພື່ອຖອນຂໍ້ສະຫງວນທັງໝົດຕໍ່ສົນທິສັນຍານີ້ ໂດຍສະເພາະແມ່ນຂໍ້ສະຫງວນຕໍ່ມາດຕາ 6;

(ຂ) ຊີ້ໃຫ້ເຫັນວ່າກົດໝາຍຂອງລັດສອດຄ່ອງກັບຫລັກການຕາມ ມາດຕາ 9 ,ມາດຕາ 15 ແລະ 16 ຫຼືບໍ່ ແລະ ໃນກໍລະນີໃດແດ່ທີ່ບໍ່ມີການປະຕິບັດທີ່ສອດຄ່ອງກັບກົດໝາຍ ຫຼື ສົນທິສັນຍານີ້ບໍ່ວ່າຈະດ້ວຍເຫດຜົນທີ່ກ່ຽວກັບກົດຂອງສາສະໜາ ຫຼື ເອກະຊົນ ຫຼື ໂດຍຮີດຄອງ;

## ນິຕິບັນຍັດ

49. ລັດພາຄີຄວນບັນຍັດ ແລະ ບັງຄັບໃຊ້ກົດໝາຍທີ່ຈຳເປັນ ແລະສອດຄ່ອງກັບສົນທິສັນຍານີ້ໂດຍສະເພະແມ່ນໃຫ້ສອດຄ່ອງກັບ ມາດຕາ 9 ມາດຕາ 15 ແລະ 16;

## ການສະໜັບສະໜູນໃຫ້ມີການປະຕິບັດທີ່ສອດຄ່ອງກັບສົນທິສັນຍາ

50. ໂດຍອາໄສຄວາມຈາກຂໍ້ສະເໜີແນະທົ່ວໄປນີ້ ແລະດັ່ງທີ່ປາກົດໃນມາດຕາ 2, 3 ແລະ 24 ລັດພາຄີຄວນລິເລີ່ມມາດຕະການທີ່ເໜັ້ນໃສ່ສະໜັບສະໜູນໃຫ້ມີການປະຕິບັດທີ່ສອດຄ່ອງກັບຫລັກການຂອງສົນທິສັນຍານີ້ ໂດຍສະເພະຢ່າງຍິ່ງ ເມື່ອປາກົເວ່າມີກົດຂອງສາສະໜາ ຫຼື ເອກະ ຊົນ ຫຼື ຮີດຄອງທີ່ຂັດກັບຫລັກການດັ່ງກ່າວ;

## GR22

## ຂໍ້ສະເໜີແນະທົ່ວໄປ ລຳດັບທີ 22

## ການແກ້ໄຂມາດຕາ 20 ຂອງສົນທິສັນຍາ

ກອງປະຊຸມສະໄໝທີ ສິບສີ່ ( 1995 )

*ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ;*

*ໂດຍສັງເກດວ່າ*ລັດພາຄີຂອງສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບແບການຈຳແນກຕໍ່ແມ່ຍິງ ຈະປະຊຸມກັນໃນລະຫວ່າງປີ ຄສ 1995 ເພື່ອພິຈາລະນາການແກ້ໄຂມາດຕາ 20 ຂອງສົນທິສັນຍາຕາມຄຳຂໍຂອງສະມັດຊາສະຫະປະຊາຊາດ;

*ໂດຍລະນຶກເຖິງ* ການຕັດສິນໃຈທີ່ຜ່ານມາຂອງຄະນະກຳມະການເມື່ອສະໄໝກອງປະຊຸມທີ່ສິບທີ່ຈະຮັບປະກັນຄວາມມີປະສິດທິພາບຂອງການເຮັດວຽກ ແລະ ເພື່ອປ້ອງກັນການເກີດພາລະວຽກສະສົມສົມຫລາຍເກີນໄປ ໃນການພິຈາລະນາບົດລາຍງານຂອງລັດພາຄີ;

*ໂດຍລະນຶກ* ວ່າສົນທິສັນຍານີ້ເປັນຂໍ້ຕົກລົງລະຫວ່າງປະເທດ ວ່າດ້ວຍສິດທິມະນຸດ ຊຶ່ງທີ່ຜ່ານມາມີລັດພາຄີໃຫ້ສັດຕະຍາບັນເປັນຈຳນວນຫລາຍທີ່ສຸດ;

*ໂດຍພິຈາລະນາ* ວ່າມາດຕາຕ່າງໆຂອງສົນທິສັນຍາລະບຸເຖິງສິດທິມະນຸດຂັ້ນພື້ນຖານຂອງແມ່ຍິງໃນທຸກດ້ານຂອງຊີວິດປະຈຳວັນ ແລະ ທຸກພາກຂອງສັງຄົມ ແລະລັດ;

*ໂດຍມີຄວາມຫ່ວງໃຍ* ກ່ຽວກັບພາລະວຽກງານຂອງຄະນະກຳມະການ ອັນເປັນຜົນຈາກຈຳນວນການໃຫ້ສັດຕະຍາບັນທີ່ເພີ່ມຫລາຍຂຶ້ນພ້ອມໆກັບການເພີ່ມພູນຂອງບົດລາຍງານ ທີ່ລໍຖ້າການພິຈາລະນາດັ່ງທີ່ໄດ້ ກຳໜົດໄວ້ໃນພາກທີ່ໜຶ່ງ;

*ໂດຍມີຄວາມເປັນຫ່ວງຫ່ວງໃຍ ອີກດ້ວຍ*ກ່ຽວກັບການປະຊ່ວງເວລາທີ່ຍາວນານນັບຈາກລັດພາຄີທີ່ສົ່ງບົດລາຍງານເຂົ້າມາຈົນເຖິງວາລະທີ່ບົດລາຍງານນັ້ນ ຈະໄດ້ຮັບການພິຈາລະນາຊຶ່ງເຮັດໃຫ້ລັດຕ້ອງຊອກຫາຂໍ້ມູນເພີ່ມເຕີມ ເພື່ອປັບປຸງບົດລາຍງານຂອງຕົນໃຫ້ທັນກັບຄວາມປ່ຽນແປງຂອງສະຖານະການ;

*ໂດຍຄຳນຶງ* ເຖິງວ່າຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງ ເປັນຄະນະດຽວໃນບັນດາອົງກອນທີ່ເບິ່ງແຍງ ຂໍ້ຕົກລົງດ້ານສິດທິມະນຸດ ທີ່ມີຂໍ້ຈຳກັດເລື່ອງລະຍະເວລາການປະຊຸມລະບຸໄວ້ໃນໂຕຂອງສົນທິສັນຍາເອງ ພ້ອມຍັງມີລະຍະເວລາການປະຊຸມສັ້ນທີ່ສຸດ ໃນບັນດາອົງກອນທີ່ເບິ່ງແຍງຂໍ້ຕົກລົງດ້ານສິດທິມະນຸດ ດັ່ງທີ່ໄດ້ກຳໜົດໄວ້ໃນພາກທີສອງ;

*ໂດຍສັງເກດ* ວ່າການຈຳກັດລະຍະເວລາຂອງສະໄໝກອງປະຊຸມ ຕາມທີ່ໄດ້ກຳນົດໄວ້ ໃນສົນທິສັນຍານັ້ນ ໄດ້ກາຍເປັນອຸປະສັກສຳຄັນຕໍ່ກັບການເຮັດວຽກຢ່າງມີປະສິດທິພາບ ຂອງຄະນະກຳມະການພາຍໃຕ້ຂອບເຂດພາລະໜ້າທີ່ທີ່ໄດ້ລະບຸໃນສົນທິສັນຍາ;

1. *ສະເໜີແນະ* ວ່າລັດພາຄີຄວນພິຈາລະນາໃຫ້ມີການປ່ຽນແປງ ມາດຕາ 20 ຂອງສົນທິສັນຍາໃນໃນສ່ວນທີ່ກ່ຽວກັບລະຍະເວລາໃນກອງປະຊຸມຂອງຄະນະກຳມະການ ເພື່ອໃຫ້ຄະນະກຳມະການໄດ້ມີການປະຊຸມປະຈຳປີເປັນລະຍະເວລາ ຕາມທີ່ເຫັນວ່າສົມຄວນແກ່ຄວາມຈຳເປັນໃນການທີ່ຈະປະຕິບັດງານໄດ້ຢ່າງມີປະສິດທິພາບ ຕາມພາລະໜ້າທີ່ທີ່ໄດ້ລະບຸໃນສົນທິສັນຍາ ທັງນີ້ໂດຍບໍ່ມີຂໍ້ຈຳກັດເປັນອັນສະເພາະ ເວັ້ນເສຍແຕ່ຈະເປັນການຕັດສິນໃຈຂອງສະມັດຊາສະຫະປະຊາຊາດ.

2. *ສະເໜີແນະ ດ້ວຍວ່າ*ໃນລະຫວ່າງທີ່ລໍຖ້າໃຫ້ມີການດຳເນີນການປ່ຽນແປງໃຫ້ແລ້ວຮຽບຮ້ອຍຕາມຂັ້ນຕອນໃຫ້ສະມັດຊາສະຫະປະຊາຊາດ ໃຫ້ອຳນາດແກ່ຄະນະກຳມະການເປັນອັນສະເພາະທີ່ຈະເປີດກອງປະຊຸມເປັນສອງສະໄໝ ສະໄໝລະສາມອາທິດ ໃນປີ 1996 ໂດຍມີຄະນະທີ່ເຮັດວຽກກະກຽມກອງປະຊຸມໃນແຕ່ລະຄັ້ງ;

3. *ສະເໜີແນະຕໍ່ໄປ* ວ່າໃຫ້ກອງປະຊຸມຂອງລັດພາຄີ ຮັບຟັງການລາຍງານດ້ວຍຄຳເວົ້າ ໂດຍປະທານຄະນະກຳມະການກ່ຽວກັບຄວາມທຸກຍາກລຳບາກ ທີ່ຄະນະກຳມະການຕ້ອງໄດ້ພົບພໍ້ໃນການປະຕິບັດຕາມພາລະໜ້າທີ່;

4. *ສະເໜີແນະ* ໃຫ້ເລຂາທິການສະຫະປະຊາຊາດແຈ້ງຂໍ້ມູນກ່ຽວກັບພາລະໜ້າທີ່ ຂອງຄະນະກຳມະການ ແລະ ຂໍ້ມູນທາງປຽບທຽບກັບການເຮັດວຽກຂອງອົງກອນທີ່ຮັກສາຂໍ້ຕົກລົງດ້ານສິດທິມະນຸດອື່ນໆ ໃຫ້ລັດພາຄີໄດ້ຮັບຊາບໃນລະຫວ່າງການປະຊຸມ.

## GR 23

## ຂໍ້ສະເໜີແນະທົ່ວໄປ ລຳດັບທີ 23

## ຊີວິດທາງການເມືອງ ແລະ ສາທາລະນະ(ສັງຄົມ)

ກອງປະຊຸມສະໄໝທີ ສິບຫົກ ( 1997 )

ລັດພາຄີຈະດຳເນີນມາດຕະການທີ່ເໝາະສົມທັງໝົດເພື່ອລົບລ້າງການຈຳແນກຕໍ່ແມ່ຍິງໃນດ້ານທີ່ກ່ຽວກັບຊີວິດທາງດ້ານການເມືອງ ແລະ ຊີວິດສາທາລະນະ ໃນປະເທດນັ້ນໆ ໂດຍສະເພາະຢ່າງຫຍິ່ງຈະຮັບປະກັນໃຫ້ແມ່ຍິງມີສິດສະເໝີພາບກັບຜູ້ຊາຍໃນເລື່ອງຕໍ່ໄປນີ້;

(ກ) ເພື່ອລົງຄະແນນສຽງໃນການເລືອກຕັ້ງ ແລະການສຳຫລວດປະຊາມະຕິທັງໝົດ ແລະ ເພື່ອສາມາດລົງສະໝັກຮັບເລືອກຕັ້ງເຂົ້າສູ່ອົງກອນທີ່ມີການເລືອກຕັ້ງສາທາລະນະທັງໝົດ;

(ຂ) ເພື່ອທີ່ຈະມີສ່ວນຮ່ວມໃນການກຳນົດນະໂຍບາຍຂອງລັດຕະຫລອດຈົນການປະຕິບັດຕາມນະໂຍບາຍນັ້ນໆ ແລະ ເພື່ອການດຳລົງຕຳແໜ່ງລາຊະການ ແລະ ປະຕິບັດລາຊະການໃນລັດຖະບານທຸກລະດັບ;

(ຄ) ເພື່ອທີ່ຈະມີສ່ວນຮ່ວມໃນອົງກອນ ແລະ ສະມາຄົມທີ່ບໍ່ແມ່ນຂອງລັດຖະບານ ຊຶ່ງມີກິດຈະກຳກ່ຽວຂ້ອງກັບສາທາລະນະ ແລະຊີວິດທາງການເມືອງຂອງປະເທດ.

## ຄວາມເປັນມາ

1. ສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ໃຫ້ຄວາມສຳຄັນເປັນພິເສດໃນເລື່ອງການມີສ່ວນຮ່ວມຂອງແມ່ຍິງໃນຊີວິດສາທາລະນະຂອງປະເທດຂອງຕົນພາກອະລຳພະບົດຂອງ ສົນທິສັນຍານີ້ມີຂໍ້ຄວາມສ່ວນໜຶ່ງລະບຸວ່າ:

" *ໂດຍລະນຶກ* ວ່າການຈຳແນກຕໍ່ແມ່ຍິງ ແມ່ນຂັດຕໍ່ກັບຫລັກການເລື່ອງຄວາມສະເໝີພາບຂອງສິດທິ ແລະຄວາມເຄົາລົບຕໍ່ສັກສີຂອງມະນຸດ ເປັນອຸປະສັກຕໍ່ການທີ່ແມ່ຍິງ ຈະເຂົ້າຮ່ວມໃນຊີວິດທາງການເມືອງ, ສັງຄົມ, ເສດຖະກິດ ແລະວັດທະນະທຳ ໃນປະເທດຂອງຕົນ ໂດຍສະເໝີພາບກັນກັບຜູ້ຊາຍ, ຂັດຂວາງການຂະຫຍາຍ ຕົວຂອງຄວາມຮຸ່ງເຮືອງຂອງສັງຄົມ ແລະ ຄອບຄົວ ແລະເຮັດໃຫ້ການພັດທະນາສັກກະຍາພາບຕ່າງໆຂອງແມ່ຍິງຢ່າງເຕັມທີ່ ເພື່ອການຮັບໃຊ້ປະເທດຂອງຕົນ ແລະມະນຸດເປັນໄປໄດ້ຍາກຍິ່ງຂຶ້ນ "

2. ພາກອະລຳພະບົດ ຂອງສົນທິສັນຍາ ຍັງໄດ້ເໜັ້ນໜັກເຖິງຄວາມສຳຄັນຂອງການມີສ່ວນຮ່ວມຂອງແມ່ຍິງ ໃນການຕັດສິນໃຈດັ່ງນີ້:

" *ໂດຍເຊື່ອໝັ້ນ* ວ່າການພັດທະນາຢ່າງເຕັມທີ່ ແລະ ສົມບູນຂອງປະເທດໜຶ່ງໆ ສະຫວັດດີພາບຂອງໂລກ ແລະ ເຫດແຫ່ງສັນຕິພາບນັ້ນຈຳເປັນຕ້ອງອາໄສການມີສ່ວນຮ່ວມຂອງ ແມ່ຍິງຢ່າງເຕັມທີ່ໃນທຸກໆດ້ານ ໂດຍສະເໝີພາບກັບຜູ້ຊາຍ "

3. ຫຍິ່ງໄປກວ່ານັ້ນຄໍາວ່າ " ການຈໍາແນກຕໍ່ແມ່ຍິງ " ຕາມມາດຕາ 1 ຂອງສົນທິສັນຍາ ຍັງຖືກແປຄວາມໝາຍໃຫ້ໝາຍເຖິງ:

" ການສ້າງຄວາມແຕກຕ່າງ, ການກີດກັ້ນ (ຂັດຂວາງ) ຫລື ການຈໍາກັດໃດໆ ເພາະເຫດການທາງເພດ ຊຶ່ງສົ່ງຜົນ ຫລື ມີຈຸດປະສົງເປົ້າໝາຍ ເພື່ອການບັ່ນຮອນ ຫລື ລົບລ້າງການຍອມຮັບ, ການຄົງໄວ້ ແລະການໃຊ້ສິດທິມະນຸດ ແລະເສລີພາບຂັ້ນພື້ນຖານໃນດ້ານການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທໍາ ແລະ ພົນລະເມືອງ ຫລື ດ້ານອື່ນໃດຂອງແມ່ຍິງ ໂດຍບໍ່ຂຶ້ນກັບສະຖານະພາບການແຕ່ງດອງ ບົນພື້ນຖານຂອງຄວາມສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍ "

4. ສົນທິສັນຍາ, ຖະແຫລງການ ແລະຂໍ້ວິເຄາະໃນທາງລະຫວ່າງປະເທດອື່ນໆ ໃຫ້ຄວາມສໍາຄັນໃນເລື່ອງການມີສ່ວນຮ່ວມຂອງແມ່ຍິງ ໃນຊີວິດສາທາລະນະ ໄດ້ກໍານົດກອບສໍາຫລັບມາດຖານລະຫວ່າງປະເທດໃນເລື່ອງຄວາມສະເໝີພາບໄວ້ໃນເອກະສານເຫລົ່ານີ້ໄດ້ແກ່ ຖະແຫລງການສາກົນວ່າດ້ວຍສິດທິມະນຸດ[1] ກະຕິກາລະຫວ່າງປະເທດວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ[2]ກະຕິກາລະຫວ່າງປະເທດວ່າດ້ວຍສິດທິມະນຸດທາງການເມືອງຂອງແມ່ຍິງ[3] ຖະແຫລງການວຽນນາ[4] ວັກ[13] ຂອງຖະແຫລງການ ແລະແຜນປະຕິບັດການປັກກິ່ງ [5] ຂໍ້ສະເໜີແນະທົ່ວໄປລໍາດັບທີ່[5] ແລະ[8] ຂອງສົນທິສັນຍາສະບັບນີ້ ຂໍ້ແນະນໍາທົ່ວໄປລໍາດັບທີ່ 25 ຂອງຄະນະກໍາມະການສິດທິມະນຸດ [7] ຂໍ້ສະເໜີແນະຂອງສະຫະພາບຢູໂລບ ເລື່ອງການມີສ່ວນຮ່ວມຢ່າງສະເໝີພາບຂອງ ແມ່ຍິງ ແລະ ຜູ້ຊາຍ ໃນຂະບວນການຕັດສິນໃຈ [8] ແລະເອກະສານຂອງຄະນະກໍາມາທິການຢູໂລບເລື່ອງ " ວິທີການສ້າງປື້ມລະຫວ່າງເພດພາບ (ຄວາມເປັນເພດຍິງ ຫຼື ຊາຍ) ໃນການຕັດສິນໃຈທາງການເມືອງ "[9]

5. ມາດຕາ 7 ກໍານົດໃຫ້ລັດພາຄີຕ້ອງດໍາເນີນມາດຕະການທີ່ເໝາະສົມທັງຫລາຍ ເພື່ອລົບລ້າງການຈໍາແນກຕໍ່ແມ່ຍິງ ໃນສ່ວນທີ່ກ່ຽວກັບຊີວິດການເມືອງ ແລະ ຊີວິດສາທາລະນະ ແລະ ຮັບປະກັນວ່າພວກເຂົາຈະມີສິດສະເໝີພາບກັບຜູ້ຊາຍ ໃນເລື່ອງຊີວິດທາງດ້ານການເມືອງ ແລະ ສາທາລະນະຂໍ້ກໍານົດທີ່ລະບຸໄວ້ໃນມາດຕາ 7 ມີຄວາມໝາຍເຖິງຊີວິດທາງການເມືອງ ແລະ ສາທາລະນະໃນທຸກດ້ານ ແລະ ບໍ່ ໄດ້ກັດຢູ່ສະເພາະດ້ານ ທີ່ລະບຸໄວ້ໃນວັກ (ກ) (ຂ) ແລະ (ຄ) ເທົ່ານັ້ນຊີວິດທາງການເມືອງ ແລະ ສາທາລະນະຂອງປະເທດນັ້ນເປັນແນວຄວາມຄິດທີ່ກວ້າງຂວາງ ຊຶ່ງໝາຍເຖິງການໃຊ້ອໍານາດທາງການເມືອງ ໂດຍສະເພາະແມ່ນການໃຊ້ອໍານາດທາງນິຕິບັນຍັດ, ອໍານາດຕຸລາການ, ການບໍລິຫານ ແລະການດໍາເນີນການຊີວິດທາງການເມືອງ ແລະ ສາທາລະນະຍັງໝາຍເຖິງການບໍລິຫານງານສາທາລະນະໃນທຸກດ້ານຕະຫລອດການກໍານົດ ແລະ ປະຕິບັດຕາມນະໂຍບາຍໃນລະດັບລະຫວ່າງປະເທດ, ລະດັບປະເທດ, ພູມມີພາກ ແລະ ທ້ອງຖິ່ນແນວຄວາມຄິດນີ້ຍັງລວມຄວາມເຖິງ ປະຊາສັງຄົມໃນຫລາຍໆດ້ານ ລວມທັງຄະນະກໍາມະ ການສາທາລະນະແລະສະພາທ້ອງຖິ່ນ ແລະ ກິດຈະກໍາຂອງອົງກອນເຊັ່ນ: ພັກການເມືອງ, ສະຫະພາບ ແຮງງານ,

ສະມາຄົມວິຊາຊີບ ຫລື ອຸດສາຫະກຳ, ອົງກອນແມ່ຍິງ, ອົງກອນຊຸມຊົນ ແລະ ອົງກອນອື່ນໆ ທີ່ກ່ຽວຂ້ອງກັບຊີວິດທາງການເມືອງ ແລະສາທາລະນະ.

6. ສົນທິສັນຍານີ້ແນເຫັນວ່າ ຄວາມສະເໝີພາບທີ່ຈະກໍ່ໃຫ້ເກີດປະສິດທິຜົນນັ້ນ ຕ້ອງເກີດຂຶ້ນພາຍໃນກອບຂອງລະບົບການເມືອງ ທີ່ພົນລະເມືອງແຕ່ລະຄົນມີສິດທີ່ຈະລົງຄະແນນສຽງ ແລະໄດ້ຮັບການເລືອກ ໃນການເລືອກຕັ້ງທີ່ຈັດຂຶ້ນເປັນປະຈຳຢ່າງແທ້ຈິງ ບົນພື້ນຖານຂອງການມີສິດເລືອກຕັ້ງໂດຍຖ້ວນໜ້າ ແລະ ໂດຍການລົງຄະແນນສຽງແບບປິດລັບ ຊຶ່ງຈະຮັບປະກັນການສີລີພາບໃນການສະແດງຄວາມເຫັນຂອງຜູ້ລົງຄະແນນສຽງ ຕາມທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງລະຫວ່າງປະເທດດ້ານສິດທິມະນຸດຕ່າງໆເຊັ່ນ: ມາດຕາ 21 ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດ ແລະ ມາດຕາ 25 ຂອງກະຕິກາລະຫວ່າງ ປະເທດວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ.

7. ຈຸດໜັກຂອງສົນທິສັນຍານີ້ ໃນເລື່ອງຄວາມສຳຄັນຂອງຄວາມສະເໝີພາບໃນໂອກາດ ແລະ ການມີສ່ວນຮ່ວມໃນຊີວິດສາທາລະນະ ແລະ ການຕັດສິນໃຈ ນຳໄປສູ່ການ ທີ່ຄະນະກຳມະການໄດ້ທົບທວນ ມາດຕາ 7 ແລະ ແນະນຳໃຫ້ລັດພາຄີ ພິຈາລະນາຄວາມເຫັນ ແລະຂໍ້ສະເໜີແນະທີ່ຈະກ່າວດັ່ງຕໍ່ໄປນີ້ ໃນການທົບທວນກົດໝາຍ ແລະ ນະໂຍບາຍ ແລະ ໃນການລາຍງານພາຍໃຕ້ສົນທິສັນຍານີ້.

## ຄວາມເຫັນ

8. ສະຖານທີ່ສາທາລະນະ ແລະ ສະຖານສ່ວນຕົວໃນກິດຈະກຳຂອງມະນຸດ ມັກຖືກເບິ່ງວ່າມີຄວາມແຕກຕ່າງກັນ ແລະ ມີກົດເກນການຄວບຄຸມຕ່າງກັນໄປໂດຍທົ່ວໄປ ແມ່ຍິງມັກຖືກກຳນົດບົດບາດໃຫ້ຢູ່ໃນສະຖານທີ່ສ່ວນຕົວ ຫລື ພາຍໃນເຮືອນ (ບ້ານ) ໂດຍກ່ຽວຂ້ອງຢູ່ກັບການມີລູກ ແລະ ການເບິ່ງແຍງລູກ ແລະ ໃນທຸກສັງຄົມ ກິດຈະກຳເຫລົ່ານີ້ມັກຖືກປະຕິບັດໃນຖານະທີ່ຕ່ຳຕ້ອຍກວ່າ ໃນທາງກົງກັນຂ້າມຊີວິດສາທາລະນະ ຊຶ່ງເປັນຊີວິດທີ່ໄດ້ຮັບຄວາມເຄົາລົບ ແລະ ຍົກຍ້ອງນັ້ນຄວບຄຸມກິດຈະກຳຕ່າງໆທີ່ຫລາກຫລາຍ ຊຶ່ງຢູ່ນອກຂອບເຂດຂອງຊີວິດສ່ວນຕົວ ແລະ ຄວາມເປັນຊີວິດຄອບຄົວພາຍໃນບ້ານນັບແຕ່ອະດີດ ຜູ້ຊາຍເປັນຜູ້ມີບົດບາດຫລັກໃນຊີວິດສາທາລະນະ ແລະຍັງໄດ້ໃຊ້ອຳນາດໃນການຈຳກັດ ແລະກົດຂີ່ຂົ່ມເຫັງແມ່ຍິງໄວ້ພາຍ ໃນສະຖານທີ່ສ່ວນຕົວ.

9. ເຖິງແມ່ນວ່າແມ່ຍິງຈະມີບົດບາດຫລັກໃນການຮັກສາໄວ້ຊຶ່ງຄອບຄົວ ແລະສັງຄົມ ແລະມີບົດບາດໃນການພັດທະນາ ແຕ່ວ່າພວກເຂົາກໍມັກຖືກກີດກັນອອກຈາກຊີວິດທາງການເມືອງ ແລະ ຂະບວນການຕັດສິນໃຈທັງໆທີ່ສິ່ງເຫລົ່ານີ້ເປັນຕົວກຳນົດສະພາບຊີວິດປະຈຳວັນຂອງແມ່ຍິງ ແລະ ອະນາຄົດຂອງສັງຄົມ ໂດຍສະເພາະໃນເວລາທີ່ເກີດວິກິດການແລ້ວ ການກີດກັນ(ຂັດຂວາງ) ເຊັ່ນນີ້ຈະ

ສິ່ງພິມໃຫ້ສຽງຂອງ ແມ່ຍິງ ຕ້ອງງຽບຫາຍໄປເລີຍ ແລະ ບົດບາດລວມທັງປະສົບການຂອງແມ່ຍິງ ຈະກາຍເປັນສິ່ງທີ່ບໍ່ມີໃຜ ສາມາດແນມເຫັນ;

10. ໃນທຸກຊາດປັດໃຈສຳຄັນທີ່ສຸດທີ່ປົກປິດຄວາມສາມາດຂອງແມ່ຍິງ ໃນການມີສ່ວນໃນຊີວິດສາທາລະນະໄດ້ແກ່ກອບທາງວັດທະນະທຳ, ເລື່ອງຄຸນຄ່າ ແລະຄວາມເຊື່ອທາງສາສະໜາ, ການຂາດບໍລິການ ແລະ ການທີ່ຜູ້ຊາຍບໍ່ໄດ້ຊ່ວຍແບ່ງເບົາພາລະວຽກງານ ດ້ານການຈັດການໃນຄອບຄົວ ຕະຫລອດຈົນເຖິງການເບິ່ງແຍງ ແລະ ເບິ່ງແຍງລ້ຽງດູລູກ ໃນທຸກຊາດແບບແຜນທາງວັດທະນະທຳ ແລະ ຄວາມເຊື່ອທາງສາສະໜາ ມີສ່ວນໃນການຈຳກັດແມ່ຍິງໃຫ້ຕ້ອງຢູ່ກັບກິດຈະກຳໃນສະຖານທີ່ຊີວິດສ່ວນຕົວ ແລະ ຂັດຂວາງພວກເຂົາອອກຈາກການມີສ່ວນຮ່ວມ ຢ່າງເຂັ້ມແຂງໃນຊີວິດສາທາລະນະ;

11. ການແບ່ງເບົາພາລະວຽກງານພາຍໃນເຮືອນຂອງແມ່ຍິງ ແລະ ຈະຊ່ວຍໃຫ້ແມ່ຍິງໄດ້ມີສ່ວນຮ່ວມຢ່າງເຕັມສ່ວນໃນຊີວິດຂອງຊຸມຊົນຂອງຕົນ ການທີ່ແມ່ຍິງຕ້ອງເພິ່ງພາຜູ້ຊາຍໃນດ້ານເສດຖະກິດມັກເປັນອຸປະສັກຂັດຂວາງບໍ່ໃຫ້ແມ່ຍິງ ສາມາດຕັດສິນໃຈທາງການເມືອງທີ່ສຳຄັນ ແລະ ມີສ່ວນຮ່ວມຢ່າງເຕັມສ່ວນໃນຊີວິດສາທາລະນະ, ພາລະຊ້ຳຊ້ອນທັງໃນສ່ວນຂອງວຽກງານ ແລະ ການທີ່ຕ້ອງເພິ່ງພາທາງດ້ານເສດຖະກິດປະກອບກັບຊົ່ວໂມງການເຮັດວຽກສາທາລະນະ ແລະ ວຽກການເມືອງທີ່ຍາວນານ ແລະ ຂາດຄວາມຍືດຫຍຸ່ນເຮັດ ໃຫ້ແມ່ຍິງບໍ່ອາດມີບົດບາດທີ່ເຂັ້ມແຂງໄດ້;

12. ພາບທີ່ຕາຍຕົວ ລວມເຖິງສິ່ງທີ່ສະແດງອອກໂດຍສື່ເຮັດໃຫ້ແມ່ຍິງ ທີ່ເຮັດວຽກການເມືອງຕ້ອງຖືກຈຳກັດບົດບາດໃຫ້ຢູ່ໃນສະເພາະປະເດັນເຊັ່ນ: ສິ່ງແວດລ້ອມ, ເດັກນ້ອຍ, ສຸຂະພາບ ແລະ ກັນພວກເຂົາ ອອກຈາກໜ້າທີ່ຮັບຜິດຊອບດ້ານການເງິນ ການຄວບຄຸມງົບປະມານ ແລະ ການຍຸດຕິຄວາມຂັດແຍ່ງອັດຕາການມີສ່ວນຮ່ວມທີ່ຂ້ອນຂ້າງຕ່ຳຂອງແມ່ຍິງ ໃນວິຊາຊີບປະເພດທີ່ຈະພັດທະນາສູ່ຄວາມເປັນນັກການເມືອງໄດ້ນັ້ນ ເປັນອຸປະສັກອີກແບບໜຶ່ງ ໃນປະເທດທີ່ຜູ້ນຳແມ່ຍິງໄດ້ຂຶ້ນສູ່ອຳນາດ ກໍ່ມັກຈະມາຈາກອິດ ທິພົນຂອງ(ພໍ່)ບິດາ, ຜູ້ເປັນຜົວ ຫລື ຍາດຕິພີ່ນ້ອງທີ່ເປັນຜູ້ຊາຍຫລາຍກ່ວາແມ່ຍິງທີ່ປະສົບຜົນສຳເຫລັດ ໃນການເລືອກຕັ້ງດ້ວຍຕົນເອງ;

## ລະບອບການເມືອງ

13. ຫລັກການເລື່ອງຄວາມສະເໝີພາບຂອງແມ່ຍິງ ແລະຜູ້ຊາຍ ໄດ້ຮັບການຢືນຢັນ ໄວ້ໃນລັດຖະທຳ

ມະນູນ ແລະ ກົດໝາຍຂອງປະເທດສ່ວນໃຫຍ່ ແລະ ໄດ້ຂໍ້ຕົກລົງລະຫວ່າງປະເທດທັງຫລາຍ ເຖິງຢ່າງໃດກໍຕາມ ໃນໄລຍະ 50 ປີທີ່ຜ່ານມາ ຜູ້ຍິງຍັງບໍ່ໄດ້ບັນລຸເຖິງຄວາມສະເໝີພາບ ແລະ ຄວາມບໍ່ສະເໝີພາບຂອງແມ່ຍິງປາກົດຢ່າງຊັດເຈນ ໃນລະດັບການມີສ່ວນຮ່ວມທີ່ຕ່ຳໃນຊີວິດສາທາລະນະ ແລະ ການເມືອງ, ນະໂຍບາຍ ແລະ ການຕັດສິນໃຈທີ່ຜູ້ຊາຍໄດ້ເປັນຜູ້ດຳເນີນ ການພຽງແຕ່ຝ່າຍດຽວນັ້ນ ສະທ້ອນໃຫ້ເຫັນ ພຽງບາງສ່ວນຂອງປະສົບການ ແລະສັກກະຍະພາບຂອງມະນຸດອີງການທີ່ຫຼ່ງທຳ ແລະ ມີປະສິດທິພາບຂອງສັງຄົມຈຳເປັນຕ້ອງອາໄສການເຂົ້າມາ ແລະ ມີສ່ວນຮ່ວມຂອງສະມາຊິກທັງໝົດຂອງສັງຄົມ.

14. ຍັງບໍ່ທັນມີລະບອບການເມືອງຂອງປະເທດໃດທີ່ໃຫ້ທັງສິດ ແລະຜົນປະໂຫຍດອັນເກີດຈາກການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ເທົ່າທຽມແກ່ແມ່ຍິງໃນຂະນະທີ່ລະບອບປະຊາທິປະໄຕໃນຫລາຍປະເທດ ເຫດໄດ້ເຮັດໃຫ້ໂອກາດການມີສ່ວນຮ່ວມໃນຊີວິດທາງການເມືອງຂອງແມ່ຍິງດີຂຶ້ນ ແຕ່ອຸປະສັກທາງເສດຖະກິດ, ສັງຄົມ ແລະ ວັດທະນະທຳ ທີ່ແມ່ຍິງຕ້ອງປະເຊີນໜ້າຍັງເປັນຂໍ້ຈຳກັດການມີສ່ວນຮ່ວມຂອງແມ່ຍິງຢ່າງຮຸນແຮງ ບໍ່ສະເພາະແຕ່ປະເທດທີ່ມີການປົກຄອງແບບລະບອບປະຊາທິປະໄຕທີ່ມີຄວາມໝັ້ນຄົງຍາວນານ ກໍ່ຍັງບໍ່ອາດລວມເອົາຄວາມເຫັນ ແລະ ຜົນປະໂຫຍດຂອງປະຊາກອນເຄິ່ງໜຶ່ງທີ່ເປັນເພດຍິງເຂົ້າໄວ້ໄດ້ຢ່າງເຕັມທີ່ ແລະ ສະເໝີພາບ, ສັງຄົມ ທີ່ແມ່ຍິງຖືກຂັດຂວາງອອກຈາກຊີວິດສາທາລະນະ ແລະ ການຕັດສິນໃຈ ຈຶ່ງບໍ່ສາມາດຖືໄດ້ວ່າເປັນສັງຄົມປະຊາທິປະໄຕ ແນວຄວາມຄິດປະຊາທິປະໄຕ ຈະມີຄວາມໝາຍທີ່ແນ່ນອນເປັນຜົນວັດແທກໄດ້ ແລະ ບັງເກີດຜົນທີ່ຍາວນານ ເມື່ອທັງແມ່ຍິງ ແລະ ຜູ້ຊາຍໄດ້ມີສ່ວນຮ່ວມໃນການຕັດສິນໃຈທາງດ້ານການເມືອງ ໂດຍຄຳນຶງເຖິງຜົນປະໂຫຍດຂອງທັງສອງຝ່າຍ ການກວດສອບບົດລາຍງານຂອງລັດພາຄີສະແດງໃຫ້ເຫັນວ່າ ໃນປະເທດໃດທີ່ມີແມ່ຍິງເຂົ້າມາມີສ່ວນຮ່ວມໃນຊີ ວິດສາທາລະນະ ແລະ ການຕັດສິນໃຈຢ່າເຕັມທີ່ ແລະ ສະເໝີພາບ ຈະມີການປະຕິບັດຕາມສິດທິຂອງແມ່ຍິງ ແລະ ໂດຍສອດຄ່ອງກັບສົນທິສັນຍານີ້ຫລາຍຍິ່ງຂຶ້ນ.

## ມາດຕະການພິເສດຊົ່ວຄາວ

15. ເຖິງແມ່ນວ່າການລົບລ້າງອຸປະສັກຕາມກົດໝາຍ ຈະເປັນສິ່ງຈຳເປັນ ແຕ່ກໍຍັງບໍ່ທັນພຽງພໍ ຄວາມບໍ່ໄດ້ຮັບຜົນສຳເລັດ ໃນອັນທີ່ຈະເຮັດໃຫ້ເຫດການ ການມີສ່ວນຮ່ວມຂອງແມ່ຍິງຢ່າງເຕັມສ່ວນ ແລະສະເໝີພາບອາດຈະເກີດຂຶ້ນໂດຍທີ່ບໍ່ໄດ້ເຈຕະນາ ແລະເປັນຜົນຈາກການປະຕິບັດ ແລະ ຂັ້ນຕອນທີ່ຫລ້າຫລັງ ຊຶ່ງມີຈຸດປະສົງເພື່ອສົ່ງເສີມຜູ້ຊາຍໂດຍບໍ່ຕັ້ງໃຈ ມາດຕາ 4 ຂອງສົນທິສັນຍາສົ່ງເສີມໃຫ້ມີການໃຊ້ມາດ ຕະການພິເສດຊົ່ວຄາວ ເພື່ອເຮັດໃຫ້ ມາດຕາ 7 ແລະ 8 ປາກົດຜົນໃນປະເທດທີ່ມີການພັດທະນາຍຸດທະສາດຊົ່ວຄາວ ທີ່ມີປະສິດທິພາບ ເພື່ອທີ່ຈະບັນລຸເຖິງການມີສ່ວນຮ່ວມຢ່າງສະເໝີພາບນັ້ນ ໄດ້ມີການດຳເນີນມາດຕະການຕ່າງໆທີ່ມີຫລາຍຮູບແບບລວມທັງການຄັດເລືອກ, ການໃຫ້ຄວາມຊ່ວຍເຫລືອທາງດ້ານການເງິນ ແລະ ການຝຶກອົບຮົມຜູ້ສະໝັກທີ່ເປັນແມ່ຍິງ ການປັບປຸງຂະບວນການການເລືອກຕັ້ງ , ການໂຄສະນາ ເພື່ອການມີສ່ວນຮ່ວມຢ່າງ

ສະເໝີພາບ, ການຕັ້ງເປົ້າໝາຍໃນທາງຕົວເລກ ແລະ ກຳນົດສັດສ່ວນ ແລະ ການພະຍາຍາມຊອກຫາແມ່ຍິງມາບັນຈຸໃນຕຳແໜ່ງສາທາລະນະເຊັ່ນ:ໃນລະບົບຕຸລາການ ຫລື ກຸ່ມວິຊາຊີບອື່ນໆຊຶ່ງມີບົດບາດສຳຄັນໃນຊີວິດຄວາມເປັນຢູ່ປະຈຳວັນຂອງທຸກສັງຄົມ, ການລົບລ້າງອຸປະສັກຢ່າງເປັນທາງການ ແລະ ການນຳມາດຕະການພິເສດຊົ່ວຄາວມາໃຊ້ເພື່ອ ສະໜັບສະໜູນໃຫ້ເກີດການມີສ່ວນຮ່ວມຢ່າງສະເໝີພາບຂອງແມ່ຍິງ ແລະ ຜູ້ຊາຍໃນຊີວິດສາທາລະນະໃນສັງຄົມຂອງຕົນເອງນັ້ນຖືເປັນເງື່ອນໄຂເບື້ອງຕົ້ນ ທີ່ສຳຄັນທີ່ຈະເຮັດໃຫ້ເກີດຄວາມສະເໝີພາບຢ່າງແທ້ຈິງໃນຊີວິດທາງການເມືອງ ເຖິງຢ່າງໃດກໍຕາມການທີ່ຈະຍົກເລີກການຄອບງຳຂອງເພດຊາຍ ໃນະຖານທີ່ສາທາລະນະທີ່ສືບທອດກັນມາຫລາຍສະຕະວັດນັ້ນ ແມ່ຍິງຈຳເປັນຕ້ອງອາໄສການສົ່ງເສີມ ແລະ ສະໜັບສະໜູນຈາກທຸກພາກສ່ວນຂອງສັງຄົມ ເພື່ອທີ່ຈະບັນລຸເຖິງການມີສ່ວນຮ່ວມຢ່າງເຕັມທີ່ ແລະ ມີປະສິດທິຜົນ ຊຶ່ງລັດພາຄີຂອງສົນທິສັນຍາສະບັບນີ້ລວມທັງພັກການເມືອງ ແລະ ເຈົ້າໜ້າທີ່ຂອງລັດຕ້ອງມີບົດບາດນຳໃນການສົ່ງເສີມດັ່ງກ່າວ ລັດພາຄີມີໜ້າທີ່ຕ້ອງຮັບປະກັນວ່າມາດຕະການພິເສດຊົ່ວຄາວຕ່າງໆ ໄດ້ຖືກອອກແບບຂຶ້ນມາຢ່າງຊັດເຈນ ເພື່ອສະໜັບສະໜູນຫລັກການເລື່ອງຄວາມສະເໝີພາບ ແລະ ດັ່ງນັ້ນຈຶ່ງ ສອດຄ່ອງກັບຫລັກການຂອງກົດໝາຍ, ລັດຖະທຳມະນູນ ຊຶ່ງຮັບປະກັນຄວາມສະເໝີພາບ ຂອງພົນລະ ເມືອງທຸກຄົນ;

## ບົດສະຫລຸບ

16. ປະເດັນສຳຄັນທີ່ໄດ້ຮັບການເໜັ້ນໜັກ ໃນແຜນປະຕິບັດການປັກກິ່ງ ໄດ້ແກ່ຊ່ອງຫວ່າງລະຫວ່າງກົດໝາຍ ແລະການປະຕິບັດຕົວຈິງ ຫລືລະຫວ່າງສະພາບແຫ່ງສິດ ກັບສະພາບຄວາມເປັນຈິງໃນເລື່ອງການມີສ່ວນຮ່ວມທາງດ້ານການເມືອງ ແລະ ຊີວິດສາທາລະນະຂອງແມ່ຍິງໂດຍທົ່ວໄປຜົນງານຂອງການວິໄຈຊີ້ໃຫ້ເຫັນວ່າຫາກແມ່ຍິງ ໄດ້ມີສ່ວນຮ່ວມເພີ່ມຂຶ້ນເປັນຮ້ອຍລະ 30 ເຖິງ 35 ( ຫລືທີ່ເອີ້ນໂດຍທົ່ວໄປວ່າ " ປະລິມານທີ່ນຳໄປສູ່ການປ່ຽນແປງ (Critical mass )" ກໍຈະກໍ່ໃຫ້ເກີດຜົນກະທົບຢ່າງແທ້ຈິງຕໍ່ຮູບແບບທາງການເມືອງ ແລະ ເນື້ອໃນການຕັດສິນໃຈ ແລະ ຈະເປັນການເປີດໂສມໜ້າໃໝ່ຂອງຊີວິດທາງ ການເມືອງ;

17. ການທີ່ຈະບັນລຸເຖິງການເປັນຕົວແທນຢ່າງກວ້າງຂວາງ ໃນຊີວິດສາທາລະນະ ແມ່ຍິງຈະຕ້ອງມີຄວາມສະເໝີພາບຢ່າງເຕັມທີ່ໃນການນຳໃຊ້ອຳນາດທາງການເມືອງ ແລະ ເສດຖະກິດແມ່ຍິງຕ້ອງເຂົ້າຮ່ວມຢ່າງເຕັມທີ່ ແລະ ສະເໝີພາບໃນການຕັດສິນໃຈທຸກລະດັບທັງລະດັບຊາດ ແລະ ນາໆຊາດເພື່ອທີ່ພວກເຂົາຈະໄດ້ສ້າງປະໂຫຍດທີ່ສຸມໃສ່ເປົ້າໝາຍ ເລື່ອງຄວາມສະເໝີພາບ, ການພັດທະນາ ແລະ ການ ບັນລຸສັນຕິພາບ, ການເບິ່ງເລື່ອງເພດແມ່ນມີຄວາມສຳຄັນຫລາຍທີ່ສຸດຫາກເຮົາຕ້ອງການບັນລຸເຖິງເປົ້າໝາຍເຫລົ່ານີ້ ແລະ ຫາກເຮົາຕ້ອງການຮັບປະກັນວ່າຈະເກີດປະຊາທິປະໄຕຢ່າງແທ້ຈິງ ດ້ວຍເຫດນີ້ຈຶ່ງຈຳ ເປັນທີ່ຈະຕ້ອງໃຫ້ແມ່ຍິງເຂົ້າມາມີສ່ວນໃນຊີວິດສາທາລະນະເພື່ອຈະໄດ້ໃຊ້ປະໂຫຍດຈາກການມີສ່ວນຮ່ວມຂອງພວກເຂົາ ແລະ ເພື່ອຮັບປະກັນວ່າຜົນໂຫຍດຂອງແມ່ຍິງ ຈະໄດ້ຮັບການປົກປ້ອງທັງຍັງ ເປັນການຮັບປະກັນການມີສິດທິມະນຸດຂອງຄົນທຸກຄົນ

ໂດຍບໍ່ມີການແບ່ງແຍກເພດ, ການມີສ່ວນຮ່ວມຢ່າງເຕັມທີ່ຂອງແມ່ຍິງ ມີຄວາມສຳຄັນບໍ່ສະເພາະຕໍ່ການເສີມສ້າງສັກກະຍະພາບຂອງພວກເຂົາເທົ່ານັ້ນ ແຕ່ຈະນຳໄປສູ່ຄວາມກ້າວໜ້າຂອງສັງຄົມໂດຍລວມນຳ;

## ສິດທິທີ່ຈະລົງຄະແນນເລືອກຕັ້ງ ແລະຮັບສະໝັກເລືອກຕັ້ງ (ມາດຕາ 7 ວັກ (ກ))

18. ສົນທິສັນຍານີ້ກຳໜົດໃຫ້ລັດພາຄີຕ້ອງດຳເນີນຂັ້ນຕອນທີ່ເໝາະສົມ ໂດຍຜ່ານທາງລັດຖະບານ ແລະ ກົດໝາຍເພື່ອຮັບປະກັນວ່າແມ່ຍິງຈະໄດ້ສິດທິລົງຄະແນນສຽງ ແລະ ສິດທິໄດ້ຮັບເລືອກໃນການເລືອກຕັ້ງ ແລະ ການລົງປະຊາມະຕິທຸກເທື່ອພາຍໃຕ້ຄວາມສະເໝີພາບກັບຜູ້ຊາຍ ສິດທິດັ່ງກ່າວຕ້ອງປະກົດເປັນຈິງໃນທາງກົດໝາຍ ແລະ ທາງປະຕິບັດ.

19. ການກວດສອບບົດລາຍງານຂອງລັດພາຄີສະແດງໃຫ້ເຫັນວ່າ ໃນເວລາທີ່ລັດຖະບານນັ້ນໄດ້ກຳໜົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍຕ່າງໆ ໂດຍໃຫ້ສິດທິສະເໝີພາບແກ່ແມ່ຍິງ ແລະ ຜູ້ຊາຍ ໃນການລົງຄະແນນສຽງເລືອກຕັ້ງ ແລະ ການຕົກລົງເຫັນດີແຕ່ແມ່ຍິງ ໃນບາງປະເທດຍັງພົບກັບຄວາມຍຸ້ງຍາກໃນການໃຊ້ສິດດັ່ງກ່າວ.

20. ປັດໄຈທີ່ເປັນອຸປະສັກໃນການໃຊ້ສິດທິນີ້ລວມເຖິງສິ່ງຕໍ່ໄປນີ້:

(ກ). ແມ່ຍິງມັກໄດ້ຮັບຂໍ້ມູນໜ້ອຍກວ່າຜູ້ຊາຍ ກ່ຽວກັບຜູ້ສະໝັກຮັບເລືອກຕັ້ງ ຄຳຖະແຫລງຂອງພັກການເມືອງ ແລະຂະບວນການອອກສຽງເລືອກຕັ້ງ ເນື່ອງຈາກລັດຖະບານ ແລະ ພັກການເມືອງບໍ່ໄດ້ເຜີຍແຜ່ຂໍ້ມູນດັ່ງກ່າວ, ປັດໄຈທີ່ສຳຄັນອື່ນໆທີ່ກີດຂວາງການທີ່ແມ່ຍິງ ທີ່ຈະໃຊ້ສິດທິລົງຄະແນນສຽງຢ່າງເຕັມສ່ວນ ແລະ ສະເໝີພາບໄດ້ແກ່ການບໍ່ຮູ້ຈັກໜັງສື, ການຂາດຄວາມຮູ້, ຄວາມເຂົ້າໃຈກ່ຽວກັບລະບົບ ການເມືອງ ແລະກ່ຽວກັບຜົນກະທົບຂອງການປະຕິບັດການທາງການເມືອງ ແລະ ນະໂຍບາຍຕໍ່ຊີວິດຂອງພວກເຂົາ ຄວາມບໍ່ເຂົ້າໃຈໃນເລື່ອງສິດທິຄວາມຮັບຜິດຊອບ ແລະ ໂອກາດໃນການປ່ຽນແປງທີ່ຈະເກີດຂຶ້ນໄດ້ ໂດຍການໃຊ້ສິດທິໃນການເລືອກຕັ້ງ ຈຶ່ງເຮັດໃຫ້ບາງຄັ້ງແມ່ຍິງບໍ່ໄດ້ຂຶ້ນທະບຽນ ເພື່ອການລົງຄະ ແນນສຽງເລືອກຕັ້ງ;

(ຂ) ພາລະວຽກງານທີ່ໜັກເປັນສອງເທົ່າຂອງແມ່ຍິງ ຕະຫລອກຈົນເຖິງຂໍ້ກຳໜົດທາງດ້ານເສດຖະກິດຈະເຮັດໃຫ້ແມ່ຍິງມີເວລາ ແລະ ໂອກາດຈຳກັດໃນການຕິດຕາມການໂຄສະນາເຜີຍແຜ່ເພື່ອການເລືອກຕັ້ງ ແລະ ການຕັດສິນໃຈທີ່ຈະລົງຄະແນນສຽງ ໂດຍມີເສລີພາບຢ່າງເຕັມທີ່;

(ຄ) ໃນຫລາຍປະເທດ(ຊາດ) ມີປະເພນີ ແລະ ຮູບພາບທີ່ຕາຍໂຕທາງສັງຄົມ ແລະ ວັດທະນະທຳບໍ່ໄດ້ສົ່ງເສີມໃຫ້ແມ່ຍິງໄດ້ໃຊ້ສິດໃນການລົງຄະແນນສຽງ ຜູ້ຊາຍຈຳນວນຫລາຍມັກມັກມີອິດທິພົນ ແລະ ອຳນາດຄວບຄຸມການລົງຄະແນນສຽງຂອງແມ່ຍິງລວມໂດຍກົງ ຊຶ່ງລວມເຖິງການລົງຄະ

ແນນສຽງແທນແມ່ຍິງ ລວມທັງໂດຍການຂໍຮ້ອງ ຫລື ການບັງຄັບໂດຍກົງ ຊຶ່ງລວມເຖິງການລົງຄະແນນສຽງແທນແມ່ຍິງ ການກະທຳເຊັ່ນນີ້ເປັນສິ່ງທີ່ປ້ອງກັນບໍ່ໃຫ້ເກີດຂຶ້ນ;

(ງ) ປັດໃຈອື່ນໆທີ່ຂັດຂວາງບໍ່ໃຫ້ແມ່ຍິງ ໄດ້ມີສ່ວນຮ່ວມໃນຊີວິດສາທາລະນະ ແລະ ການເມືອງໃນຊຸມຊົນຂອງຕົນ ໃນບາງປະເທດນັ້ນໄດ້ແກ່ການຈຳກັດເສລີພາບໃນການເດີນທາງ ແລະ ສິດທິໃນການມີສ່ວນຮ່ວມທັດສະນະຄະຕິຄອບງຳໃນທາງລົບ ກ່ງວກັບການມີສ່ວນຮ່ວມທາງການເມືອງຂອງແມ່ຍິງ ຫລື ການຂາດຄວາມໄວ້ວາງໃຈ ແລະ ການສະໜັບສະໜູນຕໍ່ຜູ້ສະໝັກຮັບເລືອກຕັ້ງທີ່ເປັນແມ່ຍິງ ນອກຈາກນີ້ແມ່ຍິງຈຳນວນໜຶ່ງຍັງເບິ່ງວ່າການເຂົ້າຮ່ວມທາງການເມືອງ ເປັນສິ່ງທີ່ໜ້າລັງກຽດ, ດັ່ງນັ້ນຈຶ່ງຫລົບຫລີກການມີສ່ວນຮ່ວມໃນການໂຄສະນາທາງການເມືອງ;

21. ປັດໃຈເຫລົ່ານີ້ຄືຄຳອະທິບາຍບາງສ່ວນ ສຳຫລັບຮູບພາບທີ່ຂັດແຍ່ງກັນເອງທີ່ວ່າ ແມ່ຍິງຊຶ່ງເປັນຈຳນວນເຖິງເຄິ່ງໜຶ່ງຂອງຜູ້ມີສິດທິໃນການລົງຄະແນນສຽງເລືອກຕັ້ງບໍ່ໄດ້ໃຊ້ອຳນາດທາງດ້ານການເມືອງຂອງຕົນ ຫລື ບໍ່ໄດ້ລວມໂຕກັນເຂົ້າເປັນກຸ່ມກ້ອນ ເພື່ອທີ່ຈະສົ່ງເສີມຜົນປະໂຫຍດຂອງຕົນ ຫລື ປ່ຽນແປງລັດຖະບານ ຫລື ເພື່ອລົບລ້າງນະໂຍບາຍການຈຳແນກ.

22. ລະບົບການລົງຄະແນນສຽງ ການຈັດສັນບ່ອນນັ່ງໃນລັດຖະສະພາ(ສະພາແຫ່ງຊາດ) ການເລືອກສະຖານທີ່ໃນການເລືອກຕັ້ງທັງໝົດນີ້ລ້ວນແລ້ວແຕ່ມີຜົນກະທົບທີ່ສຳຄັນ ຕໍ່ສັດສ່ວນຂອງແມ່ຍິງທີ່ໄດ້ຮັບເລືອກເຂົ້າສູ່ລັດຖະສະພາ, ພັກການເມືອງ ຕ້ອງຢຶດຖືຫລັກການຄວາມສະເໝີພາບທາງດ້ານໂອກາດ ແລະ ປະຊາທິປະໄຕ ແລະ ຕ້ອງພະຍາຍາມສ້າງປື້ມບັນທຶກລະຫວ່າງຈຳນວນຜູ້ສະໝັກທີ່ເປັນ ແມ່ຍິງ ແລະ ຜູ້ຊາຍ.

23. ການໄດ້ນຳໃຊ້ສິດໃນການອອກສຽງເລືອກຕັ້ງຂອງແມ່ຍິງ ບໍ່ຄວນຈະຖືກຈຳກັດດ້ວຍເງື່ອນໄຂທີ່ແຕກຕ່າງຈາກຜູ້ຊາຍ ຫລືທີ່ມີຜົນກະທົບຕໍ່ແມ່ຍິງຢ່າງໜັກໜ່ວງ ຕົວຢ່າງເຊັ່ນ: ການຈຳກັດສິດໃນການລົງຄະແນນສຽງໃຫ້ສະເພາະກັບຜູ້ທີ່ມີການສຶກສາ ຢູ່ໃນລະດັບໃດລະດັບໜຶ່ງ ຫລື ຜູ້ທີ່ມີຊັບສິນໃນປະລິມານຂັ້ນຕ່ຳທີ່ໄດ້ກຳໜົດ ຫລື ຜູ້ທີ່ສາມາດອ່ານອອກຂຽນໄດ້ ການຈຳກັດເຊັ່ນນີ້ບໍ່ພຽງແຕ່ຈະບໍ່ສົມເຫດສົມຜົນເທົ່ານັ້ນ ແຕ່ຍັງເປັນການລະເມີດຫລັກປະກັນສາກົນດ້ານສິດທິມະນຸດພ້ອມທັງຍັງມີແນວໂນ້ມວ່າການຕັ້ງເງື່ອນໄຂເຊັ່ນນີ້ ຈະເຮັດໃຫ້ເກີດມີຜົນກະທົບຕໍ່ແມ່ຍິງຢ່າງໜັກໜ່ວງ ຊຶ່ງຂັດກັບຂໍ້ກຳໜົດຂອງ ສົນທິສັນຍານີ້.

## ສິດທິທີ່ຈະມີສ່ວນຮ່ວມໃນການກຳໜົດນະໂຍບາຍລັດຖະບານ (ມາດຕາ 7 ວັກ (ຂ) )

24. ການມີສ່ວນຮ່ວມຂອງແມ່ຍິງໃນລັດຖະບານ ໃນລະດັບນະໂຍບາຍໂດຍທົ່ວໄປຍັງແມ່ນຢູ່ໃນລະດັບຕ່ຳ ເຖິງວ່າທີ່ຜ່ານມາຈະມີຄວາມກ້າວໜ້າຢ່າງສຳຄັນ ແລະ ບາງປະເທດກໍ່ໄດ້ບັນລຸເຖິງຄວາມສະເໝີພາບ ແຕ່ໃນຫລາຍປະເທດ ການມີສ່ວນຮ່ວມຂອງແມ່ຍິງຊ້ຳພັດຫລຸດລົງ.

25. ມາດຕາ 7 (ຂ) ຍັງຕ້ອງການໃຫ້ລັດພາຄີຮັບປະກັນວ່າແມ່ຍິງມີສິດເຂົ້າຮ່ວມ ແລະ ເປັນຕົວແທນຢ່າງເຕັມທີ່ໃນການກຳໜົດນະໂຍບາຍຂອງປະຊາຊົນໃນທຸກສ່ວນ ແລະ ທຸກລະດັບ ສະພາບການແບບນີ້ຈະອຳນວຍໃນການເຮັດໃຫ້ເລື່ອງບົດບາດຍິງຊາຍ ເປັນການຈະແຈ້ງ ແລະ ຍັງເປັນການເພີ້ມມູນມອງເລື່ອງບົດບາດຍິງຊາຍເຂົ້າໃນການກຳໜົດນະໂຍບາຍສາທາລະນະ.

26. ລັດພາຄີມີຄວາມຮັບຜິດຊອບຕາມຂອງເຂດອຳນາດ ທັງໃນການແຕ່ງຕັ້ງໃຫ້ແມ່ຍິງມີບົດບາດໃນການຕັດສິນໃຈໃນລະດັບສູງ ແລະປຶກສາຫາລື ແລະ ລວບລວມເອົາຂໍ້ແນະນຳຂອງກຸ່ມຕ່າງໆ ຊຶ່ງເປັນຕົວແທນຄວາມຄິດເຫັນ ແລະ ຜົນປະໂຫຍດຂອງແມ່ຍິງຢ່າງກວ້າງຂວາງ ເຂົ້າມາພິຈາລະນາພ້ອມຕາມແຕ່ລະກໍລະນີ;

27. ລັດພາຄີມີພັນທະ(ຄວາມຮັບຜິດຊອບ) ທີ່ຈະຕ້ອງຮັບປະກັນວ່າຈະມີການຊີ້ບອກ ແລະ ແກ້ໄຂອຸປະສັກທີ່ຂັດຂວາງການມີສ່ວນຮ່ວມຢ່າງເຕັມທີ່ຂອງແມ່ຍິງ ໃນການກຳໜົດນະໂຍບາຍຂອງລັດຖະບານ, ອຸປະສັກເຫລົ່ານີ້ລວມເຖິງຄວາມເພິ່ງພໍໃຈກັບການທີ່ມີແມ່ຍິງ ໄດ້ຮັບການແຕ່ງຕັ້ງພຽງແຕ່ໃຫ້ໄດ້ມີຊື່ວ່າມີແມ່ຍິງເຂົ້າມາຮ່ວມແລ້ວ ຕະຫລອດຈົນເຖິງທັດສະນະຄະຕິຕາມແນວປະເພນີ ແລະ ຮີດຄອງຊຶ່ງບໍ່ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ເມື່ອແມ່ຍິງບໍ່ໄດ້ມີສ່ວນຮ່ວມຢ່າງກວ້າງຂວາງໃນລັດຖະບານລະດັບສູງ ຫລືເມື່ອບໍ່ໄດ້ມີການປຶກສາຫາລືກັບແມ່ຍິງເທົ່າທີ່ຄວນນະໂຍບາຍຂອງລັດກໍຈະບໍ່ຄົບຖ້ວນຮອບດ້ານ ແລະ ບໍ່ເກີດປະສິດທິຜົນ.

28. ໃນຂະນະທີ່ລັດພາຄີໂດຍທົ່ວໄປ ມີອຳນາດທີ່ຈະແຕ່ງຕັ້ງແມ່ຍິງເຂົ້າມາຮັບຕຳແໜ່ງໃນລະດັບສູງໃນຄະນະລັດຖະມົນຕີ ແລະ ໃນວຽກງານບໍລິຫານພັກການເມືອງກໍມີໜ້າທີ່ຮັບຜິດຊອບໃນການຮັບປະກັນໃຫ້ແມ່ຍິງຢູ່ໃນບັນຊີລາຍຊື່ຂອງພັກ ແລະໄດ້ຮັບການສະເໜີຊື່ເປັນຜູ້ສະໝັກຮັບເລືອກຕັ້ງໃນຂົງເຂດ ຊຶ່ງພວກເຂົາມີໂອກາດທີ່ຈະໄດ້ຮັບເລືອກ ລັດພາຄີຄວນພະຍາຍາມຮັບປະກັນວ່າແມ່ຍິງຈະໄດ້ຮັບການແຕ່ງຕັ້ງໃຫ້ຢູ່ໃນອົງກອນທີ່ປຶກສາຂອງລັດຖະບານ ໂດຍສະເໝີພາບກັບຜູ້ຊາຍ ແລະ ອົງກອນເຫລົ່ານີ້ຈະພິຈາລະນາຄວາມຄິດຄວາມເຫັນຂອງກຸ່ມຕົວແທນທີ່ເປັນແມ່ຍິງຕາມຄວາມເໝາະສົມ ລັດຖະບານຍັງມີໜ້າທີ່ຮັບຜິດຊອບພື້ນຖານ ໃນການສົ່ງເສີມການເລີ່ມຕົ້ນດ້ານຕ່າງໆທີ່ຈະນຳທາງ ແລະ ຊີ້ນຳຄວາມເຫັນຂອງສາທາລະນະ ແລະ ປ່ຽນແປງທັດສະນະຄະຕິທີ່ມີການຈຳແນກຕໍ່ແມ່ຍິງ ແລະບໍ່ສົ່ງເສີມໃຫ້ແມ່ຍິງເຂົ້າຮ່ວມໃນຊີວິດທາງການເມືອງ ແລະ ສາທາລະນະ.

29. ມາດຕະການຕ່າງໆ ທີ່ລັດພາຄີຈຳນວນໜຶ່ງໄດ້ນຳໄປປະຕິບັດ ເພື່ອຮັບຮອງການມີສ່ວນຮ່ວມຢ່າງສະເໝີພາບຂອງແມ່ຍິງໃນຕຳແໜ່ງລະດັບສູງ ໃນຄະນະລັດຖະມົນຕີ ແລະ ການບໍລິຫານ ແລະໃນຖານະສະມາຊິກຂອງອົງການທີ່ປຶກສາຂອງລັດຖະບານນັ້ນ ໄດ້ແກ່ ການກຳໜົດກົດເກນເລື່ອງການໃຫ້ສິດທິພິເສດແກ່ຜູ້ໄດ້ຮັບການສະເໜີຊື່ເປັນແມ່ຍິງ ໃນກໍລະນີທີ່ຜູ້ມີສິດໄດ້ຮັບການແຕ່ງຕັ້ງນັ້ນມີຄຸນສົມບັດເທົ່າທຽມກັນ ການກຳໜົດເປັນກົດເກນວ່າຈຳນວນສະມາຊິກຂອງອົງການການຈັດຕັ້ງສາທາລະນະຈະຕ້ອງປະກອບດ້ວຍບຸກຄົນເພດໃດເພດໜຶ່ງບໍ່ຕ່ຳກວ່າຈຳນວນ 40ສ່ວນຮ້ອຍຂອງສະມາຊິກທັງໝົດ ລະບົບໂຄຕ້າສຳຫລັບສະມາຊິກແມ່ຍິງໃນຄະນະລັດຖະບານ ແລະ ການໄດ້ຮັບເລືອກເຂົ້າສູ່ຕຳແໜ່ງທາງການ ແລະ ການຫາລືອົງການຈັດຕັ້ງແມ່ຍິງ ເພື່ອປະກັນວ່າຈະມີແມ່ຍິງທີ່ມີຄຸນສົມບັດເໝາະສົມໄດ້ຮັບການສະເໜີຊື່ ເພື່ອເປັນສະມາຊິກຂອງອົງການຈັດຕັ້ງ ແລະ ໜ່ວຍງານສາທາລະນະ ແລະ ມີການພັດທະນາ ແລະຈັດການບັນຊີລາຍຊື່ຂອງແມ່ຍິງເຫລົ່ານັ້ນເພື່ອເອື້ອປະໂຫຍດຕໍ່ການສະເໜີຊື່ແມ່ຍິງ ໃຫ້ໄດ້ຮັບການແຕ່ງຕັ້ງເຂົ້າສູ່ອົງການ ແລະຕຳແໜ່ງສາທາລະນະ ໃນກໍລະນີທີ່ສະມາຊິກໄດ້ຮັບເລືອກເຂົ້າສູ່ອົງການທີ່ປຶກສາໃດໆ ໂດຍການສະເໜີຊື່ຂອງອົງການເອກະຊົນ ລັດພາຄີຄວນສົ່ງເສີມໃຫ້ອົງການເຫລົ່ານີ້ ສະເໜີຊື່ແມ່ຍິງທີ່ມີຄຸນສົມບັດຄົບຖ້ວນ ແລະເໝາະສົມເຂົ້າເປັນສະມາຊິກຂອງອົງການເຫລົ່ານີ້.

## *ສິດໃນການປະຕິບັດຕຳແໜ່ງສາທາລະນະ ແລະ ການປະຕິບັດໜ້າທີ່ສາທາລະນະທັງໝົດ (ມາດຕາ7ວັກ (ຂ))*

30. ການກວດສອບບົດລາຍງານຂອງລັດພາຄີ ສະແດງໃຫ້ເຫັນວ່າແມ່ຍິງຖືກກັນອອກຈາກຕຳແໜ່ງສູງສຸດໃນຄະນະລັດຖະມົນຕີ ວຽກທາງລັດຖະການ ແລະ ການບໍລິຫານກິດຈະການສາທາລະນະ ວຽກດ້ານຕຸລາການ ແລະ ຂະບວນການຍຸດຕິທຳ ແມ່ຍິງເກືອບຈະບໍ່ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງລະດັບສູງ ຫລື ມີຄວາມສຳຄັນ ແລະ ຄະນະທີ່ໃນບາງລັດ ຈຳນວນແມ່ຍິງໃນຕຳແໜ່ງລະດັບຕັດສິນໃຈດ້ານນະໂຍບາຍທາງດ້ານເສດຖະກິດ ຫລືການພັດທະນາກິດຈະການທາງການດ້ານເມືອງ, ການທະຫານ, ການຮັກສາສັນຕິພາບ, ການແກ້ໄຂຄວາມຂັດແຍ່ງ ຫລືການຕີຄວາມຊີ້ຂາດທາງລັດຖະທຳມະນູນ .

31. ການກວດສອບບົດລາຍງານຂອງລັດພາຄີຍັງສະແດງໃຫ້ເຫັນວ່າ ໃນບາງກໍລະນີ ກົດໝາຍຍັງຂັດຂວາງແມ່ຍິງອອກຈາກການໃຊ້ອຳນາດຂອງລັດຖະບານ ການຮັບໜ້າທີ່ເປັນຕຸ ລາການ ໃນຂະບວນການສອບສວນທາງສາສະໜາ ຫລື ຕາມປະເພນີ ຊຶ່ງມີອຳນາດຕັດສິນໃນນາມຂອງລັດ ຫລື ການມີສ່ວນຮ່ວມຢ່າງເຕັມທີ່ໃນກອງທັບ ຂໍ້ກຳໜົດທີ່ຈຳແນກຕໍ່ແມ່ຍິງດັ່ງກ່າວເຮັດໃຫ້ສັງຄົມບໍ່ໄດ້ຮັບປະໂຫຍດຈາກການເຂົ້າຮ່ວມ ແລະ ທັກສະຂອງແມ່ຍິງໃນດ້ານຕ່າງໆເຫຼົ່ານີ້ຂອງຊີວິດຊຸມຊົນຂອງພວກເຂົາ ແລະ ຂັດກັບຫລັກການຂອງສົນທິສັນຍານີ້ ສິດໃນການມີສ່ວນຮ່ວມໃນອົງການພັດທະນາເອກະຊົນ ອົງການສາທາລະນະ ແລະການເມືອງ (ມາດຕາ7ວັກ(ຄ)).

32. ຈາກການກວດສອບລາຍງານຂອງລັດພາຄີ ພົບວ່າມີການໃຫ້ຂໍ້ມູນກ່ຽວກັບພັກການເມືອງໜ້ອຍ ແລະຂໍ້ມູນດັ່ງກ່າວມັກສະແດງໃຫ້ເຫັນວ່າຕົວແທນທີ່ເປັນແມ່ຍິງຍັງມີຈຳນວນບໍ່ຫລາຍເທົ່າທີ່ຄວນ ຫລື ມັກຈະເຈາະຈົງຢູ່ໃນບົດບາດທີ່ມີຄວາມສຳຄັນນ້ອຍກ່ວາຜູ້ຊາຍ ໃນຖານະທີ່ພັກການເມືອງເປັນສື່ກາງທີ່ສຳຄັນ ສຳຫລັບບົດບາດການຕັດສິນໃຈຕ່າງໆ ລັດຖະບານຈຶ່ງຄວນສົ່ງເສີມໃຫ້ພັກການເມືອງກວດສອບການມີສ່ວນຮ່ວມຢ່າງເຕັມທີ ແລະ ສະເໝີພາບໃນກິດຈະກຳຕ່າງໆຂອງພັກ ແລະ ຄວນຕ້ອງມີການຊີ້ແຈງເຫດຜົນທາກສະພາບການບໍ່ເປັນໄປໃນລັກສະນະດັ່ງກ່າວ ພັກການເມືອງຄວນໄດ້ຮັບການສົ່ງເສີມໃຫ້ດຳເນີນມາດຕະການທີ່ໄດ້ຜົນໃນການແກ້ໄຂອຸປະສັກຄິດຂວາງການມີສ່ວນຮ່ວມ ແລະ ການມີຕົວແທນຂອງແມ່ຍິງຢ່າງເຕັມທີ່ ແລະ ຮັບປະກັນວ່າແມ່ຍິງຈະມີໂອກາດທີ່ສະເໝີພາບໃນທາງປະຕິບັດ ທີ່ຈະເຮັດວຽກເປັນສະມາຊິກພັກ ແລະ ໄດ້ຮັບການສະເໜີຊື່ສຳຫລັບການເລືອກຕັ້ງ ໂດຍການໃຫ້ຂໍ້ມູນຊັບພະຍາກອນດ້ານການເງິນ ແລະ ອື່ນໆ.

33. ມາດຕະການຕ່າງໆຊຶ່ງມີພັກການເມືອງນຳມາປະຕິບັດນັ້ນ ໄດ້ແກ່ການກຳໜົດຈຳນວນຂັ້ນຕ່ຳ ຫລື ຈຳນວນສ່ວນຮ້ອຍທີ່ແມ່ຍິງຈະໄດ້ປະຕິບັດຕຳແໜ່ງ ໃນອົງການຈັດຕັ້ງບໍລິຫານຂອງພັກ ການຮັບປະກັນຄວາມສົມດຸນລະຫວ່າງຈຳນວນ ຜູ້ໄດ້ຮັບການສະເໜີຊື່ໃຫ້ລົງສະໝັກຮັບເລືອກຕັ້ງ ທີ່ເປັນຊາຍ ແລະຍິງ ແລະປະກັນວ່າແມ່ຍິງ ຈະບໍ່ຖືກກຳໜົດໃຫ້ລົງສະໝັກໃນເຂດເລືອກຕັ້ງທີ່ເສຍປຽບ ຫລື ຖືກຈັດໃຫ້ຢູ່ໃນລຳດັບທີ່ມີໂອກາດນ້ອຍທີ່ສຸດ ໃນບັນຊີລາຍຊື່ຂອງພັກ, ລັດພາຄີຄວນຮັບປະກັນວ່າຈະມີການອະນຸຍາດເປັນການພິເສດ ໃຫ້ມີການດຳເນີນມາດຕະການພິເສດຊົ່ວຄາວ ພາຍໃຕ້ກົດໝາຍຕໍ່ຕ້ານການຈຳແນກ ຫລື ຫລັກປະກັນເລື່ອງຄວາມສະເໝີພາບຕາມກົດໝາຍ, ລັດຖະທຳມະນູນ.

34. ອົງການອື່ນໆ ເຊັ່ນສະຫະພາບແຮງງານ ແລະພັກການເມືອງ ມີຄວາມຮັບຜິດຊອບທີ່ຈະຕ້ອງສະແດງໃຫ້ເຫັນເຖິງຄວາມຍຶດໝັ້ນ ໃນຫລັກການເລື່ອງຄວາມສະເໝີພາບ ລະຫວ່າງເພດໃຫ້ປາກົດໃນລັດຖະທຳມະນູນຂອງອົງການ ໃນການນຳກົດເກນຕ່າງໆເຫລົ່ານັ້ນໄປປະຍຸກໃຊ້ ແລະ ໃນອົງປະກອບສະມາຊິກທີ່ມີຕົວແທນແຕ່ລະເພດຢ່າງເທົ່າທຽມ ຢູ່ໃນຄະນະກຳມະການບໍລິຫານ ເພື່ອທີ່ອົງການຈັດຕັ້ງເຫລົ່ານີ້ ຈະໄດ້ຮັບປະໂຫຍດຈາກການມີສ່ວນຮ່ວມຢ່າງເຕັມທີ່ ແລະ ສະເໝີພາບຈາກທຸກພາກສ່ວນຂອງສັງຄົມ ແລະ ຈາກການມີສ່ວນຮ່ວມຂອງທັງສອງເພດ ອົງການເຫລົ່ານີ້ຍັງເປັນບ່ອນທີ່ໃຫ້ແມ່ຍິງໄດ້ມີໂອກາດຝຶກຝົນທັກສະທາງການເມືອງ, ການມີສ່ວນຮ່ວມ ແລະ ຄວາມເປັນຜູ້ນຳໄດ້ດີຂຶ້ນເຊັ່ນດຽວກັນກັບອົງການພັດທະນາເອກະຊົນ.

## ມາດຕາ 8 ( ລະດັບນານາຊາດ)

ລັດພາຄີຈະດຳເນີນມາດຕະການທີ່ເໝາະສົມທັງໝົດທັງຫລາຍ ເພື່ອປະກັນໂອກາດຂອງແມ່ຍິງ ໃນການເປັນຜູ້ແທນຂອງລັດຖະບານຂອງຕົນໃນລະດັບນາໆຊາດ ແລະ ໃນການຮ່ວມວຽກກັບອົງການລະຫວ່າງປະເທດນັ້ນ ໂດຍສະເໝີພາບກັບຜູ້ຊາຍ ແລະປາສະຈາກການຈຳແນກ.

# ຂໍ້ແນະນຳ

35. ພາຍໃຕ້ມາດຕາ 8 ລັດຖະບານມີໜ້າທີ່ທີ່ ຈະປະກັນວ່າແມ່ຍິງຈະໄດ້ເຂົ້າຮ່ວມໃນກິດຈະການລະຫວ່າງປະເທດທຸກລະດັບ ແລະ ທຸກດ້ານ ຊຶ່ງໝາຍຄວາມວ່າແມ່ຍິງຕ້ອງໄດ້ເຂົ້າຮ່ວມໃນການ ເຮັດວຽກດ້ານເສດຖະກິດ ແລະ ການທະຫານ ໃນການທູດລະດັບພະຫຸພາຄີ ແລະ ທະວິພາຄີ ແລະໃນການເປັນຜູ້ແທນຢ່າງເປັນທາງການໃນການປະຊຸມລະດັບນາໆຊາດ ແລະລະດັບພູມມິພາກ.

36. ການກວດສອບລາຍງານຂອງລັດພາຄີ ເວົ້າແນ່ນອນວ່າມີຕົວແທນແມ່ຍິງນ້ອຍຫລາຍໃນວຽກດ້ານການທູດ ແລະ ການຕ່າງປະເທດຂອງລັດຖະບານສ່ວນໃຫຍ່ ແລະ ໂດຍສະເພາະກໍ່ຄືໃນລະດັບສູງສຸດຜູ້ຍິງມັກໄດ້ຮັບເລືອກໃຫ້ໄປປະຈຳສະຖານທູດ ໃນປະເທດທີ່ມີຄວາມສຳຄັນນ້ອຍກ່ວາໃນທາງການຕ່າງປະເທດ ແລະ ໃນບາງກໍລະນີແມ່ຍິງກໍ່ຖືກ ຈຳແນກໃນເລື່ອງການແຕ່ງຕັ້ງໃຫ້ປະຕິບັດຕຳແໜ່ງຕ່າງໆ ໂດຍອາໄສຂໍ້ກຳໜົດເລື່ອງສະຖານະພາບການມີຄອບຄົວຂອງແມ່ຍິງ ໃນກໍລະນີອື່ນໆ ນັກການທູດແມ່ຍິງຈະບໍ່ໄດ້ຮັບຜົນປະໂຫຍດທີ່ໃຫ້ແກ່ຄູ່ຜົວເມຍ ແລະຄອບຄົວເຊັ່ນທີ່ໃຫ້ກັບນັກການທູດຊາຍໃນລະດັບດຽວກັນ, ແມ່ຍິງມັກບໍ່ໄດ້ຮັບໂອກາດ ໃນການເຂົ້າຮ່ວມງານລະຫວ່າງປະເທດ ເພາະຂໍ້ສັນນິຖານວ່າພາລະໜ້າທີ່ໃນຄອບຄົວຂອງແມ່ຍິງ ລວມທັງການເບິ່ງແຍງສະມາຊິກໃນຄອບຄົວທີ່ຍັງຊ່ວຍເຫລືອຕົວເອງບໍ່ໄດ້ ຈະເຮັດໃຫ້ແມ່ຍິງບໍ່ຍອມຮັບຕຳແໜ່ງຕ່າງໆ.

37. ຄະນະຜູ້ແທນຖາວອນປະຈຳສະຫະປະຊາຊາດ ແລະ ອົງການລະຫວ່າງປະເທດອື່ນໆ ຫລາຍຄະນະບໍ່ມີແມ່ຍິງທີ່ເປັນນັກການທູດຮ່ວມຢູ່ນຳ ແລະ ມີໜ້ອຍຫລາຍໃນຕຳແໜ່ງທີ່ສູງ ສະຖານະການແບບດຽວກັນນີ້ເກີດຂຶ້ນໃນການປະຊຸມຜູ້ຊ່ຽວຊານ ຫລື ການປະຊຸມອື່ນໆ ທີ່ເປັນການກຳໜົດເປົ້າໝາຍວາລະ ແລະ ການຈັດລຳດັບຄວາມສຳຄັນໃນລະດັບນານາຊາດ ແລະ ລະດັບໂລກ ອົງການພາຍໃຕ້ລະບົບຂອງສະຫະປະຊາຊາດ ແລະ ໂຄງສ້າງທາງເສດຖະກິດ, ການເມືອງ ແລະ ການທະຫານຕ່າງໆ ໃນລະດັບພູມມິພາກໄດ້ກາຍເປັນຜູ້ຈ້າງງານທີ່ສຳຄັນ ໃນລະດັບນາໆຊາດແຕ່ໃນແວດວົງນີ້ກໍ່ຄືກັນ ທີ່ແມ່ຍິງຍັງຄົງເປັນຄົນສ່ວນນ້ອຍທີ່ບັນຈຸຢູ່ໃນຕຳແໜ່ງລະດັບລຸ່ມ(ນ້ອຍ).

38. ມີໂອກາດບໍ່ຫລາຍປານໃດທີ່ແມ່ຍິງ ແລະຜູ້ຊາຍຈະໄດ້ເປັນຜູ້ແທນລັດຖະບານໃນລະດັບສາກົນ ແລະເຮັດວຽກຂອງອົງການລະຫວ່າງປະເທດໂດຍສະເໝີພາບກັນ ສະພາບແບບນີ້ມັກເປັນຜົນມາຈາກເລື່ອງທີ່ບໍ່ມີການກຳໜົດຄຸນສົມບັດ ແລະ ຂະບວນການທີ່ມີຄວາມເປັນກາງໃນການແຕ່ງຕັ້ງ ແລະເລື່ອນຕຳແໜ່ງທີ່ກ່ຽວຂ້ອງ ຫລືການຕັ້ງຄະນະຜູ້ແທນລັດຖະບານ.

39. ກະແສໂລກາພິວັດໃນໂລກປັດຈຸບັນເຮັດໃຫ້ການເຂົ້າມີສ່ວນຮ່ວມຂອງແມ່ຍິງໃນອົງການລະຫວ່າງປະເທດ ໂດຍສະເໝີພາບກັບຜູ້ຊາຍມີຄວາມສຳຄັນຫລາຍຂື້ນ ການລວມເອົາມູມມອງເລື່ອງບົດບາດຍິງຊາຍ ແລະສິດທິມະນຸດຂອງແມ່ຍິງເຂົ້າໄວ້ໃນວາລະຂອງອົງການລະຫວ່າງປະເທດທຸກອົງການທີ່ເປັນພັນທະມິດຂອງລັດຖະບານ ການຕັດສິນໃຈທີ່ສຳຄັນໃນບັນຫາລະດັບໂລກຫລາຍເທື່ອເຊັ່ນ: ການຮັກສາສັນຕິພາບ ແລະແກ້ໄຂຄວາມຂັດແຍ່ງ ການກຳໜົດຄ່າໃຊ້ຈ່າຍທາງການທະຫານ ແລະການປົດອາວຸດນິວເຄັຍ ການພັດທະນາ ແລະສິ່ງແວດລ້ອມ ການໃຫ້ຄວາມຊ່ວຍເຫລືອແກ່ຕ່າງປະເທດ ແລະການປັບໂຄງສ້າງເສດຖະກິດ ເປັນການຕັດສິນໃຈໂດຍທີ່ມີແມ່ຍິງມີສ່ວນຮ່ວມຢ່າງຈຳກັດ ຊຶ່ງເປັນພາບທີ່ຂັດກັນຫລາຍຕໍ່ການມີສ່ວນຮ່ວມຂອງແມ່ຍິງໃນວຽກງານຕ່າງໆໃນລະດັບທີ່ບໍ່ແມ່ນລັດຖະບານ.

40. ການໃຫ້ແມ່ຍິງເຂົ້າຮ່ວມ ໃນການເຈລະຈາລະຫວ່າງປະເທດ, ກິດຈະກຳການຮັກສາສັນຕິພາບ, ການທູດ ເພື່ອປ້ອງກັນຄວາມຂັດແຍ່ງທຸກລະດັບ, ການເຈລະຈາໄກ່ເກັ່ຍ, ການໃຫ້ຄວາມຊ່ວຍເຫລືອດ້ານມະນຸດສະທຳ, ການສ້າງຄວາມປອງດອງທາງສັງຄົມ, ການເຈລະຈາສັນຕິພາບ ແລະລະບົບສານຍຸຕິທຳນາໆຊາດ ເປັນຈຳນວນຫລາຍພໍເທົ່າທີ່ຕ້ອງການ ຍ່ອມຈະກໍ່ໃຫ້ເກີດຄວາມປ່ຽນແປງຂຶ້ນໄດ້ທັງນີ້ໃນການເວົ້າເຖິງເລື່ອງຄວາມຂັດແຍ່ງອື່ນໆຈຳເປັນຕ້ອງພິຈາລະນາມູມມອງ ແລະການວິເຄາະໃນເລື່ອງສະຖານະພາບທາງເພດ ເພື່ອສ້າງຄວາມເຂົ້າໃຈເຖິງຜົນ ກະທົບຕໍ່ແມ່ຍິງ ແລະ ຜູ້ຊາຍທີ່ແຕກຕ່າງກັນ [10]

## ຂໍ້ສະເໜີແນະ

### ມາດຕາ 7 ແລະ 8

41. ລັດພາຄີຄວນຮັບປະກັນວ່າລັດຖະທຳມະນູນ ແລະ ຂະບວນການນິຕິບັນຍັດຂອງຕົນສອດຄ່ອງກັບຫລັກການຂອງສົນທິສັນຍານີ້ ແລະ ໂດຍສະເພາະຢ່າງຍິ່ງແມ່ນມາດຕາ 7 ແລະ 8;

42. ລັດພາຄີມີພັນທະທີ່ຈະດຳເນີນມາດຕະການທີ່ເໝາະສົມທັງໝົດ ລວມທັງການອອກກົດໝາຍທີ່ເໝາະສົມ ແລະ ສອດຄ່ອງກັບສົນທິສັນຍານີ້ ເພື່ອຮັບປະກັນວ່າອົງການຈັດຕັ້ງຕ່າງໆເຊັ່ນ: ພັກການເມືອງ ແລະ ສະຫະພາບແຮງງານ ຊຶ່ງອາດບໍ່ໄດ້ຢູ່ພາຍໃຕ້ອຳນາດການບັງຄັບຂອງສົນທິສັນຍານີ້ໂດຍກົງ ແລະ ຈະບໍ່ມີການຈຳແນກຕໍ່ແມ່ຍິງ ແລະ ຈະເຄົາລົບຫລັກການທີ່ໄດ້ກຳໜົດໄວ້ໃນມາດຕາ 7 ແລະ 8.

43. ລັດພາຄີຄວນກໍານົດ ແລະ ດໍາເນີນມາດຕະການພິເສດຊົ່ວຄາວ ເພື່ອຮັບປະກັນການທີ່ແມ່ຍິງຈະໄດ້ມີຕົວແທນຢ່າງສະເໝີພາບໃນທຸກໆດ້ານທີ່ໄດ້ກໍານົດໄວ້ໃນມາດຕາ 7 ແລະ 8;

44. ລັດພາຄີຄວນອະທິບາຍຜົນກະທົບ ຂອງການຕັ້ງຂໍ້ສະຫງວນຕ່າງໆຕໍ່ມາດຕາ 7 ແລະ 8 ແລະ ຄວນລະບຸດ້ວຍວ່າຂໍ້ສະຫງວນດັ່ງກ່າວ ສະທ້ອນທັດສະນະຄະຕິແບບປະເພນີ ແລະ ຮີດຄອງປະຕິບັດ ຫລື ທີ່ເປັນຮູບພາບທີ່ຕາຍຕົວກ່ຽວກັບບົດບາດຂອງແມ່ຍິງໃນສັງຄົມແຕ່ຢ່າງໃດ ລວມທັງຊີ້ໃຫ້ເຫັນຂັ້ນຕອນທີ່ລັດພາຄີ ຈະເນີນການປ່ຽນແປງທັດສະນະຄະຕິເຫລົ່ານັ້ນ ລັດພາຄີຄວນຈະເຮັດການທົບທວນຄວາມຈໍາເປັນທີ່ຈະຕ້ອງມຂໍ້ສະຫງວນດັ່ງກ່າວຢ່າງລະອຽດ ແລະ ລະບຸໄວ້ໃນບົດລາຍງານເຖິງລະຍະເວລາທີ່ຈະຖອດຖອນຂໍ້ສະຫງວນເຫລົ່ານັ້ນ;

## ມາດຕາ 7

45. ຄວນມີການກໍານົດການດໍາເນີນການ ແລະ ຕິດຕາມກວດສອບປະສິດທິພາບຂອງມາດຕະການຕ່າງໆ ທີ່ດໍາເນີນການພາຍໃຕ້ມາດຕາ 7 ວັກ (ກ) ໃນອັນທີ່ຈະ

(ກ) ບັນລຸເຖິງຄວາມສົມດູນລະຫວ່າງແມ່ຍິງ ແລະຜູ້ຊາຍ ຜູ້ປະຕິບັດຕໍາແໜ່ງທີ່ໄດ້ຮັບການເລືອກຕັ້ງຈາກສາທາລະນະ;

(ຂ) ຮັບປະກັນວ່າແມ່ຍິງຈະເຂົ້າໃຈເຖິງສິດທິໃນການລົງຄະແນນສຽງ ເຫັນເຖິງຄວາມສໍາຄັນຂອງສິດທິໃນການລົງຄະແນນສຽງ ເຫັນເຖິງຄວາມສໍາຄັນຂອງສິດທິດັ່ງກ່າວ ແລະ ຮູ້ຈັກໃຊ້ສິດທິດັ່ງກ່າວ ແລະຮູ້ຈັກໃຊ້ສິດທິນັ້ນ;

(ຄ) ຮັບປະກັນວ່າຈະມີການແກ້ໄຂອຸປະສັກຕໍ່ຄວາມສະເໝີພາບ ລວມທັງທີ່ເກີດຈາກການບໍ່ຮູ້ໜັງສື, ພາສາ, ຄວາມທຸກຍາກ ແລະ ການຈໍາກັດເສລີພາບໃນການເດີນທາງຂອງແມ່ຍິງ;

(ງ) ໃຫ້ຄວາມຊ່ວຍເຫລືອແກ່ແມ່ຍິງທີ່ຈະພົບກັບຄວາມຍາກລໍາບາກ ໃນການໃຊ້ສິດລົງຄະແນນສຽງ ແລະ ການລົງສະໝັກຮັບເລືອກຕັ້ງ;

46. ມາດຕະການຕ່າງໆທີ່ລະບຸໄວ້ໃນມາດຕາ 7 ວັກ (ຂ) ລວມທັງມາດຕາເພື່ອຮັບປະກັນ:

(ກ) ຄວາມສະເໝີພາບໃນການມີຕົວແທນຂອງແມ່ຍິງໃນການກໍານົດນະໂຍບາຍຂອງລັດຖະບານ;

(ຂ) ການທີ່ແມ່ຍິງຈະໄດ້ມີໂອກາດໃຊ້ສິດສະເໝີພາບໃນການປະຕິບັດຕໍາແໜ່ງທາງລັດຖະການ.

(ຄ) ຂະບວນການເລືອກຕັ້ງທີ່ກໍານົດເປົ້າໝາຍຢູ່ທີ່ແມ່ຍິງ ທັງນີ້ໂດຍເປີດເຜີຍ ແລະ ອຸທອນໄດ້.

47. ມາດຕະການຕ່າງໆຕາມທີ່ລະບຸໄວ້ໃນມາດຕາ 7 ວັກ (ຄ) ລວມເຖິງມາດຕະການເພື່ອ:

(ກ) ຮັບປະກັນວ່າຈະມີການອອກກົດໝາຍທີ່ມີປະສິດທິພາບ ເພື່ອຫ້າມການຈຳແນກຕໍ່ແມ່ຍິງ;

(ຂ) ສົ່ງເສີມໃຫ້ມີອົງກອນເອກະຊົນ ແລະ ສະມາຄົມສາທາລະນະ ແລະ ການເມືອງ ກຳໜົດຍຸດທະສາດເພື່ອສົ່ງເສີມໃຫ້ມີຕົວແທນແມ່ຍິງ ແລະ ໃຫ້ແມ່ຍິງມີສ່ວນຮ່ວມໃນງານສະເຫລີມສະຫຼອງຂອງອົງການຈັດຕັ້ງ ແລະ ສະມາຄົມເຫລົ່ານັ້ນ;

48. ໃນບົດລາຍງານຕາມມາດຕາ 7 ລັດພາຄີຄວນ:

(ກ) ບັນລະຍາຍເຖິງຂໍ້ກຳໜົດຂອງກົດໝາຍທີ່ມີຜົນຕໍ່ສິດທິຕາມກົດໝາຍໃນມາດຕາ 7 ;

(ຂ) ໃຫ້ລາຍລະອຽດກ່ຽວກັບຂໍ້ຫ້າມຕ່າງໆ ທີ່ຈຳກັດສິດທິເຫລົ່ານີ້ທັງໆ ທີ່ເປັນຂໍ້ຫ້າມຕາມກົດໝາຍ ຫລື ເປັນແນວທາງໃນການປະຕິບັດຕາມປະເພນີ, ສາສະໜາ ຫລື ວັດທະນະທຳ;

(ຄ) ບັນລະຍາຍເຖິງມາດຕະການຕ່າງໆ ທີ່ໄດ້ນຳມາໃຊ້ ແລະ ອອກແບບມາເພື່ອແກ້ໄຂອຸປະສັກໃນການໃຊ້ສິດທິເຫລົ່ານີ້ ;

(ງ) ລະບຸເຖິງຂໍ້ມູນສະຖິຕິແບບແຍກເພດ ທີ່ສະແດງໃຫ້ເຫັນສັດສ່ວນຈຳນວນສ່ວນຮ້ອຍຂອງແມ່ຍິງທີ່ໄດ້ ໃຊ້ສິດທິເຫລົ່ານີ້ໂດຍປຽບທຽບກັບຜູ້ຊາຍ;

(ຈ) ບັນລະຍາຍເຖິງການກຳໜົດເຖິງນະໂຍບາຍປະເພດຕ່າງໆ ລວມທັງທີ່ກ່ຽວກັບໂຄງການພັດທະນາຊຶ່ງແມ່ຍິງໄດ້ມີສ່ວນຮ່ວມໂດຍລະບຸເຖິງລະດັບ ແລະ ຂອບເຂດການມີສ່ວນຮ່ວມດັ່ງກ່າວນຳ;

(ສ) ບັນລະຍາຍເຖິງຂອບເຂດການມີສ່ວນຮ່ວມຂອງແມ່ຍິງ ໃນອົງກອນພັດທະນາເອກະຊົນ ແມ່ຍິງຕາມທີ່ລະບຸໄວ້ໃນມາດຕາ 7 ວັກ (ຄ) ;

(ຊ) ວິເຄາະຂອບເຂດທີ່ລັດພາຄີໃຫ້ການຮັບປະກັນວ່າຈະມີການປຶກສາຫາລື ກັບອົງການເຫລົ່ານັ້ນ ແລະ ວິເຄາະເຖິງຜົນຂອງຂໍ້ແນະນຳຂອງອົງການເຫລົ່ານີ້ທີ່ມີຕໍ່ການກຳໜົດ ແລະດຳເນີນຕາມນະໂຍບາຍຂອງລັດຖະບານໃນທຸກລະດັບ;

(ຍ) ໃຫ້ຂໍ້ມູນກ່ຽວກັບການທີ່ມີຕົວແທນແມ່ຍິງຢູ່ໜ້ອຍໃນຖານະສະມາຊິກ ຫລືເຈົ້າໜ້າທີ່ຂອງພັກການເມືອງ,ສະຫະພາບແຮງງານ, ອົງການຜູ້ຈ້າງງານ ແລະ ສະມາວິຊາຊີບ ພ້ອມທັງວິເຄາະປັດໃຈທີ່ເຮັດໃຫ້ເກີດສະພາບການດັ່ງກ່າວ.

# ມາດຕາ 8

49. ຄວນມີການກຳໜົດການດຳເນີນການ ແລະ ຕິດຕາມກວດສອບຄວາມມີປະສິດທິພາບຂອງມາດຕະການຕ່າງໆ ລວມທັງທີ່ໄດ້ຮັບການອອກແບບມາເພື່ອຮັບປະກັນວ່າມີຄວາມເທົ່າທຽມກັນລະຫວ່າງເພດຍິງຂຶ້ນໃນໝູ່ສະມາຊິກຂອງອົງກອນສະຫະປະຊາຊາດ ລວມທັງຄະນະກຳມະການຫລັກໆຂອງສະມັດຊາ ສະຫະປະຊາຊາດລວມທັງຄະນະກຳມະການຫລັກໆຂອງສະມັດຊາສະຫະປະຊາຊາດ ສະພາເສດຖະກິດ ແລະສັງຄົມ ແລະ ອົງກອນຜູ້ຊ່ຽວຊານ ລວມທັງອົງກອນທີ່ປົກປັກຮັກສາຂໍ້ຕົກລົງລະຫວ່າງປະເທດຕ່າງໆ ແລະ ໃນການແຕ່ງຕັ້ງຄະນະທີ່ເຮັດວຽກອິດສະຫຼະ ຫລື ຜູ້ລາຍງານພິເສດປະຈຳປະເທດຕ່າງໆ;

50. ໃນການຈັດການເຮັດບົດລາຍງານຕາມມາດຕາ 8 ລັດພາຄີຄວນ:

(ກ) ໃຫ້ຂໍ້ມູນສະຖິຕິແບບແຍກເພດທີ່ສະແດງໃຫ້ເຫັນຈຳນວນສ່ວນຮ້ອຍ(ເປີເຊັນ)ຂອງແມ່ຍິງທີ່ເຮັດວຽກດ້ານກິດຈະການລະຫວ່າງປະເທດ ຫລື ໄດ້ເຂົ້າຮ່ວມຢ່າງສະໝ່ຳສະເໝີໃນການເປັນຜູ້ແທນລະດັບນາໆຊາດ ຫລື ໃນງານເທດສະການທີ່ຈັດຂຶ້ນໃນນາມຂອງລັດລວມທັງການເປັນສະມາຊິກຂອງຄະນະຜູ້ແທນລັດຖະບານ ໃນກອງປະຊຸມນາໆຊາດ ແລະ ການສະເໜີຊື່ເພື່ອປະຕິບັດວຽກງານດ້ານການຮັກສາສັນຕິພາບ ແລະ ແກ້ໄຂຄວາມຂັດແຍ່ງ ແລະ ລະບຸເຖິງຄວາມອາວຸໂສຂອງແມ່ຍິງໃນວຽກງານໃນແຕ່ລະດ້ານອີກດ້ວຍ;

(ຂ) ການບັນລະຍາຍເຖິງຄວາມພະຍາຍາມທີ່ຈະເຮັດໃຫ້ເກີດເງື່ອນໄຂ ແລະຂະບວນການທີ່ມີຄວາມເປັນກາງ ເພື່ອການແຕ່ງຕັ້ງ ແລະ ການເລື່ອນຕຳແໜ່ງທີ່ສຳຄັນ ແລະ ການເປັນຕົວແທນລັດຖະບານ;

(ຄ) ການບັນລະຍາຍເຖິງຂັ້ນຕອນໃນການປະຕິບັດວຽກງານ ເພື່ອເຜີຍແຜ່ຂໍ້ມູນຢ່າງກວ້າງຂວາງໃນສ່ວນທີ່ກ່ຽວພັນກັບພັນທະທີ່ຈະຕ້ອງປະຕິບັດໃນລະດັບນາໆຊາດຂອງລັດຖະບານທີ່ມີຜົນຕໍ່ກັບແມ່ຍິງ ແລະ ເອກະສານທາງການຈາກເວທີລະດັບຕ່າງໆຊຶ່ງເຮັດຂຶ້ນຫລາຍຝ່າຍ ໂດຍສະເພາະຢ່າງຍິ່ງຄວນຈະໃຫ້ຂໍ້ມູນແກ່ທັງອົງການຈັດຕັ້ງລັດ ແລະ ອົງການພັດທະນາທາງດ້ານເອກະຊົນທີ່ມີໜ້າທີ່ຮັບຜິດຊອບໃນດ້ານຄວາມກ້າວໜ້າຂອງແມ່ຍິງ ;

(ງ) ໃຫ້ຂໍ້ມູນກ່ຽວກັບການຈຳແນກຕໍ່ແມ່ຍິງ ທີ່ສືບເນື່ອງມາຈາກກິດຈະກຳທາງການເມືອງຂອງພວກເຂົາ ບໍ່ວ່າຈະຢູ່ໃນຖານະສ່ວນບຸກຄົນ ຫລື ໃນຖານະສະມາຊິກຂອງອົງການຈັດຕັ້ງສຳລັບແມ່ຍິງອື່ນໆ.

1. ມະຕິສະມັດຊາສະຫະປະຊາຊາດທີ່ 217 A (III)
2. ມະຕິສະມັດຊາສະຫະປະຊາຊາດທີ່ 2200 A (XXI )
3. ມະຕິສະມັດຊາສະຫະປະຊາຊາດທີ່ 640 ( VII )
4. ບົດລາຍງານກອງປະຊຸມລະດັບໂລກວ່າດ້ວຍສິດທິມະນຸດທີ່ກຸງ ວຽນນາ ວັນທີ່ 14 ຫາ 25 ມິຖຸນາ ຄສ 1993 ( A/CONF. 157/24 ( Part I ) ບົດທີ່ III
5. ບົດລາຍງານກອງປະຊຸມລະດັບໂລກວ່າດ້ວຍເລື່ອງແມ່ຍິງຄັ້ງທີ່ສີ່ ທີ່ ປັກກິ່ງ ວັນທີ່ 4 ຫາ 15 ກັນຍາ 1995 ( A/CONF. 177/20 ແລະ Add.1 ) ບົດທີ່ I ມະຕິທີ່ 1 ພາກ I
6. ເບິ່ງບົດບັນທຶກທີ່ເປັນທາງການຂອງກອງປະຊຸມສະມັດຊາສະຫະປະຊາຊາດ ສະໄໝທີ 43 (ສີ່ສິບສາມ) ເອກະສານເພີ່ມເຕີມໝາຍເລກ 38 ( A/43/38 ) ບົດທີ່ V
7. CCPR/21/21/ Rev.1/Add.7 ວັນທີ່ 27 ສິງຫາ ຄສ 1996
8. 96/694/EC, ບັດເຊວ ວັນທີ່ 2 ທັນວາ ຄສ 1996
9. ເອກະສານກຳມາທິການຍຸໂລບ V/1206/96_ EN (ມີນາ ຄສ 1996 )
10. ເບິ່ງຫຍໍ້ໜ້າທີ່ 141 ຂອງແຜນປະຕິບັດການທີ່ໄດ້ຮັບການຮັບຮອງໃນກອງປະຊຸມໂລກວ່າດ້ວຍແມ່ຍິງຄັ້ງທີ່ສີ່ ຈັດຂຶ້ນທີ່ກຸງປັກກິ່ງ ລະຫວ່າງວັນທີ່ 4 ຫາ 15 ກັນຍາ 1995 ( A /CONF.177/20 ບົດທີ່ I ມະຕິທີ່ 1 ພາກທີ II ) ແລະເບິ່ງຫຍໍ້ໜ້າທີ່ 134 ຊຶ່ງມີຂໍ້ຄວາມສ່ວນໜຶ່ງວ່າ " ການເຂົ້າເຖິງ ແລະ ການມີສ່ວນຮ່ວມຢ່າງສະເໝີພາບຂອງແມ່ຍິງ ໃນໂຄງການສ້າງອຳນາດ ແລະການມີສ່ວນຮ່ວມຢ່າງເຕັມທີ່ໃນຄວາມພະຍາຍາມທັງຫລາຍ ເພື່ອປ້ອງກັນ ແລະແກ້ໄຂຄວາມຂັດແຍ່ງເປັນສິ່ງຈຳເປັນໃນການຮັກສາ ແລະສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງ "

**(GR24)**

# ຂໍ້ສະເໜີແນະທົ່ວໄປ ລຳດັບທີ 24

## ມາດຕາ 12 ຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ.. ແມ່ຍິງ ກັບ ຜູ້ຊາຍ

ກອງປະຊຸມສະໄໝທີຊາວ( 20 ) ( 1999 )

1. ຄະນະກຳມະການລົບລ້າງການຈຳແນກຕໍ່ແມ່ຍິງຢືນຢັນວ່າການເຂົ້າເຖິງການບໍລິການຜູ້ຊາຍລວມ ລວມເຖິງສຸຂະພາບການຈະເລີນພັນ ເປັນສິດທິຂັ້ນພື້ນຖານ ພາຍໃຕ້ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ຊຶ່ງຊີ້ໃຫ້ເຫັນຢ່າງຊັດເຈນໄວ້ໃນກອງປະຊຸມສະໄໝທີ່ 20 ຊຶ່ງດຳເນີນຕາມມາດຕາ 21 ທີ່ມີການກຳໜົດໃຫ້ນຳສະເໜີລາຍລະອຽດໄວ້ເປັນຂໍ້ສະເໜີແນະທົ່ວໄປສຳຫລັບມາດຕາ 12 ຂອງສົນທິສັນຍາ ;

## ຄວາມເປັນມາ

2. ການທີ່ລັດພາຄີປະຕິບັດຕາມມາດຕາ12 ຂອງສົນທິສັນຍາຖືວ່າເປັນຫົວໃຈສຳຄັນຂອງສຸຂະພາບ ແລະ ຄວາມເປັນຢູ່ຂອງແມ່ຍິງ ມາດຕາດັ່ງກ່າວກຳໜົດໃຫ້ລັດຕ້ອງລົບລ້າງການຈຳແນກຕໍ່ແມ່ຍິງ ໃນການເຂົ້າເຖິງ ການບໍລິການດ້ານສຸຂະພາບຕະຫລອດອາຍຸໄຂ ໂດຍສະເພາະຢ່າງຍິ່ງແມ່ນໃນດ້ານການວາງແຜນຄອບຄົວ, ການມີລູກ(ຖືພາມານ), ການເກີດລູກ ແລະ ລະຍະເວລາຫລັງການເກີດລູກ, ການກວດສອບບົດລາຍງານຂອງຂອງລັດພາຄີຕາມມາດຕາ 18 ຂອງສົນທິສັນຍາສະແດງໃຫ້ເຫັນວ່າສຸຂະພາບຂອງແມ່ຍິງ ເປັນເປັນປະເດັນທີ່ເປັນໃຈກາງຂອງການສົ່ງເສີມສຸຂະພາບ ແລະຄວາມເປັນຢູ່ທີ່ດີຂອງແມ່ຍິງເພື່ອຜົນປະໂຫຍດຂອງລັດພາຄີ ແລະ ຜູ້ທີ່ສົນໃຈ ແລະ ຫ່ວງໃຍໃນປະເດັນທີ່ກ່ຽວກັບສຸຂະພາບຂອງແມ່ຍິງ ຂໍ້ສະເໜີແນະນີ້ເປັນຈະຊ່ວຍເພີ່ມຄວາມເຂົ້າໃຈຂອງຄະນະກຳມະການໃນສ່ວນທີ່ກ່ຽວກັບ ມາດຕາ 12 ແລະ ເພື່ອທີ່ຈະກ່າວເຖິງມາດ ຕະການໃນການລົບລ້າງການຈຳແນກເພື່ອໃຫ້ແມ່ຍິງມີສິດທີ່ຈະມີມາດຖານສຸຂະພາບສູງສຸດເທົ່າທີ່ຈະເປັນໄປໄດ້ ;

3. ກອງປະຊຸມລະດັບໂລກຂອງສະຫະປະຊາຊາດຄັ້ງຕ່າງໆ ໃນຊ່ວງທີ່ຜ່ານມາບໍ່ດົນນີ້ ໄດ້ມີການພິຈາລະນາເຖິງແຜນປະຕິບັດການທີ່ກ່ຽວຂ້ອງ ຊຶ່ງສະຫະປະຊາຊາດ ໃຫ້ການຍອມຮັບໃນກອງປະຊຸມລະດັບໂລກ ໃນແຕ່ລະຄັ້ງທີ່ຜ່ານມາ ແລະ ໂດຍສະເພາະແມ່ນໃນການປະຊຸມລະດັບໂລກວ່າດ້ວຍສິດທິມະນຸດໃນປີ ຄສ 1993 ກອງປະຊຸມນາໆຊາດວ່າດ້ວຍເລື່ອງປະຊາກອນ ແລະການພັດທະນາ ປີ ຄສ 1994 ແລະກອງປະຊຸມລະດັບໂລກວ່າດ້ວຍເລື່ອງແມ່ຍິງ ຄັ້ງທີ່ສີ່ ໃນປີ ຄສ 1995 ຄະນະກຳມະການຍັງຮັບຊາບເຖິງການເຮັດວຽກ ຂອງອົງການອະນາໄມໂລກ * ກອງທຶນປະຊາກອນແຫ່ງສະຫະປະຊາຊາດ** ແລະ ອົງກອນອື່ນໆຂອງສະຫະປະຊາຊາດພ້ອມທັງຍັງໄດ້ໃຫ້ການ

ຮ່ວມມືກັບອົງການພັດທະນາເອກະຊົນຈຳນວນຫລາຍທີ່ມີຄວາມຊຳນິຊຳນານເປັນພິເສດໃນເລື່ອງສຸຂະພາບຂອງແມ່ຍິງ ເພື່ອພັດທະນາຂໍ້ສະເໜີແນະທົ່ວໄປນີ້ ;

4. ຄະນະກຳມະການສັງເກດເຖິງການທີ່ຂໍ້ຕົກລົງອື່ນໆ ຂອງສະຫະປະຊາຊາດຕ່າງກໍໃຫ້ຄວາມສຳຄັນກັບສິດທິດ້ານສຸຂະພາບ ແລະ ເງື່ອນໄຂທີ່ເຮັດໃຫ້ບັນລຸເຖິງການມີສຸຂະພາບດີ ໃນບັນດາຂໍ້ຕົກລົງເຫລົ່ານີ້ ໄດ້ແກ່ຖະແຫລງການສາກົນວ່າດ້ວຍສິດທິມະນຸດ, ກະຕິກາລະຫວ່າງປະເທດວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ , ກະຕິກາລະຫວ່າງປະເທດວ່າດ້ວຍສິດທິພົນລະເມືອງ ແລະສິດທິທາງການເມືອງ, ສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ;

5. ຄະນະກຳມະການຍັງໄດ້ອ້າງເຖິງຂໍ້ສະເໜີແນະທົ່ວໄປກ່ອນໜ້ານີ້ໃນເລື່ອງກ່ຽວກັບການຕັດອະໄວຍະວະເພດຍິງ , ການຕິດເຊື້ອເອດໄອວີ ແລະ ໂລກເອດ, ແມ່ຍິງຜູ້ພິການ, ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມສະເໝີພາບໃນຄວາມສຳພັນໃນຄອບຄົວ ຊຶ່ງທັງໝົດນີ້ແມ່ນໄດ້ກ່າວເຖິງປະເດັນ ຊຶ່ງເປັນສ່ວນໜຶ່ງຂອງການປະຕິບັດຕາມມາດຕາ 12 ຂອງສົນທິສັນຍາ ;

6. ໃນຂະນະທີ່ຄວາມແຕກຕ່າງທາງຊີວະວິທະຍາ ລະຫວ່າງແມ່ຍິງ ແລະ ຜູ້ຊາຍອາດນຳໄປສູ່ຄວາມແຕກຕ່າງດ້ານສະຖານະທາງສຸຂະພາບ ແຕ່ກໍຍັງມີປັດໃຈທາງສັງຄົມອື່ນໆ ທີ່ເປັນໂຕຕັດສິນສະຖານະດ້ານສຸຂະພາບຂອງແມ່ຍິງ ແລະ ຜູ້ຊາຍ ຊຶ່ງແຕກຕ່າງກັນໄປ ລວມທັງໝູ່ແມ່ຍິງນຳກັນເອງ ດ້ວຍເຫດນີ້ ຈຶ່ງໄດ້ໃຫ້ຄວາມໃສ່ໃຈເປັນພິເສດກັບຄວາມຕ້ອງການ ແລະ ສິດທິດ້ານສຸຂະພາບຂອງແມ່ຍິງກຸ່ມທີ່ຢູ່ໃນສະຖານະການທຸກຍາກລຳບາກ ແລະດ້ອຍໂອກາດເຊັ່ນ: ແມ່ຍິງຜູ້ຍ້າຍຖິ່ນຖານ, ຜູ້ລີ້ໄພ ແລະແມ່ຍິງຜູ້ຖືກບັງຄັບໃຫ້ຍ້າຍຖິ່ນຖານໃນປະເທດຂອງຕົນ, ເດັກນ້ອຍແມ່ຍິງ ແລະ ແມ່ຍິງທີ່ສູງອາຍຸ, ແມ່ຍິງໃນການຄ້າປະເວນີ, ແມ່ຍິງຊົນເຜົ່າພື້ນເມືອງ ແລະ ແມ່ຍິງຊຶ່ງມີຄວາມພິການທາງຮ່າງກາຍ ຫລື ຈດໃຈ ;

7. ຄະນະກຳມະການສັງເກດເຫັນວ່າ ການບັນລຸເຖິງສິດທິຂອງແມ່ຍິງໃນດ້ານສຸຂະພາບຢ່າງເຕັມທີ່ຈະເກີດມີໄດ້ກໍຕໍ່ເມື່ອລັດພາຄີ ປະຕິບັດການຕາມພັນທະທີ່ຕ້ອງທີ່ຈະຕ້ອງເຄົາລົບ, ຄຸ້ມຄອງ ແລະ ສົ່ງເສີມສິດທິມະນຸດຂັ້ນພື້ນຖານຂອງແມ່ຍິງ ໃນເລື່ອງຄວາມເປັນຢູ່ດ້ານໂພຊະນາການ ໃນຕະຫລອດຊ່ວງອາຍຸໄຂ ທັງນີ້ໂດຍການມີອາຫານທີ່ປອດໄພ, ມີຄຸນຄ່າທາງໂພຊະນາການ ແລະ ປັບໃຫ້ເຂົ້າກັບສະພາບຂອງທ້ອງຖິ່ນ ໃນນີ້ເອງລັດພາຄີຄວນຈະດຳເນີນຂັ້ນຕອນ ເພື່ອເອື້ອອຳນວຍໃຫ້ເກີດການເຂົ້າເຖິງຊັບພະຍາກອນ ເພື່ອການຜະລິດໂດຍສະເພາະແມ່ນ ສຳຫລັບແມ່ຍິງຊົນນະບົດໂດຍເປັນການເຂົ້າເຖິງທາງດ້ານກາຍະພາບ ແລະ ທາງດ້ານເສດຖະກິດ ແລະ ນອກຈາກນີ້ຍັງຄວນຮັບປະກັນວ່າຈະມີການຕອບສະໜອງຄວາມຕ້ອງການພິເສດດ້ານໂພຊະນາການຂອງແມ່ຍິງໃນຂອບເຂດອຳນາດການປົກຄອງຂອງລັດພາຄີນັ້ນໆ ;

## ມາດຕາ 12

8. ມາດຕາ 12 ມີຂໍ້ຄວາມດັ່ງນີ້

1. ລັດພາຄີຈະນໍາໃຊ້ມາດຕະການທີ່ເໝາະສົມທຸກຢ່າງ ເພື່ອລົບລ້າງການຈໍາແນກຕໍ່ແມ່ຍິງ ໃນດ້ານການເບິ່ງແຍງສຸຂະພາບ ເພື່ອຮັບປະກັນວ່າແມ່ຍິງ ຈະໄດ້ຮັບການບໍລິການດ້ານ ການເບິ່ງແຍງສຸຂະພາບ ລວມທັງການບໍລິການກ່ຽວກັບການວາງແຜນຄອບຄົວ ບົນພື້ນ ຖານຄວາມສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍ ;

2. ເຖິງແມ່ນວ່າຈະມີບົດບັນຍັດຕາມວັກ 1 ຂອງມາດຕານີ້ ລັດພາຄີກໍຈະຮັບປະກັນໃຫ້ແມ່ຍິງ ໄດ້ຮັບການບໍລິການທີ່ເໝາະສົມກ່ຽວກັບຖືພາມານ, ການເກີດລູກ ແລະ ລະຍະເວລາ ຫລັງຈາກການເກີດລູກ ໂດຍເປັນການໃຫ້ບໍລິການແບບບໍ່ໄດ້ຈ່າຍເງິນເມື່ອຈໍາເປັນ ລວມ ທັງມີພາວະໂພຊະນາການ ທີ່ພຽງພໍລະຫວ່າງການຖືພາມານ ແລະລະຍະການໃຫ້ນົມລູກ , ລັດພາຄີຄວນຄໍານຶງເຖິງປະເດັນສຸຂະພາບຂອງແມ່ຍິງ ຕະຫລອດຊ່ວງອາຍຸໄຂຂອງແມ່ ຍິງ ດັ່ງນັ້ນເພື່ອຜົນປະໂຫຍດແຫ່ງຂໍ້ສະເໜີແນະທົ່ວໄປນີ້ " ແມ່ຍິງ " ຈຶ່ງໝາຍລວມເຖິງ ເດັກນ້ອຍແມ່ຍິງ ແລະ ໄວລຸ່ນຍິງພ້ອມ ຊຶ່ງຂໍ້ສະເໜີແນະທົ່ວໄປນີ້ຈະບັນລະຍາຍ ເຖິງຂໍ້ວິ ເຄາະຂອງຄະນະກໍາມະການໃນສ່ວນທີ່ກ່ຽວກັບເນື້ອໃນຫລັກຂອງມາດຕາ 12 ;

# ເນື້ອໃນຫລັກ

## ມາດຕາ 12 (1)

9. ລັດພາຄີຢູ່ໃນຖານະທີ່ດີທີ່ສຸດທີ່ຈະລາຍງານເຖິງປະເດັນສຸຈະພາບທີ່ຄໍາຄັນທີ່ສຸດ ຊຶ່ງຜົນກະທົບຕໍ່ ແມ່ຍິງ ໃນປະເທດນັ້ນໆ ດັ່ງນັ້ນການທີ່ຈະຊ່ວຍໃຫ້ຄະນະກໍາມະການສາມາດປະເມີນວ່າມາດຕະ ການເພື່ອລົບລ້າງການການຈໍາແນກຕໍ່ແມ່ຍິງ ໃນດ້ານການເບິ່ງແຍງດູແລສຸຂະພາບ ວ່າມີຄວາມ ເໝາະສົມ ຫລື ບໍ່ ລັດພາຄີຕ້ອງລາຍງານເລື່ອງກົດໝາຍ, ແຜນງານ ແລະ ນະໂຍບາຍກ່ຽວກັບສຸ ຂະພາບ ໂດຍມີຂໍ້ມູນແບບແຍກເພດທີ່ສາມາດເຊື່ອຖືໄດ້ໃນສ່ວນທີ່ກ່ຽວກັບເຫດການ ແລະຄວາມ ຮຸນແຮງຂອງໂລກ ແລະ ສະພາບທີ່ເປັນໄພຕໍ່ສຸຂະພາບ ແລະໂພຊະນາການຂອງແມ່ຍິງ ແລະໃນ ສ່ວນທີ່ກ່ຽວກັບການມີຢູ່ ແລະ ຄວາມຄຸ້ມຄ່າຂອງມາດຕະການປ້ອງກັນ ແລະແກ້ໄຂ ບົດລາຍງານ ທີ່ສົ່ງມາເຖິງຄະນະກໍາມະການຕ້ອງສະແດງໃຫ້ເຫັນວ່າກົດໝາຍ,ແຜນງານ ແລະນະໂຍບາຍດ້ານ ສຸຂະພາບນັ້ນຕັ້ງຢູ່ບົນພື້ນຖານຂອງການວິໄຈ ແລະປະເມີນສະຖານະສຸຂະພາບ ແລະຄວາມຕ້ອງ ການຂອງແມ່ຍິງໃນປະເທດນັ້ນໆຢ່າງເປັນວິທະຍາສາດ ແລະຖືກຕ້ອງຕາມຫລັກຈາລິຍະທໍາ ແລະ

ຕ້ອງຄຳນຶງເຖິງຄວາມຫລາກຫລາຍ ຫລື ແບບແຜນການປະຕິບັດຂອງຊົນຊາດ, ພູມີພາກ ຫລື ຊຸມຊົນບົນພື້ນຖານຂອງສາສະໜາ, ປະເພນີ ແລະ ວັດທະນະທຳ ;

10. ລັດພາຄີຄວນລະບຸຂໍ້ມູນກ່ຽວກັບໂລກ, ສະພາວະສຸຂະພາບ ແລະ ສະພາວະທີ່ເປັນອັນຕະລາຍຕໍ່ກັບສຸຂະພາບ ຊຶ່ງມີຜົນກະທົບຕໍ່ແມ່ຍິງ ຫລື ແມ່ຍິງບາງກຸ່ມຢ່າງແຕກຕ່າງກັບຜູ້ຊາຍ ລວມທັງຂໍ້ມູນກ່ຽວກັບແນວທາງແກ້ໄຂທີ່ເປັນໄປໄດ້ໃນເລື່ອງນີ້ ;

11. ມາດຕະການທັງຫລາຍ ເພື່ອລົບລ້າງການຈຳແນກຕໍ່ແມ່ຍິງ ຍ່ອມຖືວ່າຍັງບໍ່ມີຄວາມເໝາະສົມ ຫາກລະບົບການເບິ່ງແຍງສຸຂະພາບ ຍັງຂາດການບໍລິການດ້ານການປ້ອງກັນ, ກວດຫາ ແລະ ຮັກສາຄວາມເຈັບປ່ວຍທີ່ເກີດຂຶ້ນສະເພາະກັບແມ່ຍິງ ການທີ່ລັດພາຄີປະຕິເສດການໃຫ້ການບໍລິການດ້ານອະນາໄມຈະເລີນພັນແກ່ແມ່ຍິງ ໂດຍຖືກຕ້ອງຕາມກົດໝາຍ ຍ່ອມຖືວ່າເປັນການຈຳແນກຕົວຢ່າງເຊັ່ນ: ຫາກຜູ້ໃຫ້ການບໍລະການດ້ານສຸຂະພາບ ປະຕິເສດບໍ່ໃຫ້ການບໍລິການເພາະສາເຫດຈາກການສຳນຶກໃນເລື່ອງຄວາມຖືກຜິດ ກໍຄວນມີມາດຕະການທີ່ຈະປະທະກັນວ່າຈະສາມາດໄປຮັບບໍລິການຈາກຜູ້ໃຫ້ບໍລິການລາຍອື່ນໄດ້ ;

12. ລັດພາຄີຄວນລາຍງານເຖິງຄວາມເຂົ້າໃຈຂອງລັດວ່າ ນະໂຍບາຍ ແລະ ມາດຕະການດ້ານການເບິ່ງແຍງດູແລສຸຂະພາບ ຄຳນຶງເຖິງສິດທິດ້ານສຸຂະພາບຂອງແມ່ຍິງ ຈາກການເບິ່ງດ້ານຄວາມຕ້ອງການ ແລະຜົນປະໂຫຍດຂອງແມ່ຍິງຢ່າງໃດ ແລະ ການເບິ່ງແຍງດູແລສຸຂະພາບນັ້ນໄດ້ຄຳນຶງເຖິງລັກສະນະ ແລະປັດໄຈທີ່ແຕກຕ່າງກັນລະຫວ່າງແມ່ຍິງ ແລະ ຜູ້ຊາຍຢ່າງໃດເຊັ່ນ :

(ກ) ປັດໄຈທາງຊີວະພາບຊຶ່ງແຕກຕ່າງກັນລະຫວ່າງແມ່ຍິງ ແລະ ຜູ້ຊາຍເຊັ່ນ : ການມີປະຈຳເດືອນ, ການເຮັດໜ້າທີ່ດ້ານການຈະເລີນພັນ ແລະການໝົດປະຈຳເດືອນຂອງແມ່ຍິງ ອີກຕົວຢ່າງໜຶ່ງໄດ້ແກ່ ການທີ່ແມ່ຍິງມີຄວາມສ່ຽງທີ່ຈະໄດ້ຮັບເຊື້ອໂລກຕິດຕໍ່ທາງເພດສຳພັນຫລາຍກວ່າ ;

(ຂ) ປັດໄຈດ້ານສັງຄົມເສດຖະກິດ ຊຶ່ງມີຄວາມແຕກຕ່າງກັນລະຫວ່າງແມ່ຍິງທົ່ວໄປ ກັບແມ່ຍິງບາງກຸ່ມເປັນການສະເພາະຕົວຢ່າງເຊັ່ນ : ຄວາມສຳພັນທາງດ້ານອຳນາດ ທີ່ບໍ່ສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍພາຍໃນເຮືອນ ແລະ ສະຖານທີ່ເຮັດວຽກອາດ ສົ່ງຜົນດ້ານລົບຕໍ່ພາວະໂພຊະນາການ ແລະ ສຸຂະພາບຂອງແມ່ຍິງ ພວກເຂົາຍັງອາດຈະຕ້ອງພົບກັບຄວາມຮຸນແຮງໃນຮູບແບບຕ່າງໆ ຊຶ່ງຈະມີຜົນກະທົບເຖິງສະພາວະສຸຂະພາບ ເດັກນ້ອຍແມ່ຍິງ ແລະ ໄວລຸ່ນຍິງມີຄວາມສ່ຽງທີ່ຈະຖືກຄຸກຄາມທາງເພດ ໂດຍຜູ້ຊາຍທີ່ມີອາຍຸຫລາຍກວ່າ ແລະ ໂດຍສະມາຊິກໃນຄອບຄົວ ຊຶ່ງເທົ່າກັບເປັນການປ່ອຍໃຫ້ເດັກນ້ອຍຍິງ ແລະໄວລຸ່ນຍິງຕ້ອງສ່ຽງກັບການຖືກທຳຮ້າຍທັງທາງຮ່າງກາຍ ແລະ ຈິດໃຈ ລວມທັງອາດການຖືພາມານທີ່ບໍ່ຕ້ອງການ ຫລື ມີລູກແຕ່ອາຍຸຍັງນ້ອຍ ແນວທາງການປະຕິບັດທາງວັດທະນະທຳ ແລະ ຮີດຄອງປະເພນີບາງຢ່າງເຊັ່ນ :ການຕັດອະໄວຍະວະເພດຍິງ ຍັງເປັນການສ່ຽງຢ່າງຮ້າຍແຮງຕໍ່ກັບການເສຍຊີວິດ ແລະພິການ ;

(ຄ) ປັດໄຈທາງຈິດວິທະຍາທາງສັງຄົມ ຊຶ່ງແຕກຕ່າງກັນໄປລະຫວ່າງແມ່ຍິງ ແລະ ຜູ້ຊາຍ ລວມເຖິງພາວະຊຶມເສົ້າໂດຍທົ່ວໄປ ແລະ ໂດຍສະເພາະຢ່າງຍິ່ງພາວະຊຶມເສົ້າຫລັງ ຈາກການເກີດລູກໃໝ່ ລວມໄປເຖິງສະພາວະທາງດ້ານຈິດໃຈຢ່າງອື່ນອີກ ຕົວຢ່າງເຊັ່ນ ພາວະທີ່ນຳໄປສູ່ບັນຫາເລື່ອງການກິນອາຫານເຊັ່ນໂລກອະໂນເລັກເຊຍ ( anorexia ) ແລະ ບູລິເມັຍ ( bulimia ) ;

(ງ) ເຖິງແມ່ນວ່າການບໍ່ເຄົາລົບຄວາມເປັນສ່ວນຕົວຂອງຄົນໄຂ້ ແລະຈະສົ່ງຜົນກະທົບຕໍ່ທັງແມ່ຍິງ ແລະຜູ້ຊາຍ ແຕ່ບັນຫາດັ່ງກ່າວອາດຈະມີຜົນເຮັດໃຫ້ແມ່ຍິງຕັດສິນໃຈບໍ່ໄປຫາ ເພື່ອຂໍຄຳແນະນຳ ຫລືຮັບການປິ່ນປົວ ຊຶ່ງຈະສົ່ງຜົນດ້ານລົບຕໍ່ໄປເຖິງສຸຂະພາບ ແລະ ສະພາວະຄວາມເປັນຢູ່ຂອງພວກເຂົາ ຍ້ອນເຫດຜົນດັ່ງກ່າວນີ້ເອງທີ່ເຮັດໃຫ້ແມ່ຍິງມັກຈະບໍ່ຄ່ອຍເຕັມໃຈ ໃນການໄປຮັບການປິ່ນປົວໂລກທີ່ກ່ຽວກັບລະບົບສືບພັນ, ການຄຸມກຳເນີດ ຫລື ເມື່ອມີການຫລຸລູກທີ່ບໍ່ປະສົບຄວາມສຳເລັດລວມເຖິງກໍລະນີທີ່ພວກເຂົາຕ້ອງພົບກັບບັນຫາຄວາມຮຸນແຮງທາງເພດ ຫລືທາງຮ່າງກາຍ

13. ໜ້າທີ່ຂອງລັດພາຄີໃນອັນທີ່ຈະປະທະກັບການເຂົ້າເຖິງການບໍລິການ ຂໍ້ມູນ ແລະ ການສຶກສາກ່ຽວກັບການເບິ່ງແຍງສຸຂະພາບ ບົນພື້ນຖານຂອງຄວາມສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍ ໝາຍເຖິງພັນທະທີ່ຈະເຄົາລົບ, ຄຸ້ມຄອງ ແລະ ຕອບສະໜອງຕໍ່ສິດທິດ້ານການເບິ່ງແຍງສຸຂະພາບຂອງແມ່ຍິງ ລັດພາຄີມີໜ້າທີ່ຮັບຜິດຊອບທີ່ຈະຮັບປະກັນວ່າກົດໝາຍ ການບໍລິການງານ ແລະນະໂຍບາຍມີຄວາມສອດຄ່ອງກັບພັນທະທັງສາມດ້ານດັ່ງກ່າວ ນອກຈາກນີ້ລັດພາຄີຍັງຈະຕ້ອງຈັດໃຫ້ມີລະບົບທີ່ຮັບປະກັນການປະຕິບັດວຽກທາງສານທີ່ມີປະສິດທິພາບຄວາມເມີດຕໍ່ ມາດຕາ 12 ;

14. ພັນທະໃນດ້ານການເຄົາລົບສິດທິໝາຍຄວາມວ່າລັດພາຄີຕ້ອງບໍ່ຂັດຂວາງການກະທຳຂອງແມ່ຍິງໃນອັນທີ່ຈະບັນລຸເຖິງເປົ້າໝາຍດ້ານສຸຂະພາບ, ລັດພາຄີຄວນລາຍງານເຖິງວິທີການ ທີ່ຜູ້ໃຫ້ການບໍລິການດ້ານສຸຂະພາບທັງຂອງລັດ ແລະ ເອກະຊົນປະຕິບັດໜ້າທີ່ຂອງຕົນໃນການເຄົາລົບສິດທິຂອງແມ່ຍິງທີ່ຈະເຂົ້າເຖິງການຮັກສາສຸຂະພາບ ຕົວຢ່າງເຊັ່ນ ລັດພາຄີບໍ່ຄວນຈຳກັດການທີ່ແມ່ຍິງຈະເຂົ້າເຖິງການບໍລິການດ້ານສຸຂະພາບ ຫລື ຄຣີນິກທີ່ໃຫ້ບໍລິການ ໂດຍອ້າງເຫດຜົນວ່າແມ່ຍິງນັ້ນບໍ່ໄດ້ຮັບອະນຸຍາດຈາກຜູ້ເປັນຜົວ, ຄູ່ຄອງ, ພໍ່ແມ່ ຫລືພະນັກງານທີ່ເຮັດວຽກກ່ຽວກັບສຸຂະພາບເພາະເຫດຜົນທີ່ວ່າແມ່ຍິງນັ້ນຍັງບໍ່ທັນໄດ້ສ້າງຄອບຄົວ (ຍັງເປັນໂສດ) ຫລື ເພາະວ່າເປັນເພດຍິງອຸປະສັກຢ່າງອື່ນທີ່ຂັດຂວາງ ການເຂົ້າເຖິງການຮັກສາສຸຂະພາບທີ່ເໝາະສົມ ລວມເຖິງກົດໝາຍທີ່ເອົາຄວາມຜິດທາງອາຍາ ກັບການປະຕິບັດການທາງການແພດທີ່ຈຳເປັນສະເພາະສຳຫລັບແມ່ຍິງ ແລະທີ່ລົງໂທດແມ່ຍິງຜູ້ຂໍຮັບການບໍລິການດັ່ງກ່າວ ;

15. ພັນດ້ານການຄຸ້ມຄອງສິດທີກ່ຽວກັບສຸຂະພາບຂອງແມ່ຍິງ ກໍານົດໃຫ້ລັດພາຄີ, ໜ່ວຍງານ ແລະເຈົ້າໜ້າທີ່ຂອງລັດ ຕ້ອງດໍາເນີນການເພື່ອປ້ອງກັນ ແລະ ແຊກແຊງການລະເມີດສິດທິ ທີ່ເຮັດຂຶ້ນໂດຍບຸກຄົນ ແລະ ອົງການຈັດຕັ້ງຂອງເກະຊົນ ເນື່ອງຈາກຄວາມຮຸນແຮງບົນພື້ນຖານທາງເພດ ທີ່ເປັນປະເດັນທາງສຸຂະພາບທີ່ສໍາຄັນສໍາຫລັບແມ່ຍິງ ລັດພາຄີຈຶ່ງຄວນຮັບປະກັນ :

(ກ) ການອອກກົດໝາຍ ແລະຂໍ້ບັງຄັບໃຊ້ຢ່າງມີປະສິດທິພາບ ແລະກໍານົດນະໂຍບາຍ ຊຶ່ງລວມທັງລະບຽບວິທີການຮັກສາສຸຂະພາ ແລະ ຂັ້ນຕອນການປະຕິບັດໃນໂຮງໝໍ, ສໍາຫລັບການຈັດການກັບບັນຫາຄວາມຮຸນແຮງຕໍ່ແມ່ຍິງ ແລະການຄຸກຄາມທາງເພດຕໍ່ເດັກນ້ອຍແມ່ຍິງ ແລະ ເພື່ອການໃຫ້ການບໍລິການດ້ານສຸຂະພາບທີ່ເໝາະສົມ ;

(ຂ) ການຝຶກອົບຮົມໃຫ້ເກີດຄວາມເຂົ້າໃຈເລື່ອງບົດບາດຍິງຊາຍ ຊຶ່ງຈະເຮັດໃຫ້ຜູ້ທີ່ປະຕິບັດໜ້າທີ່ດ້ານການຮັກສາສຸຂະພາບສາມາດກວດຫາ ແລະ ຈັດການກັບຜົນດ້ານສຸຂະພາບທີ່ເກີດຈາກຄວາມຮຸນແຮງບົນພື້ນຖານຂອງບົດບາດຍິງຊາຍໄດ້ ;

( ຄ) ຂັ້ນຕອນການຮັບຄໍາຮ້ອງຮຽນທີ່ເປັນທໍາ ແລະ ໃຫ້ການຄຸ້ມຄອງທີ່ມີຄວາມຮັດກຸມ ແລະການດໍາເນີນມາດຕະການແຊກແຊງທີ່ເໝາະສົມ ຕໍ່ຜູ້ປະກອບວິຊາຊີບດ້ານການເບິ່ງແຍງຮັກສາສຸຂະພາບ ທີ່ກະທໍາຄວາມຜິດໂດຍການຄຸກຄາມທາງເພດຕໍ່ຄົນເຈັບທີ່ເປັນແມ່ຍິງ ;

(ງ) ການອອກກົດໝາຍ ແລະບັງຄັບໃຊ້ຢ່າງມີປະສິດທິພາບ ເພື່ອຫ້າມການຕັດອະໄວຍະວະເພດຍິງ ແລະ ການແຕ່ງດອງຂອງເດັກນ້ອຍແມ່ຍິງ.

16. ລັດພາຄີຄວນຮັບປະກັນວ່າຈະມີການໃຫ້ການຄຸ້ມຄອງ ແລະ ໃຫ້ການບໍລິການດ້ານສຸຂະພາຢ່າງພຽງພໍ ລວມທັງການຮັກສາ ແລະ ການໃຫ້ຄໍາປຶກສາໃນກໍລະນີທີ່ໄດ້ຮັບຄວາມກະທົບກະເທືອນທາງດ້ານຈິດໃຈ ແກ່ແມ່ຍິງທີ່ຢູ່ໃນສະພາວະຄວາມຍາກລໍາບາກເປັນພິເສດເຊັ່ນ : ເປັນຜູ້ຕິດຢູ່ໃນສະຖານະການການສູ້ຮົບ ແລະຜູ້ລີ້ໄພທີ່ເປັນແມ່ຍິງ.

17. ໜ້າທີ່ທີ່ຈະຕ້ອງຕອບສະໜອງຕໍ່ສິດທິນັ້ນ ກໍານົດໃຫ້ລັດພາຄີມີພັນທະ ທີ່ຈະຕ້ອງດໍາເນີນການທາງນິຕິບັນຍັດ, ທາງສານ, ການບໍລິຫານ, ງົບປະມານ, ເສດຖະກິດ ແລະ ມາດຕະການອື່ນໆໂດຍການໃຊ້ຊັບພະຍາກອນທີ່ມີຢູ່ຢ່າງເຕັມປະສິດທິພາບ ເພື່ອຮັບປະກັນວ່າແມ່ຍິງຈະໄດ້ໃຊ້ສິດທິດ້ານສຸຂະພາບຂອງຕົນ. ການສຶກສາຕ່າງໆ ທີ່ໜັ້ນໜັກໃຫ້ເຫັນວ່າອັດຕາການເສຍຊີວິດ ແລະການເຈັບປ່ວຍຂອງແມ່ມີຢູ່ສູງໃນທົ່ວໂລກ ແລະ ການທີ່ຄູ່ແຕ່ງດອງຈໍານວນຫລາຍ ຊຶ່ງຕ້ອງການຈໍາກັດຂະໜາດຂອງຄອບຄົວ ແຕ່ບໍ່ມີໂອກາດເຂົ້າເຖິງ ຫລື ບໍ່ໄດ້ໃຊ້ວິທີການຄຸມກໍາເນີດຮູບແບບໃດໆ ນັບວ່າດເປັນຂໍ້ຊີ້ບອກທີ່ສໍາຄັນ ວ່າລັດພາຄີອາດບໍ່ໄດ້ປະຕິບັດໜ້າທີ່ຂອງຕົນ ໃນ ສິ່ງທີ່ຈະຮັບປະກັນການເຂົ້າເຖິງການບໍລິການດ້ານສຸຂະພາບຂອງແມ່ຍິງ ທີ່ເປັນບັນຫາຄວາມຮຸນແຮງໂດຍສະ

ເພາະ ເມື່ອເປັນພາວະທີ່ປ້ອງກັນໄດ້ເຊັ່ນ : ໂລກວັນນະໂລກ ແລະ ເອດໄອວີ/ເອດ ຄະນະກຳມະການມີຄວາມຫ່ວງໄຍ ໃນຫລັກຖານທີ່ຊີ້ໃຫ້ເຫັນວ່າກຳລັງຫຍໍ້ທໍ້ຕໍ່ກັບໜ້າທີ່ ໂດຍການປ່ຽນໂອນວຽກດ້ານສຸຂະພາບຂອງລັດ ໄປຫາໜ່ວຍງານຂອງເອກະຊົນ ລັດພາຄີບໍ່ສາມາດຖອດຖອນຕົວເອງອອກຈາກຄວາມຮັບຜິດຊອບໃນດ້ານຕ່າງໆ ເຫລົ່ານີ້ໂດຍການມອບໝາຍ ຫລື ປ່ຽນໂອນອຳນາດຂອງລັດໃຫ້ແກ່ໜ່ວຍງານຂອງເອກະຊົນ ລັດພາຄີຈຶ່ງຄວນລາຍງານເຖິງສິ່ງທີ່ໄດ້ປະຕິບັດການໄປແລ້ວ ໃນເລື່ອງທີ່ກ່ຽວກັບການຈັດຂະບວນການ, ຂັ້ນຕອນຂອງລັດ ແລະ ທັງໝົດສຳລັບການໃຊ້ອຳນາດສາທາລະນະເພື່ອສົ່ງເສີມ ແລະ ຄຸ້ມຄອງສຸຂະພາບຂອງແມ່ຍິງ ລັດຄວນໃຫ້ຂໍ້ມູນກ່ຽວກັບມາດຕະການທາງບວກ ທີ່ໄດ້ປະຕິບັດການແລ້ວ ເພື່ອຄວບຄຸມການລະເມີດສິດທິຂອງແມ່ຍິງໂດຍຝ່າຍອື່ນທີ່ບໍ່ແມ່ນລັດຖະບານ ແລະ ເພື່ອຄຸ້ມຄອງສຸຂະພາບຂອງແມ່ຍິງ ລວມທັງມາດຕະການຕ່າງໆ ທີ່ໄດ້ປະຕິບັດການໄປແລ້ວ ເພື່ອຮັບປະກັນການໃຫ້ການບໍລິການຕ່າງໆເຫລົ່ານີ້.

18. ປະເດັນເລື່ອງເອດໄອວີ/ເອດ ແລະ ໂລກຕິດຕໍ່ທາງເພດສຳພັນອື່ນໆ ເປັນປະເດັນທີ່ສຳຄັນສຳລັບສິດທິດ້ານສຸຂະພາບທາງເພດຂອງແມ່ຍິງ ແລະເດັກນ້ອຍແມ່ຍິງໄວລຸ່ນ ແລະ ໄວລຸ່ນແມ່ຍິງ ແລະແມ່ຍິງໃນຫລາຍປະເທດຍັງບໍ່ມີໂອກາດເຂົ້າເຖິງຂໍ້ມູນ ແລະ ການບໍລິການທີ່ຈຳເປັນສຳຫລັບການຮັບປະກັນສຸຂະພາບທາງເພດຢ່າງພຽງພໍ ຜົນທີ່ເກີດຈາກຄວາມສຳພັນໃນທາງອຳນາດທີ່ບໍ່ເທົ່າທຽມອັນເນື່ອງມາຈາກບົດບາດຍິງຊາຍ ໄດ້ແກ່ການທີ່ແມ່ຍິງ ແລະ ເດັກນ້ອຍແມ່ຍິງໄວລຸ່ນມັກຈະບໍ່ສາມາດປະຕິເສດການມີເພດສຳພັນ ຫລື ຢືນຢັນການມີເພດສຳພັນໂດຍປອດໄພ ແລະ ມີຄວາມຮັບຜິດຊອບໄດ້ ວິທີປະຕິບັດຕາມປະເພນີ ຊຶ່ງເປັນອັນຕະລາຍເຊັ່ນ ການຕັດອະໄວຍະວະເພດຍິງ, ການມີເພດສຳພັນແບບມີຫລາຍຄູ່ນອນ ລວມທັງການຂົ່ມຂືນທຳຊຳເລົາ ໃນຊີວິດການສ້າງຄອບຄົວ ອາດເຮັດໃຫ້ເດັກນ້ອຍຍິງ ແລະ ແມ່ຍິງຕ້ອງຢູ່ໃນສະພາວະສ່ຽງຕໍ່ການຕິດເຊື້ອເອດໄອວີ/ເອດ ແລະ ໂລກຕິດຕໍ່ທາງເພດສຳພັນອື່ນໆ ແມ່ຍິງໃນການຄ້າປະເວນີເປັນອີກກຸ່ມໜຶ່ງທີ່ສ່ຽງຕໍ່ການຕິດໂລກຫລາຍເປັນພິເສດ ລັດພາຄີຄວນຮັບປະກັນສິດທິໃນການເຂົ້າເຖິງຂໍ້ມູນການສຶກສາ ແລະການບໍລິການສຳຫລັບແມ່ຍິງ ແລະ ເດັກນ້ອຍແມ່ຍິງທັງໝົດ ໂດຍປາສະຈາກອະຄະຕິ ແລະການບໍລິການ ແລະ ການຈຳແນກ ລວມເຖິງຜູ້ທີ່ຖືກຄ້າ ແລະ ລວມທັງຜູ້ທີ່ບໍ່ໄດ້ມີສິດທິອາໄສຢູ່ໃນປະເທດຢ່າງຖືກຕ້ອງຕາມກົດໝາຍ ແລະ ໂດຍສະເພາະແມ່ນລັດພາຄີຄວນຮັບປະກັນສິດທິຂອງໄວລຸ່ນຊາຍ ແລະ ຍິງທີ່ຈະໄດ້ຮັບການສຶກສາເລື່ອງເພດ ແລະ ອະນາໄມຈະເລີນພັນ ໂດຍບຸກຄະລາກອນທີ່ຜ່ານການຝຶກອົບຮົມຢ່າງເໝາະສົມໃນໂຄງການທີ່ໄດ້ຮັບການອອກແບບເປັນພິເສດຊະນິດທີ່ເຄົາລົບສິດທິຄວາມເປັນສ່ວນຕົວ ແລະຄວາມລັບຂອງໄວລຸ່ນ ;

19. ບົດລາຍງານຂອງລັດພາຄີຄວນຊີ້ໃຫ້ເຫັນເຖິງການທົດສອບ ເພື່ອປະເມີນວ່າແມ່ຍິງມີໂອກາດເຂົ້າເຖິງການຮັກສາສຸຂະພາບບົນພື້ນຖານຄວາມສະເໝີພາບລະຫວ່າງແມ່ຍິງ ແລະຜູ້ຊາຍຫລືບໍ່ ທັງນີ້ເພື່ອສະແດງໃຫ້ເຫັນເຖິງການປະຕິບັດ ໂດຍສອດຄ່ອງກັບມາດຕາ 12 ໃນການທົດສອບດັ່ງກ່າວລັດພາຄີຄວນນຶກເຖິງບົດບັນຍັດຕາມມາດຕາ 1 ຂອງສົນທິສັນຍາ ດັ່ງນັ້ນບົດລາຍງານ ຈຶ່ງຄວນ

ສະແດງຄວາມເຫັນຕໍ່ຜົນກະທົບຈາກນະໂຍບາຍ , ຂະບວນການ, ຂັ້ນຕອນຂອງກົດໝາຍ ແລະ ວິທີການປະຕິບັດວຽກດ້ານສຸຂະພາບທີ່ມີຜົນຕໍ່ແມ່ຍິງໂດຍປຽບທຽບກັບຜູ້ຊາຍໄວ້ອີກດ້ວຍ .

20. ແມ່ຍິງມີສິດທີ່ຈະໄດ້ຮັບຮູ້ຂໍ້ມູນຂ່າວສານ ຈາກບຸກຄະລາກອນທີ່ໄດ້ຮັບການຝຶກຝົນ, ອົບຣົມມາແລ້ວເປັນຢ່າງດີ ກ່ຽວກັບທາງເລືອກ ໃນການຕົກລົງໃຫ້ມີການຮັກສາ ຫລື ວິໄຈຕະຫລອດຈົນເຖິງຜົນໄດ້ຮັບ ແລະ ຜົນເສຍຫາຍທີ່ອາດຈະເກີດຂຶ້ນຈາກຂະບວນການ, ຂັ້ນຕອນທີ່ໄດ້ຮັບການນໍາສະເໜີ ແລະທາງເລືອກອື່ນໆເທົ່າທີ່ມີຢູ່.

21. ລັດພາຄີຄວນລາຍງານກ່ຽວກັບມາດຕະການທີ່ໄດ້ປະຕິບັດການ ເພື່ອລົບລ້າງອຸປະສັກທີ່ແມ່ຍິງຕ້ອງປະເຊີນໜ້າ ໃນການເຂົ້າເຖິງການບໍລິການເບິ່ງແຍງສຸຂະພາບ ແລະ ມາດຕະການຕ່າງໆທີ່ລັດໄດ້ປະຕິການ ເພື່ອຮັບປະກັນວ່າແມ່ຍິງຈະເຂົ້າເຖິງການບໍລິການດັ່ງກ່າວຢ່າງທັນການ ແລະດ້ວຍຄ່າໃຊ້ຈ່າຍທີ່ເໝາະສົມ, ອຸປະສັກຕ່າງໆ ລວມເຖິງຂໍ້ກໍານົດ ຫລື ເງື່ອນໄຂທີ່ຂັດຂວາງການທີ່ແມ່ຍິງຈະເຂົ້າເຖິງການບໍລິການເຊັ່ນ : ຄ່າໃຊ້ຈ່າຍສໍາຫລັບການບໍລິການສຸຂະພາບທີ່ສູງຂຶ້ນ, ຂໍ້ກໍານົດທີ່ໃຫ້ແມ່ຍິງຕ້ອງໄດ້ຮັບອະນຸຍາດຈາກຄູ່ແຕ່ງດອງ (ຜົວ ຫລືເມຍ) , ຜູ້ປົກຄອງ ຫລື ພະນັກງານທີ່ເຮັດວຽກຢູ່ໃນໂຮງໝໍກ່ອນ ລະຍະທາງທີ່ຢູ່ຫ່າງໄກຈາກສະຖານທີ່ບໍລິການ ແລະ ການຂາດການຂົນສົ່ງປະຊາຊົນທີ່ສະດວກ ແລະ ລາຄາບໍ່ແພງ.

22. ລັດພາຄີຄວນລາຍງານເຖິງມາດຕະການ ທີ່ໄດ້ປະຕິບັດການແລ້ວ ເພື່ອຮັບປະກັນການເຂົ້າເຖິງການບໍລິການດ້ານສຸຂະພາບທີ່ມີຄຸນນະພາບ ຕົວຢ່າງເຊັ່ນ : ການໃຫ້ການບໍລິການເປັນທີ່ຍອມຮັບໄດ້ສໍາຫລັບແມ່ຍິງ ການບໍລິການທີ່ເປັນທີ່ຍອມຮັບໄດ້ຄືການບໍລິການ ຊຶ່ງຮັບປະກັນວ່າແມ່ຍິງຈະຕັດສິນໃຈຍອມຮັບໂດຍການຮັບຮູ້ຂໍ້ມູນຄົບຖ້ວນ ການບໍລິການຊຶ່ງເຄົາລົບສັກສີ ໂດຍຮັບປະກັນວ່າຈະຮັກສາຂໍ້ມູນສ່ວນຕົວ ແລະມີຄວາມລະອຽດອ່ອນຕໍ່ຄວາມຕ້ອງການ ແລະ ການເບິ່ງຂອງແມ່ຍິງລັດພາຄີບໍ່ຄວນອະນຸຍາດໃຫ້ມີການບັງຄັບໃນຮູບແບບຕ່າງໆເຊັ່ນ ການເຮັດໝັນໂດຍບໍ່ໄດ້ຮັບການຍິນຍອມຈາກເຈົ້າໂຕ , ການບັງຄັບການກວດຫາໂລກຕິດຕໍ່ທາງເພດສໍາພັນ ຫລື ການບັງຄັບກວດກາການຖືພາມານ ເພື່ອເປັນເງື່ອນໄຂສໍາລັບການຈ້າງງານ ຊຶ່ງເປັນການລະເມີດສິດທິຂອງແມ່ຍິງທີ່ຈະໄດ້ຮັບຮູ້ຂໍ້ມູນກ່ອນການຕັດສິນໃຈ ແລະລະເມີດຕໍ່ສັກສີ .

23. ລັດພາຄີຄວນຈະກໍານົດໄວ້ໃນບົດລາຍງານເຖິງມາດຕະການຊຶ່ງລັດໄດ້ປະຕິບັດການ ເພື່ອຮັບປະກັນການເຂົ້າເຖິງການບໍລິການໃນຮູບແບບຕ່າງໆ ໂດຍສະເພາະທີ່ກ່ຽວກັບການວາງແຜນຄອບຄົວແລະສຸຂະພາບທາງເພດ ແລະ ການອະນາໄມຈະເລີນພັນ ໂດຍລວມຢ່າງທັນການລັດຄວນໃຫ້ຄວາມສົນໃຈເປັນພິເສດຕໍ່ກັບປະເດັນ ການສຶກສາດ້ານສຸຂະພາບຂອງໄວລຸ່ນ ລວມທັງການໃຫ້ຂໍ້ມູນ ແລະຄໍາປຶກສາກ່ຽວກັບການວາງແຜນຄອບຄົວ.

24. ຄະນະກຳມະການມີຄວາມເປັນຫ່ວງເຖິງສະພາບການ ການໃຫ້ບໍລິການດ້ານສຸຂະພາບແກ່ແມ່ຍິງທີ່ສູງອາຍຸ ບໍ່ພຽງສະເພາະແຕ່ແມ່ຍິງມັກມີອາຍຸຍືນຍາວກວ່າຜູ້ຊາຍ ແລະ ມີແນວໂນ້ມທີ່ຈະປະສົບກັບບັນຫາຄວາມພິການ ແລະ ເປັນໂລກຊຳເຮື້ອທີ່ເກີດຈາກການເຊື່ອມສະພາບຂອງອະໄວຍະວະຕ່າງໆເຊັ່ນ : ໂລກກະດູກພ່ອຍ ( Osteoporosis) ແລະ ໂລກສະໝອງເຊື່ອມ ( Dementia ) ຫລາຍກວ່າຜູ້ຊາຍເທົ່ານັ້ນ ແຕ່ຍັງເປັນເພາະວ່າແມ່ຍິງຕ້ອງຮັບໜ້າທີ່ເບິ່ງແຍງຄູ່ຄອງ (ຜົວ) ທີ່ສູງອາຍຸຂອງຕົນເອງອີກດ້ວຍ ດັ່ງນັ້ນລັດພາຄີຈຶ່ງຄວນດຳເນີນມາດຕະການທີ່ເໝາະສົມ ເພື່ອຮັບປະກັນການເຂົ້າເຖິງການບໍລິການດ້ານສຸຂະພາບຂອງແມ່ຍິງທີ່ສູງອາຍຸ ຊຶ່ງເປັນການບໍລິການທີ່ເໜັ້ນໜັກເຖິງເລື່ອງຄວາມເຊື່ອມສະມັດຖະພາບ ແລະ ຄວາມພິການອັນເນື່ອງມາຈາກຄວາມເຖົ້າແກ່.

25. ແມ່ຍິງຜູ້ພິການທຸກໄວມັກຈະພົບກັບຄວາມຍາກລຳບາກທາງກາຍຍະພາບ ໃນການເຂົ້າເຖິງການບໍລິການດ້ານສຸຂະພາບ ໂດຍທົ່ວໄປແມ່ຍິງມີຄວາມພິການທາຈິດມັກຕ້ອງພົບພໍ້ກັບບັນຫາດັ່ງກ່າວຫລາຍເປັນພິເສດ ຂະນະດຽວກັນສັງຄົມໂດຍທົ່ວໄປຍັງມີຄວາມເຂົ້າໃຈ ທີ່ຈຳກັດກ່ຽວກັບຄວາມສ່ຽງດ້ານສຸຂະພາບຈິດຫລາຍປະການ ທີ່ມີຜົນກະທົບຕໍ່ແມ່ຍິງ ຫລາຍກວ່າອັນເປັນຜົນມາຈາກການຈຳແນກລະຫວ່າງເພດ, ຄວາມຮຸນແຮງ, ຄວາມທຸກຍາກ, ການສູ້ຮົບ, ການຖືກຍົກຍ້າຍຈາກຖິ່ນຖານເດີມ ແລະ ການປັ່ນຮອນທາງສັງຄົມໃນຮູບແບບອື່ນໆ ລັດພາຄີຄວນຈະປະຕິບັດການຕາມມາດຕະການທີ່ເໝາະສົມ ເພື່ອຮັບປະກັນວ່າການບໍການດ້ານສຸຂະພາບ ຈະຕອບສະໜອງຕໍ່ຄວາມຕ້ອງການຂອງແມ່ຍິງທີ່ມີຄວາມພິການ ພ້ອມທັງເຄົາລົບຕໍ່ສິດທິມະນຸດ ແລະ ສັກສີຂອງພວກເຂົາ.

## ມາດຕາ 12 (2)

26. ບົດລາຍງານຄວນຈະກຳນົດເຖິງມາດຕະການທີ່ລັດພາຄີໄດ້ປະຕິບັດການ ເພື່ອຮັບປະກັນວ່າແມ່ຍິງຈະໄດ້ຮັບການບໍລິການທີ່ເໝາະສົມທີ່ກ່ຽວກັບການຖືພາມານ, ການເກີດລູກ ແລະ ຍະເວລາຫລັງຈາກເກີດລູກໃໝ່ ລວມທັງຄວນສະແດງຂໍ້ມູນທີ່ຊີ້ໃຫ້ເຫັນວ່າມາດຕະການເຫລົ່ານີ້ ໄດ້ຊ່ວຍລົດອັດຕາການເສຍຊີວິດ ແລະ ການເຈັບປ່ວຍຂອງແມ່ໃນປະເທດຂອງຕົນໃນພາບລວມ ແລະໃນກຸ່ມຄົນພູມມີພາກ ແລະຊຸມຊົນຕ່າງໆ ທີ່ມີຄວາມສ່ຽງເປັນພິເສດເປັນການສະເພາະອີກດ້ວຍ.

27. ລັດພາຄີຄວນລະບຸໃນບົດລາຍງານວ່າລັດ ໄດ້ໃຫ້ການບໍລິການທີ່ຈຳເປັນໂດຍບໍ່ໄດ້ຄິດໄລ່ຄ່າໃຊ້ຈ່າຍ ເພື່ອຮັບປະກັນການຖືພາມານ, ການເກີດລູກ ແລະສະພາວະຫລັງຈາກການເກີດລູກ ໃໝ່ທີ່ມີຄວາມປອດໄພ ແມ່ຍິງຈຳນວນຫລາຍມີຄວາມສ່ຽງຕໍ່ການເສັຍຊີວິດ ຫລື ພິການຈາກເຫດການທີ່ກ່ຽວກັບການຖືພາມານ ເນື່ອງຈາກວ່າພວກເຂົາບໍ່ມີເງິນຄ່າໃຊ້ຈ່າຍສຳລັບການໄດ້ຮັບ ຫລື ການເຂົ້າເຖິງການບໍລິການທີ່ຈຳເປັນ ຊຶ່ງລວມເຖິງການບໍລິການກ່ຽວກັບການຖືພາມານ, ການເກີດລູກແລະທັງການເກີດລູກ ຄະນະກຳມະການຕັ້ງຂໍ້ສັງເກດວ່າເປັນໜ້າທີ່ຂອງລັດພາຄີ ທີ່ຈະຮັບປະກັນສິດທິຂອງແມ່ຍິງ ທີ່ຈະມີພາວະຄວາມເປັນແມ່ທີ່ປອດໄພ ແລະ ໄດ້ຮັບການບໍລິການສຸກເສີນໃນ

ການເກີດລູກ ແລະ ລັດຄວນຈັດໃຫ້ມີການບໍລິການເຫລົ່ານີ້ໃຫ້ຫລາຍທີ່ສຸດເທົ່າທີ່ຊັບພະຍາກອນຈະເອື້ອອຳນວຍ.

## ມາດຕາອື່ນໆ ທີ່ກ່ຽວຂ້ອງໃນສົນທິສັນຍາ

28. ໃນການລາຍງານເຖິງມາດຕະການຕາມມາດຕາ 12 ລັດພາຄີຄວນຕ້ອງຄຳນຶງເຖິງຄວາມຕໍ່ເນື່ອງກັນລະຫວ່າງມາດຕະການຕ່າງໆ ໃນສົນທິສັນຍາຊຶ່ງມີຜົນຕໍ່ສຸຂະພາບຂອງແມ່ຍິງ ມາດຕະການຕ່າງໆເຫລົ່ານີ້ ລວມເຖິງມາດຕາ 5 (ຂ) ທີ່ກຳນົດໃຫ້ລັດພາຄີ ຮັບປະກັນວ່າການສຶກສາເລື່ອງຄອບຄົວຈະຕ້ອງລວມເຖິງຄວາມເຂົ້າໃຈທີ່ເໝາະສົມກ່ຽວກັບຄວາມເປັນແມ່ ໃນຖານະທີ່ເປັນບົດບາດທາງສັງຄົມມາດຕາ 10 ຊຶ່ງກຳນົດໃຫ້ລັດພາຄີ ຮັບປະກັນການເຂົ້າເຖິງການສຶກສາ ໂດຍສະເໝີພາບ ຊຶ່ງຈະເຮັດໃຫ້ແມ່ຍິງເຂົ້າເຖິງການຮັກສາສຸຂະພາບໄດ້ດີຍິ່ງຂຶ້ນ ຫລຸດອັດຕາການອອກຈາກໂຮງຮຽນກາງເທີນຂອງແມ່ຍິງ ຊຶ່ງມັກເປັນຜົນມາຈາກການຖືພາມານກ່ອນໄວອັນຄວນມາດຕາ 10 (ຊ) ຊຶ່ງກຳນົດໃຫ້ລັດພາຄີໃຫ້ຂໍ້ມູນດ້ານການສຶກສາເປັນການສະເພາະໃຫ້ແກ່ແມ່ຍິງ ແລະເດັກນ້ອຍແມ່ຍິງ ເພື່ອຮັບປະກັນຄວາມເປັນຢູ່ທີ່ດີຂອງຄອບຄົວ ລວມເຖິງຂໍ້ມູນ ແລະຄຳແນະນຳທີ່ກ່ຽວກັບການວາງແຜນຄອບຄົວ ມາດຕາ 11 ຊຶ່ງມີສ່ວນໜຶ່ງທີ່ກ່າວເຖິງການຄຸ້ມຄອງສຸຂະພາບແລະຄວາມປອດໄພໃນການເຮັດວຽກຂອງແມ່ຍິງ ລວມທັງການລະວັງປ້ອງກັນດ້ານ ພາວະອະນາໄມຈະເລີນພັນ ການຄຸ້ມຄອງເປັນພເສດຈາກວຽກປະເພດທີ່ເປັນອັນຕະລາຍໃນລະຫວ່າງການຖືພາມານ ແລະ ການໃຫ້ມີການລາພັກໃນການເກີດລູກ ໂດຍໄດ້ຮັບຄ່າຈ້າງ ມາດຕາ 14 ວັກ 2 (ຂ) ຊຶ່ງກຳນົດໃຫ້ລັດພາຄີຮັບປະກັນການເຂົ້າເຖິງ ສະຫວັດດີການດ້ານການເບິ່ງແຍງສຸຂະພາບແກ່ແມ່ຍິງໃນຊົນນະບົດຢ່າງພຽງພໍ ລວມທັງການໃຫ້ຂໍ້ມູນ, ຄຳປຶກສາ ແລະ ການບໍລິການດ້ານການວາງແຜນຄອບຄົວ ແລະ ຂໍ້ (ຊ) ຊຶ່ງກຳນົດໃຫ້ລັດພາຄີຕ້ອງດຳເນີນມາດຕະການທີ່ເໝາະສົມທັງໝົດ ເພື່ອຮັບປະກັນສະພາບຄວາມເປັນຢູ່ທີ່ພຽງພໍ ໂດຍສະເພາະເລື່ອງທີ່ຢູ່ອາໄສ, ການຮັກສາອະນາໄມ, ໄຟຟ້າ ແລະ ນ້ຳປະປາ, ການຂົນສົ່ງ ແລະຄົມມະນາຄົມ ຊຶ່ງທັງໝົດນີ້ລ້ວນແຕ່ມີຄວາມຈຳເປັນຕໍ່ການປ້ອງກັນໂລກ ແລະການສົ່ງເສີມການຮັກສາສຸຂະພາບທີ່ດີ ແລະມາດຕາ 16 ວັກ 1 (ຈ) ຊຶ່ງກຳໜົດໃຫ້ລັດພາຄີຮັບປະກັນວ່າແມ່ຍິງຈະມີສິດທິເຊັ່ນດຽວກັນກັບຜູ້ຊາຍ ໃນການຕັດສິນໃຈຢ່າງອິດສະຫຼະ ແລະມີຄວາມຮັບຜິດຊອບໃນເລື່ອງຈຳນວນ ແລະລະຍະເວລາຂອງການມີລູກ ແລະເຂົ້າເຖິງຂໍ້ມູນການສຶກສາ ແລະ ວິທີການທີ່ຈະເຮັດໃຫ້ພວກເຂົາສາມາດ ນຳໃຊ້ສິດທິເຫລົ່ານີ້ໄດ້ ມາດຕາ 16 ວັກ 2 ຍັງຫ້າມການຮັບໝັ້ນໝາຍ ແລະການແຕ່ງດອງຂອງເດັກນ້ອຍຊຶ່ງເປັນປັດໄຈສຳຄັນທີ່ຈະຊ່ວຍປ້ອງກັນອັນຕະລາຍທາງຮ່າງກາຍ ແລະ ອາລົມທີ່ຈະເກີດຈາກການມີລູກໃນໄວເດັກນ້ອຍ.

## ຂໍ້ສະເໜີແນະສຳລັບການດຳເນີນການຂອງລັດຖະບານ

29. ລັດພາຄີຄວນດຳເນີນກົນລະຍຸດລະດັບຊາດທີ່ຮອບດ້ານ ເພື່ອສົ່ງເສີມສຸຂະພາບຂອງແມ່ຍິງ ຕະຫລອດຊ່ວງອາຍຸໄຂ ຊຶ່ງລວມເຖິງການປະຕິບັດການທີ່ເໜັ້ນໜັກເຖິງການປ້ອງກັນ ແລະ ຮັກສາໂລກໄພ ແລະພາວະຕ່າງໆ ທີ່ມີຜົນກະທົບຕໍ່ແມ່ຍິງ ຕະຫລອດຈົນເຖິງການຈັດການກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຮັບປະກັນວ່າແມ່ຍິງທຸກຄົນຈະເຂົ້າເຖິງການຮັກສາສຸຂະພາບທຸກດ້ານ ທີ່ມີຄຸນນະພາບສູງ ໃນລາຄາທີ່ເໝາະສົມ ໂດຍທົ່ວໜ້າລວມເຖິງການບໍລິການດ້ານສຸຂະພາບທາງເພດ ແລະ ການຈະເລີນພັນດ້ວຍ ;

30. ລັດພາຄີຄວນຈັດສັນຊັບພະຍາກອນດ້ານງົບປະມານ, ບຸກຄະລາກອນ ແລະ ການບໍລິຫານງານຢ່າງພຽງພໍ ເພື່ອຮັບປະກັນວ່າປະເດັນສຸຂະພາບຂອງແມ່ຍິງ ຈະໄດ້ຮັບສ່ວນແບ່ງຈາກງົບປະມານດ້ານສຸຂະພາບທັງໝົດຢ່າງເທົ່າທຽມ ກັບງົບປະມານສຳລັບສຸຂະພາບຂອງຜູ້ຊາຍ ທັງນີ້ໂດຍຄຳນຶງເຖິງຄວາມຕ້ອງການດ້ານສຸຂະພາບທີ່ແຕກຕ່າງກັນ.

31. ໂດຍສະເພາະຢ່າງຍິ່ງ ລັດພາຄີຍັງຄວນ

(ກ) ເຮັດໃຫ້ມຸມມອງເລື່ອງບົດບາດຍິງຊາຍ ເປັນຫົວໃຈຫລັກຂອງນະໂຍບາຍ ແລະໂຄງການທັງໝົດທີ່ມີຜົນຕໍ່ສຸຂະພາບຂອງແມ່ຍິງ ແລະຄວນໃຫ້ແມ່ຍິງມີສ່ວນຮ່ວມໃນການວາງແຜນການປະຕິບັດງານ ແລະ ການຕິດຕາມການກວດສອບນະໂຍບາຍ ແລະໂຄງການຕ່າງໆ ເຫລົ່ານັ້ນລວມທັງຮ່ວມໃນການໃຫ້ການບໍລິການດ້ານສຸຂະພາບແກ່ແມ່ຍິງອີກດ້ວຍ ;

(ຂ) ຮັບປະກັນວ່າຈະລົບລ້າອຸປະສັກທັງໝົດ ທີ່ຂັດຂວາງການທີ່ແມ່ຍິງຈະເຂົ້າເຖິງການບໍລິການດ້ານສຸຂະພາບ,ການສຶກສາ ແລະ ຂໍ້ມູນຊຶ່ງລວມເຖິງດ້ານເພດ ແລະ ການອະນາໄມຈະເລີນພັນ ແລະໂດຍສະເພະຢ່າງຍິ່ງຄວນຈະຈັດສັນຊັບພະຍາກອນ ໃຫ້ກັບໂຄງການທີ່ເໜັ້ນໜັກໃສ່ໄວລຸ່ນເພື່ອປ້ອງກັນ ແລະຮັກສາໂລກຕິດຕໍ່ທາງເພດສະພັນ ລວມທັງເອດໄອວີ/ເອດ.

(ຄ) ໃຫ້ຄວາມສຳຄັນກັບການປ້ອງກັນການຖືພາມານທີ່ບໍ່ໄດ້ຕ້ອງການ ຜ່ານການວາງແຜນຄອບຄົວ ແລະ ເພດສຶກສາ ແລະ ຫລຸດອັດຕາການເສຍຊີວິດຂອງແມ່ຜ່ານການບໍລິການ ເພື່ອການຖືພາມານ ແລະ ການເກີດລູກທີ່ປອດໄພ ແລະໃຫ້ການຊ່ວຍເຫລືອໃນການເບິ່ງແຍງລ້ຽງດູລູກ ແລະຫາກເປັນໄປໄດ້ຄວນກໍຄວນ ໃຫ້ມີການແກ້ໄຂກົດໝາຍທີ່ເອົາຄວາມຜິດທາງອາຍາກັບການຫລຸລູກ ເພື່ອຖອດຖອນບົດບັນຍັດທີ່ແນໃສ່ການລົງໂທດແມ່ຍິງຜູ້ຮັບການຫລູກ ;

(ງ) ຕິດຕາມກວດສອບການໃຫ້ການບໍລິການດ້ານສຸຂະພາບແກ່ແມ່ຍິງ ໂດຍອົງການຈັດຕັ້ງຂອງລັດ, ອົງການພັດທະນາເອກະຊົນ ແລະ ໜ່ວຍງານຂອງເອກະຊົນ ເພື່ອຮັບປະກັນການເຂົ້າເຖິງການບໍລິການທີ່ມີຄວາມສະເໝີພາບ ແລະການເບິ່ງແຍງຮັກສາທີ່ມີຄຸນນະພາ ;

(ຈ) ກຳໜົດການໃຫ້ການບໍລິການດ້ານສຸຂະພາບທັງໝົດ ຕ້ອງສອດຄ່ອງກັບສິດທິມະນຸດຂອງແມ່ຍິງ ລວມທັງສິດທີ່ທີ່ຈະຕັດສິນໃຈດ້ວຍຕົນເອງ ມີຄວາມເປັນສ່ວນໂຕ, ການປົກປິດຂໍ້ມູນທີ່ເປັນຄວາມລັບ ແລະ ການຕົກລົງເຫັນດີ ແລະການຕັດສິນໃຈເລືອກໂດຍມີຂໍ້ມູນປະກອບ ;

(ສ) ຮັບປະກັນວ່າຫລັກສູດການຝຶກອບຮົມຜູ້ທີ່ເຮັດວຽກດ້ານສຸຂະພາບ ຈະມີວິຊາທີ່ກ່ຽວກັບສຸຂະພາບ ແລະສິດທິມະນຸດຂອງແມ່ຍິງ ໂດຍກຳໜົດເປັນວິຊາບັງຄັບທີ່ມີເນື້ອໃນຮອບດ້ານ ແລະມີຄວາມລະອຽດອ່ອນຕໍ່ປະເດັນດ້ານບົດບາດຍິງຊາຍ ໂດຍສະເພາະທີ່ກ່ຽວກັບຄວາມຮຸນແຮງ ບົນພື້ນຖານຂອງບົດບາດຍິງຊາຍ.

***********************